ເພື່ອອະນາຄົດທີ່ສົດໃສ

ແລະ ກ້າວໄກຂອງລູກຫຼານ



ແທນຄຸນແຜ່ນດິນ ທີ່ໃຫ້ກຳເນີດ

ຄຳເມິງ ວໍລະຈິດ

12. 10. 2010



ຄະນະຜູ້ຈັດພິມປຶ້ມ ອະນຸສອນເພື່ອການສຶກສາ
.....
ຜູ້ຮວບຮວມ ຂຽນ ແລະບັນນາທິການບົດ:
ຄຳອອນ ເພັດດາວເຮືອງ
ຫົງເຫີນ ຂຸນພິທັກ
ທອງເລື່ອນ ພິມມະສານ

ຕີພິມ:
ດວງມາລາ ຣາຊະວົງໄຊ
ສົມສະໝຸກ ຣັດຕະນະຣາສີ

ອອກແບບ-ຈັດໜ້າ:
ນກ ນິວັດ

ພິມເພື່ອ:
ແຈກຢາຍໃນໂອກາດມອບ-ຮັບອາຄານຮຽນ
ຊັ້ນມັດທະຍົມສົມບູນອິນແປງ ເຂດຄັງວຽງ ເມືອງແປກ
ແຂວງຊຽງຂວາງ
ດ້ວຍທຶນອຸປະຖຳຂອງ ປ້າຄຳເມິງ ວໍລະຈິດ
ພ້ອມດ້ວຍຄອບຄົວ ແລະ ຍາດພີ່ນ້ອງ

ພິມທີ່:
ໂຮງພິມ ມັນທາຕຸລາດ ນະຄອນຫຼວງວຽງຈັນ

ສາລະບັນ ໜ້າ

- ຄຳເຫັນຂອງປ້າຄຳເມິງ ວໍລະຈິດ.....5
- ຄວາມເປັນມາຂອງໂຮງຮຽນມັດທະຍົມສົມບູນອິນແປງ.....10
- ແດ່ສັດທາ ຂອງແມ່ຍິງຜູ່ປະເສີດ.....12
- ຄຳຊຶ້ນຊອບ.....14
- ຂໍອະນຸໂມທະນາ ໃນກິດການກຸສົນ.....17

- ຄວາມຊົ່ງຈຳຂອງບັນດາ ອະດີດຄູອາຈານ.....18-25
- ຄວາມພາກພູມໃຈຂອງອະດີດນັກຮຽນ.....28-31

- ລາຍຊື່ ແລະຮູບຜູ້ສົມທົບທຶນພັດທະນາໂຮງຮຽນ.....32-34
- ຮູບທີ່ລະນຶກ ລຸງບຸນຍັ່ງ ປ້າຄຳເມິງ ພ້ອມຄະນະ.....35-36

- ຄວາມຊົ່ງຈຳຕໍ່ໂຮງຮຽນ ອິນແປງຂອງອະດີດນັກຮຽນ ແລະ ຄວາມພາກພູມໃຈຂອງຜູ້ປະກອບທຶນພັດທະນາ..... 40-55

- ຄວາມພາກພູມໃຈ ແລະສັນລະເສີນຂອງຫົວໜ້າພະແນກສຶກສາ ແຂວງ, ຄູອາ-ຈານ ແລະພະນັກງານການຈັດຕັ້ງທ້ອງຖິ່ນ...56-68

- ງາມຜູ້ຄົນ ແລະທຳມະຊາດ ເຂດຄັ່ງວຽງ-ຊຽງຂວາງ.....70-79
- ປະຫວັດຫຍໍ້ ການເຄື່ອນໄຫວ ຂອງປ້າຄຳເມິງ.....80
- ຄວາມເຫັນ ຂອງຫົວໜ້າຄະນະຈັດພິມປຶ້ມອະນຸສອນ..... 86



ຄຳເຫັນຂອງ
ປ້າຄຳເມິງ ວໍລະຈິດ
ຜູ້ເຕົ້າໂຮມທຶນ ພັດທະນາໂຮງຮຽນ
ມັດທະຍົມສົມບູນ ອິນແປງ (ເຂດຄັງວຽງ)
.....

ພໍ່ ແມ່ ພີ່ນ້ອງ ລູກຫຼານ ການຈັດຕັ້ງ ຄູອາຈານ ນັກຮຽນ ທີ່ຮັກແພງ
ດ້ວຍຄວາມກະຕັນຍູ ຮູ້ບຸນຄຸນ ຢ່າງສຸດຊຶ້ງ ຕໍ່ແຜ່ນດິນຖິ່ນກຳເນີດ
ດ້ວຍຄວາມເຄົາລົບຮັກຢ່າງສູງສົ່ງ ລົ້ນເກົ້າເໜືອຫົວ ຕໍ່ຜູ້ບັງເກີດເກົ້າ
ດ້ວຍຄວາມຫ່ວງໃຍ ຕໍ່ອະນາຄົດອັນສົດໃສ ກວ້າງໄກຂອງລູກຫຼານ ແລະຮຸ່ນ
ຄົນທີ່ຈະຮັບຜິດຊອບຕໍ່ຊະຕາກຳຂອງບ້ານເກີດເມືອງນອນ ແລະປະເທດຊາດ

ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະພາກພູມໃຈ ເປັນຢ່າງຍິ່ງທີ່ໄດ້ເກີດເປັນລູກຫຼານຂອງປະຊາຊົນ ຊາວຂຽງຂວາງວິຣະຊົນ ແລະບຸນຫຼາຍສາຍຍາວ ຈຶ່ງມີຊີວິດລອດຈາກຄວັນໝີ ຄວັນປືນ ແລະຫ່າລະເບີດໃນປາງສົງຄາມ ຊຶ່ງຍາມດຸເດືອດຂ້ຽວຂາດທີ່ສຸດແມ່ນບັ້ນຮົບ ໂອເດແອນ (ODL) ບັ້ນຮົບກູ້ກຽດ ບັ້ນຮົບທະນົງກຽດ ແລະບັ້ນຮົບ ບໍ່ຕ່າວກັບຄືນ ທີ່ພວກສັດຕູຜູ້ຮຸກຮານໄດ້ກໍ່ຂຶ້ນ

ມາເຖິງມື້ນີ້ ຂ້າພະເຈົ້າກໍ ໄດ້ມີໂອກາດກັບຕ່າວຄືນມາ ພ້ອມທັງເປັນຜູ້ເຕົ້າໂຮມທຶນຈາກຄອບຄົວ ລູກຫຼານຍາດພີ່ນ້ອງ ມາຊ່ວຍສ້າງອາຄານໂຮງຮຽນມັດທະຍົມສົມບູນຂຶ້ນໃນບ້ານເກີດເມືອງນອນ ກໍແມ່ນໂຮງຮຽນອິນແປງແຫ່ງນີ້ ບ່ອນທີ່ຂ້າພະເຈົ້າໄດ້ເຂົ້າຮັບເອົາການສຶກສາຄັ້ງແຮກໃນຊີວິດ.

ໃຜໆກໍຮູ້ດີວ່າ ໃນປາງສົງຄາມ ຜືນແຜ່ນດິນພູພຽງຊຽງຂວາງແຫ່ງນີ້ ຖືກທຳລາຍຢ່າງໜັກໜ່ວງຈາກໂຈມອາກາດຜູ້ຮຸກຮານຂຸມລະເບີດຂຸມຫຼົບໄພຮຽງຢາຍກັນໄປປານສັບຕາຜ້າ ຫຼືວ່າສັກລຸ້ງເຂົ້າໄຮ່ ຜູ້ຄົນລົ້ມຫາຍຕາຍຈາກບໍ່ຈັກວ່າເທົ່າໃດ ບັນດາຜູ້ລອດຊີວິດ ກໍລ້ວນຈຳໃຈພັດພາກຈາກບ້ານເກີດເມືອງນອນ.

ການທີ່ຂ້າພະເຈົ້າມີຊີວິດລອດມາໄດ້ ກໍຄົງຍ້ອນບຸນຄຸນບິດາ ມານດາ ຄູບາອາຈານ ບັນພະບຸລຸດ ແລະສິ່ງສັກສິດທັ້ງຫຼາຍ ປົກປັກຄຸ້ມຄອງ, ດ້ານໜຶ່ງກໍແມ່ນຍ້ອນສິລະປະຍຸດ ຍຸດທະວິທີສູ້ຮົບ ຫຼົບຫຼີກຢ່າງສະຫຼາດຄ່ອງແຄ້ວ...ຍ້ອນມີການຊີ້ນຳ ນຳພາ ມີການບັນຊາຈາກຄະນະພັກ ຄະນະບັນຊາແຕ່ລະຄັ້ງ ແຕ່ລະບັ້ນຮົບຈຶ່ງຕະຫຼອດປອດໄພມາເຖິງປັດຈຸບັນ



ເມື່ອຫວນກັບຄືນມາຢາມບ້ານເກີດເທື່ອໃດ, ພາບອະດີດທີ່ຝັງຈິດ ຝັງໃຈຂອງ ຂ້າພະເຈົ້າຫຼາຍທີ່ສຸດໃນສະໄໝປີ1958-59 ກໍແມ່ນການດຳລົງຊີວິດ ອັນອົບອຸ່ນກັບ ຄອບຄົວຢູ່ທ່າມກາງຄວາມຮັກແພງ ຂອງພໍ່ແມ່ ເອື້ອຍນ້ອງ ແລະຊາວບ້ານ, ໄດ້ແລ່ນຫຼິ້ນ ຢອກໄຍ ກັບໝູ່ເພື່ອນ ແລະໄດ້ເລີ່ມຕົ້ນເຂົ້າຮຽນໜັງສືໃນຫ້ອງທີ 5-4-3 (ຫ້ອງປ.1, 2, 3 ໃນປັດຈຸບັນ) ທີ່ໂຮງຮຽນອິນແປງແຫ່ງນີ້, ໂດຍມີນາຍຄູປ່ອງ, ນາຍຄູແກ້ວ ມາລິຍະ ແລະນ້າບ່າວຄູ ສີທົນ ທິບດາລາ ເປັນຜູ້ສິດສອນ ຈາກນັ້ນກໍຍ້າຍໄປຮຽນຫ້ອງທີສອງ ນ້ອຍ (ປ.4) ຢູ່ບ້ານຄາຍ ທີ່ຫ່າງຈາກໂຮງຮຽນນີ້ໄປປະມານ 3-4 ກິໂລແມັດ ຊຶ່ງເວລາ ນັ້ນແມ່ນ ທ່ານ ຄູຄຳພວງ ດາລາແສນ ເປັນຄູສອນ (ປັດຈຸບັນເປັນພະນັກງານບຳນານ ບ້ານເຮືອນ ເພີ່ນຕັ້ງຢູ່ສາມແຍກ ໜອງເປັດນີ້ເອງ).

ໄລຍະຮຽນຢູ່ບ້ານຄາຍນັ້ນ ມີຄວາມຫຍຸ້ງຍາກຫຼາຍ ເປັນຕົ້ນແມ່ນ ໄດ້ຍ່າງໄປ-ກັບ, ຕ້ອງຕື່ນນອນແຕ່ເຊົ້າ ໄດ້ຫໍ່ເຂົ້າແລ້ວກໍອອກເຮືອນໄປໂລດ ບາງເທື່ອກໍທັ້ງຍ່າງ ທັ້ງແລ່ນ ເພາະຢ້ານບໍ່ທັນໂມງຮຽນ. ມີບາງຄົນກໍບໍ່ທັນແທ້ ທ່ານຄູກໍເອົາໄປຢືນຂ້າງເສົາ ຫຼັກທຸງຊາດ ປະກາດຕໍ່ໜ້າໝູ່ເພື່ອນວ່າເປັນຄົນຂີ້ຄ້ານ ນອນຕື່ນສວາຍ ບໍ່ຄວນເອົາເປັນ ແບບຢ່າງ. ໝູ່ຄູ່ໄປຮຽນນຳກັນກໍມີໜ້ອຍ ແມ່ຍິງມີແຕ່ຂ້າພະເຈົ້າຜູ້ດຽວຊ້ຳ. ບາງເທື່ອ ກໍຮູ້ສຶກທໍ້ຖອຍໃຈ ແຕ່ກໍຍ້ອນຄວາມເອົາໃຈໃສ່ຂອງພໍ່ແມ່ ແລະເອື້ອຍອິ່ນອ່ອຍ ປຸກລະດົມ ໃຫ້ອົດທົນຮ່ຳຮຽນ. ໃນຄອບຄົວເອື້ອຍສອງຄົນ ກໍບໍ່ໄດ້ຮຽນໜັງສື, ເຮັດ ວຽກໄຮ່ການນາ ແລະວຽກຄອບຄົວຊ່ວຍພໍ່ແມ່, ເພີ່ນຈຶ່ງລະດົມ ແລະສົ່ງເສີມໃຫ້ຂ້າພະ ເຈົ້າໄດ້ຮຽນໜັງສື. ພິເສດແມ່ນ ທ່ານຄູສີທົນ ທິບດາລາ ເຊິ່ງເປັນນ້ອງຊາຍຂອງແມ່ ໄດ້ ຊຸກຍູ້ໃຫ້ອົດທົນ ຮ່ຳຮຽນ ທັງໃຫ້ຄວາມຮັກແພງ ແລະຄຳຊີ້ນຳຕັກເຕືອນ(ປັດຈຸບັນເພີ່ນ ເປັນພະນັກງານບຳນານຢູ່ໂພນສະຫວັນນີ້ເອງ)

ດັ່ງນັ້ນ ເຖິງຈະຫຍຸ້ງຍາກປານໃດ ຂ້າພະເຈົ້າ ກໍຕັດສິນໃຈໃສ່ໃນການສຶກສາ ຮ່ຳຮຽນຕາມຄວາມມຸ່ງຫວັງຂອງຕົນ ແລະຄວາມປາຖະໜາດີຂອງພໍ່ແມ່ ເອື້ອຍ ແລະ ນ້າບ່າວ. ຮອດປີ 1963 ຂ້າພະເຈົ້າກໍຮຽນຈົບຫ້ອງທີສອງນ້ອຍ (ປ.4) ແລ້ວກໍມີອ້າຍ ຮັກຊື່ວ່າ ອ້າຍທອງໃບ ມາເວົ້ານຳພໍ່ແມ່ເພື່ອໃຫ້ຕົນເອງໄດ້ໄປເຮັດການ ເມື່ອພໍ່ແມ່ຕົກລົງ ອ້າຍທອງໃບ ພ້ອມໝູ່ໜຶ່ງຄົນກໍໄດ້ພາກັນຍ່າງແຕ່ບ້ານ ໄປຢູ່ສີ່ສາມທະຫານ (ຄັງໄຂ) ໄດ້ໄລຍະໜຶ່ງແລ້ວກໍໄປຮຽນແພດ ຈາກນັ້ນກໍເຄື່ອນໄຫວຮັບໃຊ້ກອງທັບ ໃນແຕ່ລະບັ້ນ ຮົບທີ່ດຸເດືອດຂຮ້ວຂາດ ຊຶ່ງສັດຕູບຸກຕີແຂວງຊຽງຂວາງໃນໄລຍະດັ່ງກ່າວ ດັ່ງນັ້ນຕົນ ເອງ ຈຶ່ງໄກຈາກບ້ານໄປເລື້ອຍໆ.(ເລື່ອງເສີກສົງຄາມຂໍເອົາໄວ້ເລົ່າຕາມຫຼັງ)

ເມື່ອສັນຕິພາບກັບຕ່າວມາ, ທ່ານບຸນຍັງ ວໍລະຈິດ ຜູ້ເປັນສາມີ ໄດ້ຮັບຄວາມ ໄວ້ວາງໃຈຈາກພັກ ຈາກລັດຖະບານ ແລະປະຊາຊົນໃຫ້ດຳລົງໜ້າທີ່ຕຳແໜ່ງສູງຂຶ້ນ ເລື້ອຍໆ ຂ້າພະເຈົ້າໃນຖານະພັນລະຍາ ກໍໄດ້ຕິດຕາມເພີ່ນໄປປະຕິບັດໜ້າທີ່ ຊຶ່ງນອກ ຈາກເຮັດວຽກຄອບຄົວແລ້ວ ຍັງໄດ້ສະໜັບສະໜູນໃຫ້ເພີ່ນໄດ້ສຳເລັດໜ້າທີ່ຂອງຜູ້ນຳ ປະເທດຊາດ. ເວົ້າລວມແມ່ນໄດ້ຄຽງຄູ່ກັບຄອບຄົວ, ກັບເພື່ອນຮ່ວມຮົບ ກັບບັນດາແມ່ ປ້ານ້າອາ ແລະພີ່ນ້ອງຮ່ວມຊາດ ປະກອບສ່ວນປົກປັກຮັກສາ ແລະສ້າງສາພັດທະນາ ປະເທດຊາດ.



ເມື່ອເວົ້າເຖິງບ້ານເກີດເມືອງນອນ ຂ້າພະເຈົ້າມີຄວາມຄິດຮອດ ຄິດເຖິງເປັນ ຫ່ວງເປັນໃຍ ແລະສຳນຶກຢູ່ສະເໝີວ່າ ຕົນເອງຍັງມີພາລະໜ້າທີ່ຕ້ອງຕອບບຸນແທນຄຸນ. ດັ່ງນັ້ນ ໃນປີ 2004 ຂ້າພະເຈົ້າພ້ອມຄອບຄົວ ຈຶ່ງໄດ້ຊ່ວຍສ້າງອາຄານຮຽນໃສ່ໂຮງຮຽນ ອິນແປງ 1 ຫຼັງມູນຄ່າກວ່າ 400 ລ້ານກີບ ແລະຕໍ່ມາອຳນາດການປົກ ຄອງທ້ອງຖິ່ນ ຊາວບ້ານ ພໍ່ແມ່ພີ່ນ້ອງ ແລະລູກຫຼານ ກໍສະເໜີຄວາມຮຽກຮ້ອງຕ້ອງມາຍັງຂ້າພະເຈົ້າ ອີກວ່າ ຢາກມີອາຄານຮຽນຫຼັງໃໝ່ຕື່ມອີກ ເພື່ອໃຊ້ສຳລັບການສຶກສາຂັ້ນສູງຂຶ້ນໄປ.

ຄວາມຮຽກຮ້ອງຕ້ອງການນີ້ແມ່ນຖືກຕ້ອງສອດຄ່ອງທີ່ສຸດ,ເພາະວ່າການສ້າງ ສາພັດທະນາປະເທດຊາດ ບ້ານເມືອງໃນປັດຈຸບັນ ແລະອະນາຄົດຍິ່ງຕ້ອງການຄົນມີ ຄວາມຮູ້ ຄວາມສາມາດສູງ ແລະມີຄຸນສົມບັດສິນທຳປະຈຳໃຈ ດັ່ງນັ້ນ ພັກ-ລັດຈຶ່ງເລັ່ງ ພັດທະນາຊັບພະຍາກອນມະນຸດ ແລະຮຽກຮ້ອງໃຫ້ທຸກຄົນປະກອບສ່ວນພັດທະນາ ການສຶກສາຂອງຊາດ. ດ້ວຍເຫດນີ້ ຂ້າພະເຈົ້າພ້ອມຄອບຄົວ ຈຶ່ງຕັດສິນໃຈເປັນເອກະ ພາບ ຍິນດີຫາທາງຊ່ວຍເຫຼືອ ດຳເນີນການລະດົມທຶນຈາກລູກຫຼານ ຍາດພີ່ນ້ອງ ແລະ ຜູ້ມີນ້ຳໃຈທັງຫຼາຍ ອາໄສກຳລັງແຮງ ກຳລັງຊັບ ກຳລັງສະຕິປັນຍາຂອງຫຼາຍຄົນ ສົມທົບ ໃສ່ຄວາມອາດສາມາດຂອງພໍ່ແມ່ພີ່ນ້ອງ ແລະການຈັດຕັ້ງທຸກພາກສ່ວນໃນທ້ອງຖິ່ນ.

ໃນການລະດົມທຶນນັ້ນຂ້າພະເຈົ້າໄດ້ຮັບຄວາມຮ່ວມມືເປັນຢ່າງດີ ເພາະທຸກຄົນຕ່າງກໍເຫັນດີເຫັນພ້ອມ ຍິນດີສະໝັກໃຈ ແລະຈິງໃຈສະໜັບສະໜູນ. ທຸກຄົນສະເໜີໃຫ້ຂ້າພະເຈົ້າ ເປັນຫຼັກແຫຼ່ງອອກໜ້າພາຫາງ ທ້ອນໂຮມທຶນຮອນ ເພື່ອໃຫ້ໄດ້ຕາມຄວາມປະສົງທີ່ຄາດໝາຍໄວ້. ໂຊກດີທີ່ເວລາປີ 2004 ນັ້ນ ລາຄາວັດສະດຸ ອຸປະກອນ ແລະແຮງງານ ກໍ່ສ້າງບໍ່ທັນສູງປານໃດ ແຕ່ວ່າໃນເທື່ອນີ້ຄ່າກໍ່ສ້າງ ແລະອື່ນໆກໍນັບມື້ນັບສູງຂຶ້ນ. ດັ່ງນັ້ນ ຈຶ່ງໄດ້ຂະຫຍາຍການປຶກສາຫາລືໄປ ພ້ອມໆກັບການລະດົມທຶນນັ້ນ ກໍໄດ້ມອບໝາຍໃຫ້ ທ້າວສີສົມພູ ຜູ້ເປັນຫຼານຊາຍ ຄົ້ນຄວ້າພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງລົງມືຈັດຕັ້ງປະຕິບັດໂຄງການກໍ່ສ້າງ ໂດຍເລີ່ມແຕ່ວັນທີ 08/02/2010. ໃນການກໍ່ສ້າງ ກໍໄດ້ຮັບຄວາມຮ່ວມມືເປັນຢ່າງດີຈາກທຸກຝ່າຍ. ມາເຖິງບັດນີ້ ອາຄານຮຽນຫຼັງໃໝ່ ການປັບປຸງແກ້ໄຂຫຼັງເກົ່າ ລວມທັງເດີ່ນກິລາ ແລະຮົ້ວໂຮງຮຽນທີ່ພວກເຮົາໄດ້ຮ່ວມກັນສ້າງຂຶ້ນ ກໍໄດ້ສຳເລັດລົງແລ້ວຕາມແຜນການ ແລະກຳນົດເວລາທີ່ຕັ້ງໄວ້ທຸກປະການ.

ຂໍໃຫ້ພວກເຮົາທຸກຄົນ ຜູ້ມີສ່ວນຮ່ວມໃນການພັດທະນາໂຮງຮຽນຫຼັງນີ້ ຈົ່ງມີຄວາມພາກພູມໃຈຕໍ່ຜົນງານທີ່ພວກເຮົາໄດ້ສາມັກຄີກັນສ້າງຂຶ້ນມາ.ອາຄານຮຽນຫຼັງນີ້ມີຄວາມສຳຄັນຫຼາຍ ເພາະມັນໄດ້ໄຂປະຫວັດສາດໜ້າໃໝ່ ໃຫ້ແກ່ເຂດຄັງວຽງວ່າມີໂຮງຮຽນມັດທະຍົມສົມບູນເກີດຂຶ້ນແລ້ວ, ເປັນອາຄານຮຽນ ແລະເດີ່ນກິລາທີ່ເກີດຂຶ້ນຈາກຄວາມສາມັກຄີ ຈາກກອງທຶນລວມນ້ຳໃຈຂອງຫຼາຍຄົນ ໂດຍສະເພາະຂອງພວກເຮົາຜູ້ເປັນລູກຫຼານແຫ່ງດິນແດນຊຽງຂວາງວິຣະຊົນ.





ຂ້າພະເຈົ້າມີຄວາມສຸກ ແລະມີຄວາມພາກພູມໃຈຫຼາຍ, ຄູອາຈານ ພໍ່ແມ່ພີ່ນ້ອງ ແລະ ລູກຫຼານກໍຄົງມີຄວາມດີອົກດີໃຈຫຼາຍທີ່ສຸດ ເພາະນັບແຕ່ນີ້ເປັນຕົ້ນໄປລູກຫຼານ ຂອງພວກເຮົາ ໃນບໍລິເວນເຂດຄັງວຽງ ຜູ້ທີ່ຮຽນຈົບ ມັດທະຍົມຕົ້ນແລ້ວ ຈະບໍ່ໄດ້ແຍກ ຍ້າຍກັນໄປຮຽນຕໍ່ມັດທະຍົມປາຍ ຢູ່ບ່ອນອື່ນໆຕາມເງື່ອນໄຂຂອງໃຜລາວເໝືອນດັ່ງ ແຕ່ກ່ອນອີກ. ພໍ່ແມ່ ຄູອາຈານ ແລະນັກຮຽນຈະໄດ້ຢູ່ໃກ້ຊິດກັນ ຊ່ວຍເຫຼືອ ກັນອົບຮົມສິດ ສອນ ແລະຮ່ຳຮຽນຢ່າງເຕັມກຳລັງ. ຂໍໃຫ້ພວກເຮົາທຸກຄົນ ຈົ່ງຮັບເອົາຄວາມສຸກ ແລະ ຄວາມພາກພູມໃຈນີ້ໄວ້ ເພາະພວກເຮົາໄດ້ຮ່ວມກັນສ້າງບຸນກຸສົນອັນໃຫຍ່ຫຼວງ ຄືໄດ້ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ລູກຫຼານໄດ້ມີບ່ອນສຶກສາຮ່ຳຮຽນ ສົມກັບ ຄວາມມຸ່ງມາດປາຖະໜາ.

ໂຮງຮຽນອິນແປງແຫ່ງນີ້ ໃນອະດີດເຖິງວ່າ ຫຼັງນ້ອຍໆ ມຸງດ້ວຍຫຍ້າຄາ ແຕ່ກໍ ແມ່ນເບົ້າຊຸບຫຼໍ່ທຳອິດ ຊຶ່ງສົ່ງຜົນໃຫ້ຫຼາຍໆຄົນໃນປັດຈຸບັນນີ້ ໄດ້ກາຍເປັນພະນັກງານ ຂອງລັດ ເປັນນາຍທະຫານ ນາຍຕຳຫຼວດ ເປັນແພດ-ໝໍ ເປັນຄູອາຈານ ເປັນນັກ ທຸລະກິດ ແລະຜູ້ສຳຄັນໃນສາຂາອາຊີບອື່ນໆ. ບັດນີ້ພວກເຮົາມີອາຄານຮຽນຫຼັງໃໝ່ ທີ່ແໜ້ນໜາ ຖາວອນ ແລະຈົບງາມ ພ້ອມທັງມີລະດັບການສຶກສາສູງຂຶ້ນກວ່າເກົ່າອີກ. ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ພໍ່ແມ່ ຄູອາຈານ ແລະການຈັດຕັ້ງທຸກພາກສ່ວນ ຈະພ້ອມ ກັນປົກປັກ ຮັກສາເປັນຢ່າງດີ, ນຳໃຊ້ຢ່າງຮູ້ຄຸນຄ່າ ເຂົ້າໃນການສຶກສາອົບຮົມກໍ່ສ້າງລູກ ຫຼານໃຫ້ມີຄວາມຮູ້ຄວາມຫຼັກ ມີສະຕິປັນຍາ ເສີມຂະຫຍາຍມູນເຊື້ອໂຮງຮຽນອິນແປງ ມູນເຊື້ອວັດທະນະທຳອັນດີງາມ ແລະມູນເຊື້ອຊຽງຂວາງວິຣະຊົນ ຂອງພວກເຮົາ, ສ້າງ ຄົນຮຸ່ນໃໝ່ໃຫ້ເປັນຄົນດີຂອງພໍ່ແມ ່ຂອງສັງຄົມ ແລະເປັນຜູ້ສືບທອດທີ່ດີຂອງແຜ່ນດິນ ຖິ່ນຄັງຄາຍ ກໍຄືປະເທດຊາດບ້ານເມືອງ ໃນອະນາຄົດຕໍ່ໆໄປ.

ຂໍຂອບໃຈ ທຸກທ່ານທີ່ໄດ້ຊ່ວຍປະກອບທຶນ ປະກອບເຫື່ອແຮງ ສະຕິປັນຍາ ແລະ ວັດຖຸປັດໄຈຕ່າງໆເຮັດການພັດທະນາໂຮງຮຽນຄັ້ງນີ້ສຳເລັດຜົນ ແລະຂໍອວຍພອນໃຫ້ ທຸກທ່ານ ຈົ່ງມີຄວາມສຸກ ຄວາມຈະເລີນ ໃນຊີວິດ ແລະການງານຕະຫຼອດໄປ.



ປະຫວັດຄວາມເປັນມາ
ໂຮງຮຽນ ມັດທະຍົມສົມບູນ ອິນແປງ

.....

ຮຽບຮຽງໂດຍ: ຄະນະຜູ້ຈັດພິມ

ຂໍ້ມູນຈາກ ສີສົມພູ ນັນທະພອນ ແລະ ຄຳສິງ ເພັດດາວເຮືອງ

ອອກຈາກໂພນສະຫວັນໄປທາງທິດຕາເວັນອອກສ່ຽງເໜືອ ຕາມເສັ້ນທາງເລກ 7 ປະມານ 37 ກິໂລແມັດ ແລ້ວລ້ຽວຊ້າຍໄປຕາມເສັ້ນທາງໜອງເປັດ-ລາດບອກ ປະມານ ສິບປາຍກິໂລແມັດ ກໍເຖິງໂຮງຮຽນອິນແປງ ຫຼື ໂຮງຮຽນມັດທະຍົມສົມບູນຄັ້ງວຽງ.

ໂຮງຮຽນ ອິນແປງໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 1949 ເປັນໂຮງຮຽນມູລະປະ ຖົມສຶກສາ ແຫ່ງທຳອິດໃນເຂດຕາແສງຄັ້ງ ເມືອງແປກ ແຂວງຊຽງຂວາງ ປຸກສ້າງດ້ວຍ ໄມ້ ແອ້ມແປ້ນ ມຸງຫຍ້າ ຂະໜາດ 3 ຫ້ອງຮຽນ ໂດຍທ່ານຄູໃຫຍ່ຂອງໂຮງຮຽນຜູ້ທຳອິດ ແມ່ນ ທ່ານຄູ ຄຳຈັນ, 1953 ທ່ານຄູ ພິມພາ, 1954 ທ່ານຄູ ພອນ, 1956 ທ່ານຄູ ຄຳປ່ອງ, ທ່ານຄູແກ້ວ ມະລິຍະ, 1957 - 64 ທ່ານຄູ ສີທົນ ທິບດາລາ, 1964 - 70 ທ່ານຄູ ພອນສະໄໝ ວົງພະຈັນ.

1964 ຈັກກະພັດຜູ້ຮຸກຮານໄດ້ ເພີ່ມທະວີສົງຄາມທຳລາຍທາງອາກາດໃສ່ ດິນແດນລາວ ໂດຍສະເພາະແຂວງຊຽງຂວາງ. ບັນດາເຮືອນຊານບ້ານຊ່ອງ ວັດວາ ອາຮາມ ໂຮງໝໍ ໂຮງຮຽນ ລວມທັງໂຮງຮຽນອິນແປງຖືກທຳລາຍເຜົາຜານ ດ້ວຍລະເບີດ ທີ່ຖອກເທລົງມາຈາກຍົນ L 19, T 28, F 105, B.52 ຄູ-ນັກຮຽນຈຶ່ງຍົກຍ້າຍໄປສິດ ສອນຢູ່ປ່າບ່ອນປອດໄພ ເປັນຕົ້ນແມ່ນທີ່ນາໜອງພູພຶ. ຮອດປີ 1969 ກໍຍົກຍ້າຍໄປ ຫວຽດນາມຢູ່ບ້ານມອນເຊິນ ຕາແສງມອນເຊິນ ເມືອງກົມກວງແຂວງເງະອານ ໂດຍມີ ທ່ານຄູ ພອນສະໄໝ ວົງພະຈັນ ເປັນຜູ້ອຳນວຍການ



ພາຍຫຼັງສົງຄາມຍຸຕິ ປະເທດຊາດໄດ້ຮັບການປົດປ່ອຍ ອາຄານຮຽນຫຼັງໃໝ່ ໄດ້ຖືກສ້າງຂຶ້ນໃນສະຖານທີ່ເດີມ, ທາງພັກ - ລັດ ອຳນາດການປົກຄອງທ້ອງຖິ່ນກໍໄດ້ ພັດທະນາມາ ຢ່າງຕໍ່ເນື່ອງເພື່ອໃຫ້ກາຍເປັນໂຮງຮຽນມັດທະຍົມສົມບູນໃນປັດຈຸບັນ.

ນັກຮຽນຈາກໂຮງຮຽນອິນແປງ ຮຸ່ນກ່ອນໆ ມາເຖິງປັດຈຸບັນ ຫຼາຍຄົນໄດ້ກາຍ ເປັນເປັນພະນັກງານຂັ້ນນຳ ເປັນແພດ ເປັນຄູ ເປັນວິສະວະກອນ ເປັນນັກທຸລະກິດ... ແລະຜູ້ສຳຄັນໃນສາຂາອາຊີບອື່ນໆ ຊຶ່ງປະຈຳໜ້າທີ່ຕຳແໜ່ງຕ່າງໆ ແຕ່ສູນກາງເຖິງ ການຈັດຕັ້ງຂັ້ນທ້ອງຖິ່ນ. ເຊັ່ນ: ທ່ານຄູ ພອນສະໄໝ ວົງພະຈັນ. ນາງຄຳເມິງ ວໍລະຈິດ, ສົມວັນດີ ນາຖາວົງ, ນາງ ອ່ອນຈັນ ທຳມະວົງ, ພັນເອກ ນັນທາ, ພັນເອກ ສົມລິດ, ພັນເອກ ວັນຄຳ, ພັນຕີ ຄຳສິງ, ບຸນລ້ອມ, ຮ້ອຍເອກ ສີສົມພູ, ບຸນໂຮມ, ອວນສີ, ຫຼ້າ ສິງດາລາ, ຄຳເພັດ, ຄຳພັດ, ຄຳບານ ບົວສີ, ຄຳປ່ຽນ , ບຸນໂຕະ, ທອງເລືອນ, ບຸນທັນ, ຈອມເພັດ, ບຸນຍໍ, ສີດາ, ນົນສະຫວັດ, ທັນຖາວອນ, ທອງຖາວອນ ບ້ານນາລາມ, ນາງ ສີດາ ບ້ານງຳ, ອວນສີ ສິງດາລາ ບ້ານປຸ່ງ, ສຸດຕາ ບ້ານສີຄູນ, ຮຽວຂົ່ງ ບ້ານນາແອະ, ວັນເຮືອງ ພິມມະສານ ບ້ານຄັງວຽງ. ພິມພາ ວົງວຽງຄຳ (ຊຽງຜອງ ຄັງວຽງ), ດຳ ໄຊມຸນຕີ ບ້ານທາດ, ໂຮມ ນາຖາວົງ ບ້ານຄັງວຽງ, ຄຳໃບ ວົງທອງຈິດ ບ້ານທາດ, ຊຽງພົມມາ ບ້ານງຳ, ນາງ ແກ້ວ ແລະ ນາງມັ່ງ ບ້ານຄັງວຽງ ແລະຜູ້ອື່ນອີກຫຼາຍຄົນ....



ບັນດາ ນັກສຶກສາຄູ 11+3 ຊຸດທີ 2 ທີ່ລົງມາຝຶກສອນຢູ່ໂຮງຮຽນອິນແປງ 2002



ແດ່ສັດທາ ຂອງແມ່ຍິງ ຜູ່ປະເສີດ

.....

ດາລາ ກັນລະຍາ

ມະນຸດ ໃນໂລກລ້ອມ ກຳເນີດຊີວິດ
ອາໄສສະຖິດ ແຜ່ນດິນແດນໃຫ້
ຝັ່ງສາຍແຫ່ ແຜ່ສາຍບຶໄວ້ ແຊມດິນຖິ່ນກຳເນີດ
ຍາມເມື່ອ ຈອນຈາກພຸ້ນ ອາໄລອ້ອນຫອດຫາ
ແທ້ແລ້ວ.

ຄຶດຮອດ ຜືນແຜ່ນດິນຖິ່ນນັ້ນ ພາໃຫຍ່ຍາມເດັກ
ຄຶດຮອດ ພຽງພຽງຜາ ລາດ"ອິນແປງ"ປັ້ນ
ຄັ້ງວຽງ ຢ້ຽຍາຍອ້ອມ ພູດາວປະດັບຈອດ
ໄມ້ແປກ-ຮ້ຳ ເຄືອຕ້ຳງຟຸ່ມເຟືອຍ

ຟາກພຸ້ນ ! ຕົ້ນໝາກໝັ້ນ ແຄມເດີ່ນໂຮງຮຽນ
ຈອງຄວາຍລຽນ ລຽບລຳນຳປ່ານ
"ບວກຊ້ຳງ" ໝາຍເປັນເຄົ້າ ຮຽງເງົ້າຕົ້ນໄມ້ຟ່ຳ
ໝາກເກັ້ນ ໝາມກ່ຳ ແລະສ່ຳລົ້ມ ບໍ່ລືມໄດ້-ບ່ອນໃຫຍ່ມາ

ນາງຈົ່ງ ຄຶດໄຄ່ແມ້ງ ຈິດຈອດພະໄມຖະຫວິນ
ບຸນຄຸນ ຂອງແຜ່ນດິນ ສຳ່ໃດຊິແທນໄດ້ ?
ຍາມເມື່ອ ມາຢາມຢ້ຽມ ໂນນພູບ່ອນເຄີຍລ່ວງ
ຈິດໃຈ ເຮຮ່ຳຫ້ວງ ຢາກແທນສ້າງສືບແນວ ວ່ານາ.

ຄຶດເມື່ອ ດາວອ່ອນນ້ອຍ ຫຼົ້ນແລ່ນນຳນາ
ຮາບລຸ່ມ ຄັ້ງພູພຽງ ເດີ່ນດິນເປັນເປີ້ນ
"ອິນແປງ" ແປງນາງໃຫ້ ມີວິຊາຮຽນເພື່ອນ
ມີພໍ່ແມ່ ແລະເອື້ອຍ ທັ້ງນ້ຳກຳສົ່ງເສີມ

ສຸດ ປໍສາມ (ປ.3) ຢູ່ຫັ້ນ ໄດ້ໄປຕໍ່ປະຖົມປາຍ
ຕ້ອງຍ່ຳ ສາມ-ສີ່ກິໂລແມັດ ຍາກທ່ຽງທຽວມື້
ເປັນໜຶ່ງ ນາງຂອງບ້ານ ຮຽນໄກແສນລຳບາກ
ບຸນຄຸນ ຄູທັ້ງສາມ-ສີ່ຊ່ວ້ານ ຊວນໃຫ້ພ່ຳພຽນ.

ຫຼາຍຸສິບ-
ກໍເພື່ອ
ເປັນຈັ່ງ-
ເລີຍເລົ່າ

ປີອອກບ້ານ
ສ້າງຄາມຣົບ
ບຸນໄດ້ຫຼຸດພົ້ນ
ໄດ້ຄູ່ຊ້ອນ

ຈຳຈາກຈອນໄກ
ເຮັ່ງຄຸມແຄນດ້າວ
ແປວໄຟມັດຈຸລາດ
ເປັນຜູ່ນຳຍົກກ້ວ
ຄອງຂັ້ນລັດຖະບານ

ຊີວິດ
ໜ້າທີ່
ລູກກຳ
ບັດນີ້

ຜັນເຜັ່ນຂຶ້ນ
ທ້ັງພາລະ
ສອນລອນໜ້າ
ນາງເຮັ່ງຮ້ອນ

ສູງເດ່ັນຕາມກັນ
ຫຼາກຫຼາຍມີເວັ້ນ (ມີ=ບ່ໍມີ)
ດູແລເລີງໃຫຍ່
ໃຈຂ້ອນຂອດແຜ່ນດິນ

ມາແວ່ບ້ານ
ຮຽນດາເດີມ
ກໍຫາກຫຼາຍປີລ້ຳ
ມີຊີແອ້ມ

ເຫັນຮ່ອມຊີແທນຄຸນ ຊອບແລ້ວ
ຖືກໄພສ້ົງຄາມກ້ຽງ
ເພພັ້ງໂຫ້ຍຫ່ຽງ
ລົ້ມລຸ້ລ່ວງສະເມືອນ.

ເຫັນໂຮງ-
ຫຼັ້ງໃໝ່ (ອ່ືນ)
ຝາບ່ໍ-

ເທ່ືອນ້ີ
ຄິດເຜ່ືອ

ນາງຄິດຄ້ອຍ
ເດັກ"ອິນແປງ"ຕາດຳໆ
ໃຈສັດທາກູນເກ້ືອ
ມອນພ້ີນ້ອງ

ຢາກຊູຊ່ອຍຊາວປະຊາ
ຊີໃຫຍ່ສູງສອນໜ້າ
ຮວມໂຮມຮັກຮ່ໍ
ລູກຫຼານໃກ້ ແລະໄກ.

ໂຮມທຶນຊັບກ່ໍສ້າງ
ສາມັກຄີແຮງຮັກ
"ຄ້ັງວຽງ"ມີແລ້ວ
ແຮງສ້ົງຢູ້

ປຸນປູກໂຮງຮຽນ
ກ່ໍແປງສົມແມ້ງ
ມັດທະຍົມຫຼ້ັງໃໝ່
ກຸສົນກ້ໍາແຫ່ງນາງ

"ອິນແປງ"
ເກີດຈາກ

ງາມເດ
ນ້ີແລ້ວ

ເພ່ືອລູກ-
ຜືນແຜ່ນ
ຍ້ອນສັດທາ
ສາທຸ ! ສາທຸ !

ຫຼານຊີໃຫຍ່ກ້ໍາ
ດິນ"ຄ້ັງຄາຍ"
ຍ້ົງຜູ່ຫານກ້ໍາ
ຂໍແມ່ຍືນຢູ່ໝັ້ນ

ສິບທອດພາລະກິດ
ວັດທະນາເມືອໜ້ໍາ
ຢາກແທນຄຸນຖ່ິນກ່ໍາເນີດ ຜູ່ນ້ີ
ເປັນຂວັນໃຈຊຸມລູກຫຼ້ໍາ
ອິນແປງບ້ານໃຫ້ຊືນບານ ແດ່ຖ້ອນ !

ດ້ວຍຄວາມສັດທາ ແລະອະນຸໂມທະນາ ໃນກຸສົນລະກັມ ຂອງນ້ໍາ ຄຳເມ່ືງ ວໍລະຈິດ ພ້ອມດ້ວຍຄອບຄົວ ລູກຫຼານ ແລະຄູອາຈານຜູ່ມີບຸນຄຸນຕ່ໍແຜ່ນ ດິນຖ່ິນອິນແປງ ຄ້ັງວຽງທຸກທ່ານ. ໃນນາມຜູ້ຕາງໜ້ໍາ ສະມາຄົມຮ່ວມນ້ໍາໃຈກັບ ເດັກນ້ອຍລາວ (ALC) ຂໍປະກອບປ້ົມເຂ້ົາຫ້ອງສະໝຸດຂອງໂຮງຮຽນມີມູນຄ່ໍາ 4,000,0000 ກີບ (ສ່ີລ້ານກີບ)



ຄຳຊົ່ນຊອບ ອອກຈາກໃຈຈິງ
ເຖິງປ້າຜູ້ມີປະສົບການໃນຄວາມບຸກບືນ
ເມື່ອເຍົາໄວໃນດິນແດນຄັ້ງວຽງ
ເມືອງແປກວິຣະຊົນ

.....

ເໝືອນດັ່ງດວງດອກໄມ້ຫຼາກຫຼາຍສີສັນທີ່ໄດ້ຜ່ານຜ່າ ພາຍຸລົມຝົນຢູ່ກາງດົງ, ດົງທີ່ມີຄວາມສະຫງົບພຽງຊົ່ວຈູບຂອງໄວເດັກກ້າວສູ່ແປວໄຟ ແຫ່ງສົງຄາມອັນຍືດເຍື້ອຍາວນານ.

ມື້ໜຶ່ງ ຂ້າພະເຈົ້າ ໄດ້ເບິ່ງລາຍການ "ວິຖີຊີວິດ ເອເຊຍ" ຜ່ານຈໍໂທລະພາບ ຊຶ່ງໃນລາຍການນັ້ນ ມີຕອນໜຶ່ງ ປ້າຄຳເມິງ ວໍລະຈິດ ໄດ້ເລົ່າເຖິງປະສົບການການເຄື່ອນໄຫວຂອງຕົນເອງເມື່ອຄາວຍັງນ້ອຍ....ຂ້ອຍທັງຕັ້ງໃຈເບິ່ງ ແລະທົບທວນຮຳຮຽນເອົາຄວາມດີຄວາມເດັ່ນຂອງປ້າເພື່ອເປັນອຸທາຫອນເຕືອນໃຈ"ສູ້ເພື່ອຄວາມດີ, ດີເພື່ອສັງຄົມ ແລະອົບອຸ່ນ ເພື່ອເປັນແວ່ນແຍງ ແລະເສົາຄ້ຳແດ່ເຍົາວະຊົນ ຊາວໜຸ່ມຍິງສາວລາວ"

ປ້າຄຳເມິງ ໄດ້ເລົ່າປະສົບການຂອງຕົນ ຕໍ່ສືມວນຊົນ ເຖິງຄາວຍັງເດັກວ່າ: *ຕ້ອງທົນທຸກທາງດ້ານກາຍ ແລະຈິດໃຈກະວົນກະວາຍຕໍ່ສະພາບແວດລ້ອມ ເພາະຕ້ວຄົນດຽວ ທີ່ເປັນຜູ້ຍິງຕ້ອງຍ່າງມື້ລະ 5 -6 ຫຼັກເພື່ອໄປໂຮງຮຽນ, ສຸດທ້າຍການຮຽນສຳເລັດ ແລະໄດ້ເປັນນັກຮຽນເກ່ງຂອງໂຮງຮຽນອີກດ້ວຍ. ຮູບພາບບ້ານເກີດເມືອງນອນ ໂຮງຮຽນແລະຄວາມຍາກລຳບາກໃນການເດີນທາງຈາກບ້ານເຖິງໂຮງຮຽນ ຍັງຝັງເລິກຢູ່ໃນໃຈຕະຫຼອດມາເຖິງເທົ່າທຸກວັນນີ້.*

ສົງຄາມ ບໍ່ປານີໃຜ, ແປວໄຟໄດ້ເຜົາຜານເຮືອນ ຊານບ້ານຊ່ອງ ຂອງປະຊາຊົນ ຊາວຊຽງຂວາງລວມທັງໂຮງຮຽນແຫ່ງທຳອິດ ບ່ອນທີ່ຂ້ອຍໄດ້ເຂົ້າຮັບການສຶກສາຄັ້ງແຮກ. ມາມື້ນີ້ ຂ້ອຍຈຶ່ງເກີດມີ ສັດທາອັນແຮງກ້າ ຈຶ່ງສະລະຊັບສົມບັດສ່ວນຕົວ ພ້ອມທັງປຸກລະດົມລູກຫຼານພີ່ນ້ອງ ເພື່ອຮ່ວມອຸທິດໃຫ້ແກ່ອະນາຄົດ ຂອງເດັກນ້ອຍແຫ່ງແດນເມືອງພວນ ໃຫ້ໄດ້ຮັບຄວາມສະດວກສະບາຍ, ປອດໄພ ແລະຮັບປະກັນຄຸນະພາບການຮຽນການສອນຂອງຄູອາຈານ, ໃຫ້ເຂົາເຈົ້າໄດ້ຮ່ຳຮຽນ, ໃຫ້ກາຍເປັນກຳລັງແຮງທີ່ສະຫຼາດຂອງຊາດຕໍ່ໄປ.

ຂ້າພະເຈົ້າໄດ້ອ່ານບົດເລື່ອງ *"ມອບຫົວໃຈໃຫ້ແກ່ເດັກ"* ຂອງ ອ.ອາຊູໂຄມ ລິນສະກິ ຊຶ່ງສັງລວມເນື້ອໃນໄວ້ວ່າ: ຄວາມຮູ້ສຶກທີ່ດີງາມ ຕ້ອງມີກົກເຫງົ້າຢູ່ໃນໄວເດັກ ,ນ້ຳໃຈມະນຸດສະທຳ, ຄວາມເມດຕາກະລຸນາ ຄວາມອ່ອນຫວານ ແລະໄມຕີຈິດນັ້ນ ຕ້ອງກຳເນີດຂຶ້ນທ່າມກາງການອອກແຮງງານ, ທ່າມກາງຄວາມເປັນຫ່ວງເປັນໃຍເຖິງ ຄວາມສວຍງາມຂອງໂລກອ້ອມຕົວ ບັນດາຄວາມຮູ້ສຶກ ນັ້ນແມ່ນລວມຍອດຂອງນ້ຳໃຈ ມະນຸດ. ຖ້າຫາກຄວາມຮູ້ ສຶກທີ່ດີງາມບ່ໄດ້ຮັບການກ່ໍສ້າງຂຶ້ນແຕ່ໄວເດັກແລ້ວ ແມ່ນບ່ໍມີ ເວລາໃດ ຈະສາມາດສ້າງມັນຂຶ້ນມາໄດ້, ເພາະສິ່ງທີ່ເປັນມະນຸດສະທຳ ຢ່າງແທ້ຈິງນັ້ນ ແມ່ນໄດ້ຮັບການປູກຝັງໃນຈິດໃຈ ພ້ອມກັບການຮຽນຮູ້ສັດຈະທຳໃນຄັ້ງແຮກ ເປັນສິ່ງ ສຳຄັນທີ່ສຸດ ພ້ອມກັບການຜ່ານຜ່າອຸປະສັກນາໆປະການ.

ເມື່ອເຍືອງໃສ່ປ້າຄຳເມິງ ແລ້ວເຫັນວ່າເນື້ອໃນບົດເລື່ອງດັ່ງກ່າວນັ້ນ ເວົ້າຖືກ ຕ້ອງແລ້ວ ເພາະສິ່ງທີ່ເປັນມະນຸດສະທຳໃນຈິດໃຈ ປ້າກ໋ໄດ້ຮັບການອົບຮົມບ່ົມເພາະ ແລະສ້າງສົມມາຕັ້ງແຕ່ນ້ອຍພຸ້ນ, ສົມຄວນແລ້ວທີ່ ປ້າຄຳເມິງ ວໍລະຈິດ ໄດ້ຝາກຂອງ ຂວັນອັນລ້ຳຄ່າຫາຄຸນຄ່າໃດໆ ທຽບຄຽງບ່ໍມີໄດ້ ໃນນ້ຳໃຈທີ່ ປ້າເສຍສະຫຼະ ແລະຊຸກຍູ້ ໃຫ້ແກ່ວົງຄະນາຍາດ ແລະເພື່ອນມິດສະຫາຍຂອງປ້າ...ມອບແດ່ບ້ານເກີດເມືອງນອນ "ກໍຄືການສ້າງໂຮງຮຽນອິນແປງສົມບູນແບບ ແດ່ລູກຫຼານຊາວພວນ ແລະບັນດາເຜົ່າ ໃນດິນແດນວິລະຊົນແຫ່ງນີ້

ປ້າຄຳເມິງ ຈຶ່ງເປັນຕົວແທນ ແລະເປັນແບບຢ່າງ ອັນໜຶ່ງຂອງຜູ້ອາວຸໂສ ທີ່ຍາມ ໃດກ໋ຫ່ວງໃຍການສຶກສາຂອງຄົນຮຸ່ນສືບທອດ. ການໃຫ້ທານຂອງມະນຸດມີຫຼາຍຮູບ ແບບເຊັ່ນ: ໃຫ້ທານດ້ວຍເຂົ້າປາອາຫານ ເສື້ອຜ້າອາພອນ ສ້າງວັດວາອາຮາມ ຖະໜົນ ຫົນທາງ,ສາລາພັກຂ້າງທາງ...ຊຶ່ງລ້ວນແຕ່ເປັນກຸສົນທີ່ສູງສົ່ງຢູ່ແລ້ວ ແຕ່ການສ້າງໂຮງ ຮຽນຍິ່ງມີຄວາມໝາຍຄວາມສຳຄັນຍິ່ງ ເພາະໂຮງຮຽນເປັນບ່ອນສ້າງຄົນຫຼາຍຮ້ອຍ ຫຼາຍພັນ ໃຫ້ເປັນຄົນດີ ມີຄວາມຮູ້ "ຄົນດີ ຍ່ອມເປັນສີແກ່ຊາດ ຄວາມດີຕ໋ກນ້ຳບ່ໍໄຫຼ ຕ໋ກໄຟ ບ່ໍໄໝ້ "ຄວາມດີ ຍ່ອມຈະສົ່ງຜົນໃຫ້ຄວາມດີເພີ່ມພູນທະວີຍິ່ງຂຶ້ນໄປ.


ວັນນີ້ ປ້າມອບຫົວໃຈ ໃຫ້ກັບເດັກນ້ອຍລາວ, ນ້ຳໃຈອັນປະເສີດ ແລະອົບອຸ່ນ ຂອງປ້າ ປຽບດັ່ງສາຍຝົນທີ່ໂຮຍຮ່ຳລົງມາສູ່ທົ່ງຄັງວຽງ... ເມັດພືດທີ່ຖືກຝົນກ໋ຈະອອກ ໜ່ໍຈ່ແໜງແລະກາຍເປັນພືກສາພັນທີ່ອຸດົມສົມບູນແລະຮັ່ງມີໃນແຜ່ນດິນຄືກັບພວກເດັກ ທີ່ໄດ້ຮັບກະລຸນາ ກ໋ຈະມີຄວາມສຸກ ແລະດີໃຈຫຼາຍ ແມ່ນ່ອນວ່າ ພວກເຂົາຈະເຕີບໃຫຍ່ ຂຶ້ນພ້ອມດ້ວຍສະຕິປັນຍາ ແລະຄວາມສຳນຶກໃນບຸນຄຸນຂອງບັນພະບຸລຸດ.

ເພື່ອປະກອບສ່ວນໃນ ການກະທຳທີ່ດີງາມຂອງປ້າ ແລະເພື່ອຊຸກຍູ້ ເສີມສົ່ງ ການສຶກສາໃນດິນແດນນີ້ພວກຂ້າພະເຈົ້າລວມມີ:ສະມາຄົມຫໍສະໝຸດແຫ່ງສປປ. ລາວ, ຫໍສະໝຸດແຫ່ງຊາດລາວ, ອົງການພັດທະນາເດັກນ້ອຍລາວ ແຫ່ງຍີ່ປຸ່ນ (SVA), ອົງການຮູມທູຣິດ (Room To Read) ສະມາຄົມຮ່ວມນ້ຳໃຈ ກັບເດັກນ້ອຍລາວ (ALC) ພ້ອມກັນປະກອບປຶ້ມອ່ານປະເພດຕ່າງໆເຂົ້າໃນຫໍສະໝຸດຂອງໂຮງຮຽນຄິດເປັນ ມູນຄ່າ 24,000,000 ກີບ,ພ້ອມທັງໃຫ້ການຝຶກອົບຮົມວິຊາການຄຸ້ມຄອງ ຫ້ອງສະໝຸດ ຂອງໂຮງຮຽນ ເພື່ອໃຫ້ການດຳເນີນງານຂອງຫ້ອງສະໝຸດ ເປັນໄປຢ່າງຖືກຕ້ອງຕາມ ລະບຽບຫຼັກການ.

ຂໍສະແດງຄວາມຊົມເຊີຍໃນຄວາມຕັ້ງໜ້າ ຫ້າວຫັນ ຂອງຄະນະຜູ້ເກັບກຳຂໍ້ມູນ ຮຽບຮຽງ ອອກແບບ ແລະຈັດພິມປຶ້ມອະນຸສອນໃນການສ້າງໂຮງຮຽນຄັ້ງນີ້ ເພາະ ການບັນທຶກ ເກັບກຳຂໍ້ມູນໄວ້ເປັນລາຍລັກອັກສອນ ຢ່າງເປັນລະບົບລະບຽບນັ້ນ ເປັນ ສິ່ງສຳຄັນຫຼາຍ ທັງຕໍ່ການສຶກສາ ວັດທະນະທຳ ແລະການພັດທະນາສັງຄົມ. ສົມແລ້ວ ທີ່ປ້າໄດ້ມອບໝາຍວຽກນີ້ ໃຫ້ນາງຄຳອອນ ເພັດດາວເຮືອງ ກະວີຍິງຜູ້ທີ່ມີຜົນງານອັນ ຫຼວງຫຼາຍໃນການປະພັນ ໃນນາມມາລີພອນ ຫຼື ເພັດເມືອງພອນ ໃນປັດຈຸບັນ ເຊິ່ງເປັນ ນັກກະວີທີ່ມີຄວາມໃກ້ຊິດຕິດພັນກັບທ້ອງຖິ່ນດິນແດນນີ້ເປັນພິເສດ.

ຂໍສະແດງຄວາມເຄົາລົບນັບຖື ແລະຂໍຝາກຄຳສັນລະເສີນ ຈິດໃຈອັນສູງສົ່ງ ຂອງປ້າຄຳເມິງ ວໍລະຈິດ ພ້ອມດ້ວຍຄອບຄົວ ມານະທີ່ນີ້ດ້ວຍ.





ຂໍອະນຸໂມທະນາ ໃນກິດການກຸສົນ

.....


ພຣະອາຈານ ກິ ຈິດຕະວົ
ເຈົ້າອະທິການວັດປ່າ ຖ້ຳພຣະລືສີອະນາຣາມ
ບ້ານໃໝ່ ເມືອງ ສີໂຄດຕະບອງ

ທ່ານສາທຸຊົນ ຜູ້ມີຈິດໃຈໃນທັມມະທັງຫຼາຍ
ວັນນັ້ນ ອາຕະມາພາບ ເໝືອນກັບຝັນໄປທີ່ໄດ້ຮ່ວມເດີນທາງໄປຢ້ຽມຢາມ ຊຽງຂວາງ ດິນແດນວິລະຊົນ ເຊິ່ງເຄີຍເປັນໜຶ່ງໃນສະມໍລະພູມ ຕໍ່ສູ້ເພື່ອປົດປ່ອຍປະເທດ ຊາດ.ອາຕະມາໄດ້ເຫັນ ພູມລຳເນົາ ທ້ອງຖິ່ນແດນ ປ່າແປກທີ່ຫຼາຍຊົ່ວຄົນໄດ້ກ່າວເຖິງ , ໄດ້ພົບກັບຍາດໂຍມ ຊາວພວນຜູ້ພິລະອາດຫານ ຊຶ່ງເຄີຍປະສົບ ໄພແຫ່ງສົງຄາມ ອັນຍືດເຍື້ອຍາວນານ...ເມື່ອໄດ້ເຫັນແລ້ວ ຊ່າງໜ້າປະທັບໃຈ ກັບທຳມະຊາດພູຜາ ປ່າ ໄມ້ທີ່ຂຽວຊື່ນສົດໃສ, ແລະວິຖີຊີວິດຂອງຊາວພວນ ຜູ້ຮັ່ງມີວັດທະນະທຳ ມີຄວາມໂອບ ເອື້ອອາລີ ແຫ່ງໄມຕີຈິດ ໃນການຕ້ອນຮັບແຂກຄົນໄປມາ.

ອາຕະມາ ພາກພູມໃຈ ແລະສະອອນໃຈ ເປັນຢ່າງຍິ່ງທີ່ໄດ້ທ່ຽວຊົມສະຖານທີ່ ຕ່າງໆທາງດ້ານຮ່ອງຮອຍປະຫວັດສາດ ແລະພິເສດສຸດ ແມ່ນໄດ້ເຫັນທິວທັດທີ່ອ້ອມຮ ອບໂຮງຮຽນອິນແປງ, ອາຄານຮຽນທີ່ຫາກໍຖືກສ້າງຂຶ້ນໃໝ່ ຄຽງຄູ່ກັບອາຄານເກົ່າ ທີ່ເຄີຍເປັນບ່ອນຮ່ຳຮຽນ ຂອງເຫຼົ່ານັກຮຽນໃນເມື່ອກ່ອນ ແລະໄດ້ຖືກບູລະນະຄືນດ້ວຍ ສັດທາທານອັນໃຫຍ່ຫຼວງ ຂອງຄອບຄົວໃຫຍ່ວໍລະຈິດ ພ້ອມລູກຫຼານ ແລະເພື່ອນມິດ ສະຫາຍ ທີ່ມີຄວາມປາຖະໜາຢາກໃຫ້ສະຖານທີ່ແຫ່ງນີ້ ກາຍເປັນແຫຼ່ງພັດທະນາຄົນ ໃນປັດຈຸບັນກໍຄືໃນອະນາຄົດ, ໄດ້ເຫັນຄວາມຜູກພັນ ຮັກພີແພງນ້ອງ ແລະຄວາມເປັນ ເອກະພາບກັນ ຂອງຊາວບ້ານຄັ້ງວຽງ ທີ່ມີຕໍ່ອະນາຄົດຂອງລູກຫຼານ,

ການມີເມດຕາ ເອື້ອອາທອນຕໍ່ກັນ ຂອງມະນຸດເຮົາ, ການໃຫ້ທານດ້ວຍ ເຂົ້າ ປາອາຫານ,ການໃຫ້ການສຶກສາ, ແລະການຊ່ວຍໃຫ້ຫຼຸດພົ້ນ ອອກຈາກຄວາມດ້ອຍ ໂອກາດ ລ້ວນແຕ່ເປັນການໃຫ້ທານອັນສູງສົ່ງແລະຜົນແຫ່ງກັມນັ້ນ ຍ່ອມຈະໃຫ້ອານິສົງ ຕອບສະໜອງຄືນ ແດ່ທຸກຄົນ ໃຫ້ມີຄວາມສຸກຕະຫຼອດໄປ

ອາຕະມາ ຂໍອະນຸໂມທະນາ ນຳນ້ຳຈິດນ້ຳໃຈ ອັນປະເສີດຂອງບັນດາທ່ານ, ແລະຂໍໃຫ້ຄຸນພຣະສີຣັດຕະນະໄຕຣ ແລະສິ່ງສັກສິດໃນສະກົນລະໂລກ ຈົ່ງເອື້ອອຳນວຍ, ຈະເລີນພອນມາຍັງທຸກພາກສ່ວນ ທີ່ໄດ້ມີຈິດໃຈເຫຼື້ອມໃສ ພ້ອມໃຈກັນໃນການສ້າງ ສະຖາບັນການສຶກສາແຫ່ງນີ້ຂຶ້ນ. ຂໍຈະເລີນພອນ



ຄວາມຊົງຈຳ ບໍ່ມີວັນລືມ ຕໍ່ໂຮງຮຽນອິນແປງ

.....

ທ່ານ ຄູ ຄຳພວງ ດາລາແສນ
ອະດີດ ອຳນວຍການ ແລະຄູສອນ
ທີ່ໂຮງຮຽນບ້ານຄາຍ ລະຫວ່າງປີ 1955-1965
ປັດຈຸບັນອາຍຸ 80 ປີ ພະນັກງານບຳນານ
ຢູ່ບ້ານຍອດງຶ່ມ ເມືອງແປກ ແຂວງຊຽງຂວາງ

ເວົ້າເຖິງການສຶກສາ ໃນສອງຕາແສງໃນເມື່ອກ່ອນ ຄືຕາແສງຄັງ ແລະ ຕາແສງຄາຍ (ເຂດຄັງວຽງ ແລະເຂດຍອດງຶ່ມໃນປັດຈຸບັນ) ຈື່ໄດ້ວ່າສົກຮຽນທຳອິດ ໄດ້ໄຂຂຶ້ນໃນວັນທີ 1/9/1949 ໂດຍມີນັກຮຽນປະມານ 20-30 ຄົນທ່ໍນັ້ນ. ສະໄໝນັ້ນ ໃນຕາແສງໜຶ່ງມີໂຮງຮຽນມູລະປະຖົມສຶກສາພຽງຫຼັງດຽວ. ໂຮງຮຽນທົ່ວໄປແມ່ນປຸກ ຊູດິນ ຝາແອ້ມດ້ວຍແປ້ນ ມຸງຫຍ້າ ຂະໜາດ 5x8 ແມັດ ການຮຽນ-ການສອນກໍມີແຕ່ ຂັ້ນປະຖົມຄື ຫ້ອງທີ 5 (ຊັ້ນປະຖົມປີທີ.1 ຫຼື ປ.1) ຫ້ອງທີ 4 (ຊັ້ນປະຖົມ ປີທີ.2 ຫຼື ປ.2) ຫ້ອງທີ 3 (ຊັ້ນປະຖົມປີທີ.3 ຫຼື ປ.3) ທ່ໍນັ້ນ, ຈົນເຖິງສົກຮຽນ 1957-58 ລະດັບສຶກສາໃນຕາແສງຄາຍ ຈຶ່ງຄ່ອຍໆຂະຫຍາຍຕົວຂຶ້ນເຖິງຫ້ອງທີສອງນ້ອຍ (ຊັ້ນ ປະຖົມປີທີ 4 ຫຼື ປ.4)ແລະຫ້ອງທີສອງໃຫຍ່ (ຊັ້ນປະຖົມປີທີ 5 ຫຼື ປ.5) ທີ່ໂຮງຮຽນ ບ້ານຄາຍ ເປັນແຫ່ງທຳອິດ ໂດຍແມ່ນຂ້າພະເຈົ້າເອງ ເປັນຫົວໜ້າໝວດໂຮງຮຽນ ແລະ ເປັນຄູສອນຫ້ອງທີ 2 ນ້ອຍ.

ໂຮງຮຽນບ້ານຄາຍນີ້ ຮັບເອົານັກຮຽນຊຸດທຳອິດ ທີ່ຮຽນຈົບຈາກໂຮງຮຽນ ມູລະປະຖົມສຶກສາອ້ອມຂ້າງເຊ່ັ່ນ: ໂຮງຮຽນບ້ານເທິ່ນ ໂຮງຮຽນອິນແປງ.. ພວກນັກ ຮຽນມີຄວາມລຳບາກຫຼາຍ ເປັນຕົ້ນວ່າ..ເກືອບວ່າທັງໝົດຕ້ອງຍ່າງດ້ວຍຕີນເປົ່າ ແຕ່ບ້ານຄັງວຽງ ບ້ານສີຄູນ ...ມາຮຽນທີ່ບ້ານຄາຍ ຊຶ່ງມີໄລຍະທາງໄກສົມຄວນ .

ບັນດານັກຮຽນທີ່ຮຽນຈົບຫ້ອງທີສອງນ້ອຍຫຼືຫ້ອງທີສອງໃຫຍ່ຈາກໂຮງຮຽນ ບ້ານຄາຍແລ້ວ ຕ່າງຄົນກໍຕ່າງຊອກຫາຮຽນຕໍ່ຫ້ອງທີໜຶ່ງ (ຊັ້ນປະຖົມປີທີ.6 ຫຼື ປ. 6 ແລ້ວຈຶ່ງເສັ່ງແຊກຕີຟິກາ (Certificat) ຕາມເງື່ອນໄຂຂອງໃຜລາວເຊ່ັ່ນ:ໄປຮຽນຕໍ່ທີ່ ໂພນສະຫວັນ, ເມືອງຄູນ ຫຼື ວຽງຈັນ ເປັນຕົ້ນ ແລະບາງຄົນກໍຊອກເຮັດວຽກເຮັດການ.

ຂ້າພະເຈົ້າຮູ້ສຶກພາກພູມໃຈແລະປິຕິຍິນດີທີ່ສຸດ ທີ່ໄດ້ຖ່າຍທອດວິຊາຄວາມຮູ້ ໃຫ້ສິດສານຸສິດ. ພວກນັກຮຽນຮຸ່ນນັ້ນ ແລະຮຸ່ນຕໍ່ໆມາໄດ້ສືບທອດເອົາຄວາມດຸໝັ່ນ ຂະຫຍັນພຽນ ຄວາມຮູ້ ຄວາມສາມາດ ຄຸນສົມບັດ ສິນທຳປະຕິວັດ, ເອົາຈິດໃຈຮັກເຊື້ອ ແພງຊາດວິຣະຊົນ ຮັກບ້ານເກີດເມືອງນອນຢ່າງບໍ່ມີວັນຈະສິ້ນສຸດ, ສືບທອດເອົາມູນ ເຊື້ອວິຣະຊົນ ຄວາມທ້າຫານ ເດັດດ່ຽວໝຽວແໜ້ນບໍ່ຍອມຈຳນົນ.. ເຖິງປັດຈຸບັນນີ້ ເຂົ້າ ເຈົ້າເຫຼົ່ານັ້ນໄດ້ກາຍເປັນນັກຮົບຜູ້ອາດຫານ ເປັນພະນັກງານຂັ້ນນຳ ເປັນນັກວິຊາການ ແລະອື່ນໆ

ເຖິງວ່າໄດ້ໄປຮັບໜ້າທີ່ການງານຢູ່ແຫ່ງຫົນໃດ ໃກ້-ໄກປານໃດ ກໍຕາມເຂົາເຈົ້າ ກໍຍັງຫ່ວງຫາອາໄລບ້ານເກີດເມືອງນອນ ທີ່ເປັນບ່ອນສຶກສາຮ່ຳຮຽນຂອງຕົນ ແລະໄດ້ ໃຊ້ຫົວຄິດປະດິດສ້າງຊອກຫາແຫຼ່ງທຶນມາ ສ້າງສາພັດທະນາບ້ານເມືອງ ເພື່ອຕອບບຸນ ແທນຄຸນບ້ານເກີດເມືອງນອນ ພໍ່ແມ່ພີ່ນ້ອງ ຄູອາຈານ ແລະ ປະຊາຊົນບັນດາເຜົ່າ ເຮັດໃຫ້ຜູ້ຄົນໃນທ້ອງຖິ່ນ ມີຊີວິດການເປັນຢູ່ທີ່ດີຂຶ້ນ, ໄດ້ພົບກັບແສງສະຫວ່າງ ອັນໃໝ່ ໃນການດຳລົງຊີວິດເຊັ່ນ: ໄດ້ມີຖະໜົນຫົນທາງ ໄດ້ຊົມໃຊ້ໄຟຟ້າ ມີສຸກສາລາ ມີໂຮງຮຽນ ໃຫ້ລູກຫຼານໄດ້ເຂົ້າຮັບສຶກສາ.

ເວົ້າສະເພາະ ນາງຄຳເມິງ ວໍລະຈິດ ກໍເປັນນັກຮຽນຫ້ອງທີ 2 ຂອງໂຮງຮຽນ ບ້ານຄາຍໃນປີ 1962-63. ນາງເປັນນັກຮຽນຄຳຮູ້ ດຸໝັ່ນພາກພຽນ ຢູ່ບ້ານໄກກວ່າໝູ່, ມາດຮອນີ້ ນາງພ້ອມຄອບຄົວກໍໄດ້ກັບມາ ຊ່ວຍສ້າງສາພັດທະນາຖິ່ນຖານ ບ້ານເກີດ ໃຫ້ນັບມື້ຮຸ່ງເຮືອງເຫຼືອງເຫຼື້ອມ ເຮັດໃຫ້ພໍ່ແມ່ພີ່ນ້ອງເຫັນໄດ້ວ່າ ເຖິງວ່າເພິ່ນໄດ້ເປັນ ພະນັກງານຂັ້ນສູງແລ້ວ ກໍຍັງຄິດເຖິງບ້ານເກີດເມືອງນອນ ບໍ່ລືມຜູ້ເປັນພໍ່ແມ່ພີ່ນ້ອງ ບໍ່ລືມຄູບາອາຈານ ບໍ່ລືມຊາວຊຽງຂວາງ ສົມວ່າເປັນລູກຮັກຫຼານແພງ ຜູ້ປະເສີດຂອງ ປະຊາຊົນແທ້ໆ.

ໃນຖານະອະດີດຄູສອນ ຂ້າພະເຈົ້າຂໍສະແດງ ຄວາມຊື່ນຊົມຍ້ອງຍໍ ແລະ ຂອບອົກຂອບໃຈ ຕໍ່ນາງຄຳເມິງ ພ້ອມຄອບຄົວລູກຫຼານຍາດພີ່ນ້ອງ ແລະຜູ້ໃຈບຸນ ທັງຫຼາຍທີ່ໄດ້ເປັນຫ່ວງ ເປັນໃຍຕໍ່ພໍ່ແມ່ປະຊາຊົນ ແລະທ້ອງຖິ່ນ ໄດ້ເຕົ້າໂຮມທຶນຮອນ ມາກໍ່ສ້າງອາຄານຮຽນຫຼັງໃໝ່ໃຫ້ແກ່ໂຮງຮຽນອີນແປງເພີ່ມເປັນ 5 ອາຄານຮຽນ ໃນບໍລິເວນດຽວກັນ ພ້ອມທັງມີລະດັບການຮຽນການສອນສູງຂຶ້ນກວ່າເກົ່າ.

ຂໍອວຍພອນໄຊແກ່ ນາງຄຳເມິງ ວໍລະຈິດ ພ້ອມຄອບຄົວຍາດພີ່ນ້ອງ ຈົ່ງມີ ສຸຂະພາບເຂັ້ມແຂງ ມີຄວາມສຸກ ຄວາມຈະເລີນ ແລະປະສົບຜົນສຳເລັດໃນໜ້າທີ່ການ ງານກໍຄືໃນຄອບຄົວຕະຫຼອດໄປ.



ທ່ານຄູ ສີທົນ ທິບດາລາ
ອະດີດຫົວໜ້າເຄິ່ງໝວດໂຮງຮຽນ ປະຖົມອິນແປງ

.....

ຂ້າພະເຈົ້າ ມີຄວາມຕື້ນຕັນໃຈເປັນຢ່າງຍິ່ງທີ່ໂຊກດີ ໄດ້ກຳເນີດ ແລະເຕີບໃຫຍ່ໃນດິນແດນຄັງວຽງ ເມືອງແປກ ແຂວງຊຽງຂວາງວິຣະຊົນແຫ່ງນີ້. ຊີວິດໃນໄວກາງຄົນຂອງຂ້າພະເຈົ້າໄດ້ຜະເຊີນກັບສົງຄາມທີ່ພວກສັດຕູຜູ້ຮຸກຮານກໍ່ຂຶ້ນ ແລະທຳລາຍບ້ານເມືອງຢ່າງຮ້າຍກາດ. ດັ່ງນັ້ນ ຊີວິດຈຶ່ງເຕັມໄປດ້ວຍຂໍ້ຫຍຸ້ງຍາກ ແລະອັນຕະລາຍຫຼາຍປະການ ຈົນບໍ່ສາມາດພັນລະນາໄດ້ ແຕ່ກໍຍັງໂຊກດີທີ່ຕະຫຼອດປອດໄພ ແລະມີອາຍຸໝັ້ນ ຂວັນຍືນຢູ່ນຳລູກ ນຳຫຼານ ນຳບ້ານເມືອງ ມາເຖິງປັດຈຸບັນ, ໄດ້ສຳຜັດກັບບັນຍາກາດ ສັນຕິພາບ ແລະເຫັນບ້ານ ເຫັນເມືອງໄດ້ຮັບການສ້າງສາພັດທະນາໃຫ້ຮຸ່ງເຮືອງສີວິໄລ ຄືດັ່ງເພງຂອງ ສ.ສີເມືອງຊອງ ໄດ້ພັນລະນາວ່າ “

ໄດ້ຫັນຕ່າວມາ ຄືນມາສ້າງສາບ້ານເມືອງອີກໃໝ່
ຄວາມຫວັງໝາຍໄວ້ ກັບກາຍມາ ເປັນຄວາມຈິງ
ບ້ານເກີດຊຽງເຮົາໄດ້ສິ້ນຄວາມເຫງົ້າໄປແລ້ວບາດນີ້
ຊີວິດຊາວຊຽງສຸກຂີຈະບໍ່ໄດ້ໜີໄກຈາກເມືອງຊຽງ (ຄັງວຽງ).....”


ໄດ້ຍິນ ສຽງເພງນີ້ເວລາໃດ ຕົນເອງກໍມີຄວາມຊາບຊຶ້ງໃຈ ດັ່ງຊີວິດຈິງຂອງຄົນຊຽງຂວາງເຮົາແທ້ໆ... ຄຽງຄູ່ກັບການພັດທະນາຊົນນະບົດ ໃຫ້ເປັນຕົວເມືອງເທື່ອລະກ້າວ ຕາມແນວທາງນະໂຍບາຍຂອງພັກ ແລະລັດຖະບານນັ້ນ, ໜຶ່ງໃນການສ້າງສາພັດທະນາໂຄງລ່າງທີ່ສຳຄັນໃນເຂດນີ້ ກໍແມ່ນການສ້າງໂຮງຮຽນອິນແປງ ທີ່ຂ້າພະເຈົ້າເຄີຍສອນ ເຄີຍຮັບຜິດຊອບໃຫ້ກັບຄືນມາຢູ່ໃນສະຖານທີ່ເດີມ ແລະເຕີບໃຫຍ່ຂະຫຍາຍຕົວເພີ່ມອີກຫຼາຍເທົ່າ ສາມາດເວົ້າໄດ້ວ່າ "ເຍົາໄວຂອງພວກເຮົາ ຈະບໍ່ໄດ້ຍ້າຍໄປຮຽນຢູ່ໂຮງຮຽນອື່ນ ທີ່ຢູ່ຫ່າງໄກ ແລະຍ່າງໄປ ແລ່ນໄປຄືແຕ່ກ່ອນອີກແລ້ວ"

ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຕໍ່ການຈັດຕັ້ງທຸກຂັ້ນ ທັງພາກລັດ ແລະສ່ວນບຸກຄົນ ທີ່ໄດ້ເຫັນຄວາມສຳຄັນ ແລະເອົາໃຈໃສ່ພັດທະນາການສຶກສາ ເວົ້າລວມເວົ້າສະເພາະແມ່ນສຸມໃສ່ສ້າງໂຮງຮຽນທຸກລະດັບ ໄວ້ກັບບໍລິເວນອິນແປງແຫ່ງນີ້ ໃຫ້ຮຸ່ງເຮືອງສີວິໄລ ສົມກັບວ່າມີ ພູສາລາໂຕະ, ພູຊ້າງ ແລະພູດາວ ລຽງລາຍຢາຍອ້ອມຢູ່ໃນໂຮງຮຽນແຫ່ງນີ້. ຂໍອວຍພອນ ແກ່ການຈັດຕັ້ງ ແລະຜູ້ມີຈິດໃຈ ຫ່ວງຊົນນະບົດ ຊຶ່ງໄດ້ປະກອບທຶນ ສ້າງໂຮງຮຽນໃຫ້ແກ່ລູກຫຼານ ຈົ່ງມີອາຍຸໝັ້ນຍືນ ມີຄວາມຜາສຸກໃນຊີວິດດ້ວຍເທີ້ນ. ຂໍໃຫ້ການຈັດຕັ້ງ ແລະລູກຫຼານຊາວບ້ານ ໃນເຂດຄັງຄາຍ ກໍຄືບໍລິເວນອິນແປງແຫ່ງນີ້ ຈົ່ງປົກປັກຮັກສາ ສົ່ງເສີມ ແລະຊົມໃຊ້ໂຮງຮຽນ ຂອງພວກເຮົາໃຫ້ເກີດປະໂຫຍດສູງສຸດ.

.....

ທ່ານຄູ ສິທົນ ທິບດາລາ ເປັນຜູ້ໜຶ່ງທີ່ມີບົດບາດສຳຄັນ ຕໍ່ໂຮງຮຽນອິນແປງ ກໍຄືການສຶກສາຂອງລູກຫຼານໃນເຂດນີ້. ພິເສດ ເພິ່ນເປັນຜູ້ເອົາໃຈໃສ່ຊຸກຍູ້ ສົ່ງເສີມການສຶກສາຮ່ຳຮຽນ ຂອງຫຼານສາວ ຜູ້ຊື່ ຄຳເມິງ, ເພາະເພິ່ນຖືວ່າເປັນລູກສາວກົກຂອງຕົນ. ອາດເວົ້າໄດ້ວ່າຫາກບໍ່ມີນ້າບ່າວ ຄູສິທົນ ຫຼານສາວຜູ້ນີ້ອາດຈະບໍ່ໄດ້ຮັບການສຶກສາສູງໄປກວ່າຫ້ອງທີ 3 ກໍເປັນໄດ້.

ທ່ານຄູສິທົນ ທິບດາລາ ບໍ່ພຽງແຕ່ມີບົດບາດສຳຄັນ ໃນດ້ານການສຶກສາ ແລະອະນາຄົດ ຂອງເດັກຊົນນະບົດ ເຂດຄັງວຽງທ່ໍນັ້ນ ແຕ່ເພິ່ນ ແລະພັນລະຍາຍັງປະຕິບັດໜ້າທີ່ໃນການລ້ຽງດູ ແລະສຶກສາອົບຮົມລູກເຕົ້າຈຳນວນ 12 ຄົນໄດ້ຢ່າງປະເສີດ. ພວກລູກໆຂອງຄອບຄົວທິບດາລາ ທຸກຄົນໄດ້ໃຫຍ່ກ້າໜ້າບານ ມີການສຶກສາທີ່ດີ ມີຄູ່ຄອງທີ່ສົມຖານະ ແລະກຽດສັກສີ.



ທັງໄດ້ຮຽນ, ໄດ້ສອນ ແລະໄດ້ຮັບຜິດຊອບ

ທ່ານຄູ ພອນສະໄໝ ວົງພະຈັນ
ເປັນຜູ້ເລົ່າຜ່ານທາງໂທລະສັບ
ນາງຄຳອອນ ເພັດດາວເຮືອງ: ບັນທຶກ
ແລະສັງລວມໂດຍຫຍໍ້

ເພິ່ນໄດ້ເລົ່າຄືນສູ່ຟັງວ່າ: ຂ້ອຍໄດ້ເຂົ້າຮຽນໜັງສື ຢູ່ໂຮງຮຽນອິນແປງນັບແຕ່ຫ້ອງທີຫ້າ (ປ.1) ໃນສົກຮຽນປີ 1949-50 ພໍຈົບຫ້ອງທີ 3 ໃນສົກ 1952-53 ກໍຍ້າຍໄປຮຽນຕໍ່ຫ້ອງທີສອງນ້ອຍ, ຫ້ອງທີສອງໃຫຍ່ ແລະຫ້ອງທີໜຶ່ງ ຢູ່ໂພນສະຫວັນ ແລ້ວໄປເຂົ້າຮຽນຕໍ່ຂັ້ນມັດທະຍົມລະບົບຝຣັ່ງຢູ່ເມືອງຄູນ(College Modern). ຮອດປີທີ 3 ການປະຕິວັດມາປົດປ່ອຍເອົາແຂວງຊຽງຂວາງເປັນເຂດທີ່ໝັ້ນ ຂອງແນວລາວຮັກ ຊາດ ແລະກຳລັງເປັນກາງຮັກຊາດ ຈາກນັ້ນຂ້ອຍກໍສະໝັກໄປຮຽນຕໍ່ວິຊາໄປສະນີ (PTT) ທີ່ສ.ສ. ຫວຽດນາມ ແລ້ວກັບມາຮັບໃຊ້ວຽກງານໃນໄລຍະໜຶ່ງຢູ່ຄັງໄຂ ພໍມີການຜັນແຍກລະຫວ່າງກຳລັງເປັນກາງກອງແລ ແລະ ກຳລັງເປັນກາງຮັກຊາດ ຫຼັງຈາກປັບປຸງການຈັດຕັ້ງຄືນໃໝ່ ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານ ຂ້ອຍໄດ້ໄປຮຽນບຳລຸງວິຊາຄູຢູ່ຄັງໄຂ. ເມື່ອຈົບແລ້ວກໍກັບມາສອນຢູ່ໂຮງຮຽນອິນແປງ ໃນປີ 1964-1970 ຈາກນັ້ນກໍໄດ້ຮັບແຕ່ງຕັ້ງ ໃຫ້ເປັນຫົວໜ້າຫ້ອງການສຶກສາ ປະຈຳຕາແສງຄັງ ຊຶ່ງມາເຖິງເວລານີ້ໂຮງຮຽນອິນແປງໄດ້ເປັນໂຮງຮຽນປະຖົມສົມບູນແລ້ວ ແຕ່ຊ້ຳພັດແມ່ນໄລຍະທີ່ຄວາມດຸເດືອດ ຮຸນແຮງຂອງສົງຄາມໄດ້ເພີ່ມທະວີຂຶ້ນ ໂດຍຝ່າຍວຽງຈັນ ໄດ້ເລີ່ມໃຊ້ຍົນຖິ້ມລະເບີດໃສ່ໂຮງຮຽນ ໂຮງໝໍ ວັດວາອາຮາມ ເຮືອນຊານບ້ານຊ່ອງ ແລະຖະໜົນຫົນທາງທົ່ວແຂວງຊຽງຂວາງ

ເມື່ອໂຮງຮຽນແລະແຫ່ງຕ່າງໆຖືກທຳລາຍ ຂ້ອຍກໍໄດ້ນຳພານັກຮຽນ ໄປຮຽນຢູ່ຫ້ວຍ ຢູ່ຮ່ອງ ຢູ່ປ່າຢູ່ດົງ ໄປບ່ອນໃດ ກໍຂຸດຂຸມລີ້ໄພຢູ່ບ່ອນນັ້ນ. ເມື່ອຢູ່ໄປໄລຍະໜຶ່ງ ແລ້ວກໍຕ້ອງໄດ້ປ່ຽນໄປບ່ອນໃໝ່ ເພາະຢ້ານເສຍລັບ. ບໍ່ພຽງແຕ່ຮຽນ-ສອນເທົ່ານັ້ນເມື່ອອ້າຍນ້ອງທະຫານຂາດເຂີນສະບຽງອາຫານກໍໄດ້ແບ່ງກັນໄປລຳລຽງສະບຽງໃຫ້ແກ່ກອງທັບ...ການຮຽນໄລຍະນີ້ ບໍ່ມີຕັ່ງນັ່ງ ບໍ່ມີໂຕະຮອງຂຽນອີກ ມີແຕ່ນັ່ງອີງຕົ້ນໄມ້ໃນປ່າເລິກດົງໜາ ຫຼືອີງຢູ່ຂຸມ ຫຼືປາກຂຸມຫຼົບໄພ,ໃຊ້ຫົວເຂົ່າ ຫຼືເອົາເປ້(ບາໂລ)ພາດໃສ່ສອງຂາເພື່ອເປັນໂຕະ ແລ້ວກໍຂຽນໜັງສື...ຄວາມຮ້າຍກາດຂອງສົງຄາມທີ່ຈັກກະພັດຜູ້ຮຸກຮານ ແລະພວກລູກມືໄດ້ກໍ່ຂຶ້ນນັ້ນ ບໍ່ສາມາດພັນລະນາບັນຍັດໄດ້ ...

*(ສະເໜີນຳທ່ານຜູ້ອ່ານ ຈົ່ງຕິດຕາມໃນ **ປຶ້ມປະຫວັດມູນເຊື້ອການສຶກສາໃນ ຂົງເຂດຍອດງຶ່ມ ແລະຄ້ຽວຮາ (ອິນແປງ)** ທີ່ເລົ່າໂດຍ ທ່ານຄູ ຄຳພວງ ດາລາແສນ ແລະບັນທຶກໂດຍອາຈານ ຄຳແກ້ວ ພິມມະສອນ ຈາກນັ້ນ ຜູ້ອ່ານຈະເຂົ້າໃຈວ່າ ສະພາບ ການຮຽນການສອນໃນປາງສົງຄາມ ຈະມີຄວາມຫຍຸ້ງຍາກ ລຳບາກພຽງໃດ)*

ເພິ່ນໄດ້ຍ້ຳວ່າ: "ຂ້ອຍໂຊກດີ ທີ່ໄດ້ມີຊີວິດມາເຖິງ ໄລຍະສັນຕິພາບ, ມີໂອກາດ ໄດ້ເຫັນຄວາມຈະເລີນຮຸ່ງເຮືອງ ຂອງບ້ານເມືອງ ໄດ້ເຫັນການພັດທະນາໂຄງຮ່າງພື້ນ ຖານ ກໍຄືການຂະຫຍາຍການສຶກສາໄປສູ່ຊົນນະບົດ ສ້າງຊັບພະຍາກອນມະນຸດ ເວົ້າລວມ ໂດຍສະເພາະແມ່ນໂຮງຮຽນອິນແປງ ໄດ້ຮັບການພັດທະນາໃຫ້ເຕີບໃຫຍ່ຂະ ຫຍາຍຕົວ ຈາກປີ 1949 ເລີ່ມແຕ່ມີໜໍ່ແໜງ ຂອງໂຮງຮຽນຈາກເຄິ່ງໝວດ ມາເປັນ ປະຖົມສົມບູນ, ຈາກມັດທະຍົມຕົ້ນກາຍໄປມີມັດທະຍົມປາຍ ແລະມັດທະຍົມສົມບູນ ຂອງເຂດຄ້ຽວຮາ. ນີ້ແມ່ນຄວາມລະອຽດລະອ້ຽວ, ນີ້ແມ່ນຄວາມເຕີບໃຫຍ່ເຂັ້ມແຂງ ກ້າວໜ້າ ຂອງວຽກງານການສຶກສາ, ການເຕີບໃຫຍ່ຂະຫຍາຍຕົວອັນເປັນມູນເຊື້ອນີ້ ນອກຈາກທິດທາງແຜນການຂອງຂັ້ນເທິງແລ້ວ, ພິເສດກໍແມ່ນຄວາມຈົດຈໍ່ ຕໍ່ເຕີມ ດ້ວຍຄວາມຕັ້ງໃຈ ຂອງຄອບຄົວໃຫຍ່ ວໍລະຈິດ ທີ່ໄດ້ລະດົມທຶນມາຊ່ວຍ ແລ້ວຊ່ວຍຕື່ມ ຈົນມາຮອດມື້ນີ້ ກໍຖືວ່າເປັນຜົນງານທີ່ໜ້າພາກພູມໃຈ ຂອງປະຊາຊົນ ແລະລູກຫຼານ ຊາວບ້ານໄດ້ຊື່ນຊົມ ແລະໄດ້ຮັບອານິສົງເຫຼົ່ານີ້ ໃຫ້ເປັນມູນມໍລະດົກຕົກທອດ ໄປສູ່ເສັ້ນ ລູກເສັ້ນຫຼານຕໍ່ໄປທາງໜ້າ

ຂ້ອຍໃນນາມ ຜູ້ທັງໄດ້ຮຽນ, ໄດ້ສອນ ແລະໄດ້ຮັບຜິດຊອບ ຂໍຮຽກຮ້ອງການ ຈັດຕັ້ງທຸກຂັ້ນ, ພ້ອມພໍ່ແມ່ປະຊາຊົນ ຄູອາຈານ ແລະລູກຫຼານນັກຮຽນທຸກໆຄົນ ທຸກຮຸ່ນ ຈົ່ງພ້ອມກັນປົກປັກຮັກສາ ບູລະນະ ແລະນຳໃຊ້ໃຫ້ເກີດປະໂຫຍດ ອັນສູງສົ່ງ ໄປພ້ອມໆກັບການຮັກສາມູນເຊື້ອຂອງໂຮງຮຽນ ຮັກສາສິ່ງແວດລ້ອມ, ຮັກສາ ແລະສົ່ງ ເສີມຮີດຄອງປະເພນີອັນດີງາມ ຂອງທ້ອງຖິ່ນ ຂອງຊາດລາວ, ສ້າງຕົນເອງໃຫ້ເປັນຄົນ ດີຮອບດ້ານຂອງພໍ່ແມ່ ຂອງປະເທດຊາດບ້ານເມືອງ..."

ທ່ານຄູພອນສະໄໝ ວົງພະຈັນ

ແມ່ນໜຶ່ງໃນຈຳນວນນັກຮຽນຮຸ່ນທຳອິດຂອງ ໂຮງຮຽນປະຖົມສຶກສາ ອິນແປງ. ຕໍ່ມາເມື່ອໄດ້ເປັນຄູ ເພິ່ນກໍໄດ້ກັບມາສອນຢູ່ໂຮງຮຽນນີ້, ແລະເມື່ອໄດ້ເລື່ອນຕຳແໜ່ງຂຶ້ນ ເປັນຫົວໜ້າຫ້ອງການສຶກສາຕາແສງຄັງ ກໍໄດ້ຮັບຜິດຊອບຕໍ່ໂຮງຮຽນນີ້. ເພິ່ນໄດ້ສູ້ຊົນ ດຳລົງຊີວິດ ແລະປະຕິບັດໜ້າທີ່ສິດສອນ ແລະຮັບຜິດຊອບວຽກງານສຶກສາໃນເຂດນີ້. ທ່າມກາງຄວາມຫຍຸ້ງຍາກລຳບາກ ລະອຽດລະອ້ຽວ ດຸເດືອດເປັນຕາຍ. ເພິ່ນໄດ້ເຫັນໂຮງ ຮຽນຖືກທຳລາຍເຜົ້າຜານຢ່າງຮາບກ້ຽງ ດ້ວຍລູກລະເບີດທີ່ຖອກເທລົງມາຈາກຍົນ ຂອງໂຈນອາກາດຜູ້ຮຸກຮານ. ສົງຄາມໃກ້ຈະຍຸຕິ ແຕ່ລູກຊາຍນ້ອຍ ແລະເມຍທີ່ແສນຮັກ ຂອງເພິ່ນໄດ້ເສຍຊີວິດພ້ອມກັນໃນປີ 1972 ຍ້ອນລະເບີດໂບມບີແຕກໃສ່ ຂະນະທີ່ທຳ ການຂຸດດິນເພື່ອເພີ່ມພູນຜະລິດຜົນ.

ເວລານັ້ນ ເພິ່ນພວມເຂົ້າຮ່ວມກອງປະຊຸມ ຜູ້ຮັບການສຶກສາທົ່ວເຂດປົດປ່ອຍທີ່ຊຳເໜືອ ແຂວງຫົວພັນ. ທ່ານຄູ ບໍ່ສາມາດກັບຄືນມາຫາເມຍ ແລະລູກໄດ້ໃນທັນທີ ຍ້ອນວ່າ ເວລານັ້ນການເດີນທາງ ມີຄວາມລຳບາກຫຼາຍ ທັງພາຫະນະ ແລະເສັ້ນທາງ. ເຖິງວ່າຈະເສົ້າໂສກເສຍໃຈ ກັບການສູນເສຍລູກຊາຍ ແລະເມຍທີ່ຮັກນັ້ນ, ທ່ານຄູ ກໍສຸດແສນຊາບຊຶ້ງ ແລະຈົດຈຳ ສຳນຶກໃນບຸນຄຸນຂອງບຸກຄົນ ແລະຂອງການຈັດຕັ້ງເປັນຢ່າງສູງໂດຍສະເພາະແມ່ນ ທ່ານຄູສີພາ ສໍລາງກູນ ຜູ້ອຳນວຍການໂຮງຮຽນສ້າງຄູແຂວງຊຽງຂວາງ ແລະປ້າຄຳຈັນ ສໍລາງກູນ ແພດປະຈຳໂຮງຮຽນດັ່ງກ່າວພ້ອມດ້ວຍຄູອາຈານ ນັກຮຽນສ້າງຄູ ເພື່ອນມິດ ແລະການຈັດຕັ້ງ ທີ່ໄດ້ພ້ອມກັນເປັນຜູ້ຮັບພາລະທຳການຊາປະນະກິດສົບເມຍ ແລະລູກເປັນຢ່າງດີ .

ຜົນງານ ແລະຄວາມສູນເສຍຄັ້ງຍິ່ງໃຫຍ່ໃນຊີວິດຂອງເພິ່ນບໍ່ສາມາດຈະພັນລະນາ ໃນບົດນີ້ໄດ້. ຖ້າມີໂອກາດເພິ່ນຢາກເລົ່າຄືນ ເຖິງການເຄື່ອນໄຫວເຮັດວຽກງານໃນຖານະຊີວິດຄູ ລວມທັງຄວາມຮັກ ຄວາມອົບອຸ່ນຂອງຄອບຄົວ,ພ້ອມທັງພັນລະນາໃຫ້ຮູ້ຄວາມເສົ້າໂສກເສຍໃຈໃນການສູນເສຍຄົນທີ່ຕົນຮັກ ດັ່ງແກ້ວຕາ ແລະດວງໃຈຊຶ່ງບໍ່ມີຜູ້ໃດຈະພັນລະນາແທນໄດ້ເພື່ອຈະໄດ້ຮູ້ວ່າ "ນີ້ແຫຼະຜົນຮ້າຍຂອງສົງຄາມ" ທີ່ຂ້ອຍໄດ້ຮັບ.





ໂຮງຮຽນອິນແປງ - ຄັງທາດ ໃນຄວາມຊົງຈຳ

.....

ອາຈານ ບຸນຍໍ ວັນທະຈັກ
ນັກຮຽນປີ 1954-57

ໂຮງຮຽນອິນແປງ ຫຼື ຊື່ໜຶ່ງເອີ້ນກັນວ່າ ໂຮງຮຽນຄັງທາດ ເພາະມີທາດຕັ້ງຢູ່ໃກ້. ທາດດັ່ງກ່າວ ມີມາແຕ່ບູຮານນະການ. ໂຮງຮຽນອິນແປງຕັ້ງຢູ່ເປັນພູພຽງແຫ່ງໜຶ່ງ ໃນເຂດບ້ານທາດ ຄັງວຽງ ປຸ່ງປັນ ໝ້ຽງຫງັນ ນາລາມ ແລະໄຜ່ງຳ

ທິດຕາເວັນອອກ ມີພູດາວ ແລະສາຍນ້ຳທູມ, ທິດຕາເວັນຕົກມີປຸ່ງເກືອ, ທິດໃຕ້ ມີທາດເກົ່າແກ່ທີ່ຖືກສ້າງໄວ້ແຕ່ປະຖົມບູຮານ, ທິດເໜືອມີພູສາລາໂຕະທີ່ຂຽວອຸ່ມທຸ່ມ ສວຍງາມດ້ວຍປ່າໄມ້ແປກ ແລະໄມ້ຮົ້ງ. ສະຖານທີ່ແຫ່ງນີ້ ມີຄັງຮາບພຽງສວຍງາມດີ ອາກາດເຢັນສະບາຍ

ໂຮງຮຽນລາດອິນແປງ ຕັ້ງຢູ່ຈຸດໃຈກາງຂອງພູພຽງ ແລະຄັງທີ່ຮາບພຽງ ມີເສັ້ນທາງຜ່ານເຊື່ອມຕໍ່ລະຫວ່າງບ້ານຕໍ່ບ້ານ ແຕ່ທິດຕາເວັນອອກ ຫາທິດຕາເວັນຕົກມີເສັ້ນທາງແຕ່ໄຜ່ງຳ ໄປຫາບ້ານປຸ່ງປັນ ແລະບ້ານສີຄູນ ທິດໃຕ້ຫາທິດເໜືອ ມີເສັ້ນທາງແຕ່ບ້ານທາດຄັງວຽງ ຫາບ້ານນາສັ້ງ ບ້ານລາວ-ໂພນທອງ ທິດຕາເວັນຕົກສ່ຽງໃຕ້ ມີເສັ້ນທາງ ແຕ່ບ້ານໝ້ຽງ ຫາບ້ານຄັງວຽງ ແລະປຸ່ງປັນ

ຈຸດພິເສດ ຂອງໂຮງຮຽນນີ້ແມ່ນມີມີບວກໜຶ່ງຊື່ "ບວກຊ້າງ". ຊື່ນີ້ເອີ້ນກັນມາແຕ່ປະຖົມບູຮານ ປັດຈຸບັນ ບວກນີ້ກາຍເປັນບ່ອນເຕົ້າໂຮມ ເພື່ອຫຼິ້ນມ່ວນຊື່ນ ຂອງໝູ່ນັກຮຽນນຳກັນ ໂດຍການທີ່ນັກຮຽນໄດ້ນຳເອົາກາບລາງໄມ້ລວງມານັ່ງຕະລູດລົງຝັ່ງບວກຊ້າງ ບາງຄົນກໍນັ່ງຕາມແຄມບວກຊ້າງ

ເດີ່ນຂອງໂຮງຮຽນມີຕົ້ນໄມ້ທີ່ໃຫ້ຄວາມຮົ່ມເຢັນຄື: ແຈຂອງໂຮງຮຽນທາງທິດຕາເວັນອອກ ມີຕົ້ນຈອງຄວາຍ, ຕົ້ນເກັນ,ຕົ້ນໜາມກາ, ຕົ້ນສາລີ້ມແລະເຄືອຕ້າງຕໍ່ເກີດກ້ຽວກັນລົງເປັນຟຸ່ມໃຫຍ່ມີຮົ່ມເຢັນ ໝູ່ນັກຮຽນບ້ານຫ້ອຍ ມັກພາກັນມານັ່ງກິນເຂົ້າທ່ຽງ ແລະພັກຜ່ອນຢູ່ທີ່ນີ້ເປັນປະຈຳ.

ຢູ່ແຈໂຮງຮຽນທິດໄປຄັງວຽງ ບ້ານປຸ່ງປັນ ບ້ານສີຄູນ ມີຕົ້ນໝັ້ນເຖືອນ ຫ້າຕົ້ນ ອອກດອກຈົບງາມເອ້ປະດັບເປັນຮົ່ມເຢັນໃຫ້ແກ່ໂຮງຮຽນ. ພິເສດມີຕະຫຼາດທີ່ເປັນບ່ອນຊື້-ຂາຍ ແລກປ່ຽນສິນຄ້າຂອງປະຊາຊົນເອີ້ນວ່າ: ລາດອິນແປງ ຫຼື ຕະຫຼາດຄັງທາດ.

ຈຳນວນນາຍຄູສອນ ໃນໂຮງຮຽນອິນແປງສົກປີ 1954-57 ມີ: ທ່ານຄູ ຄຳກອງ ບ້ານແກ້ງກອກ ເມືອງຈຳພອນ ແຂວງສະຫວັນນະເຂດ, ທ່ານຄູພິມພາ, ບ້ານຫາດກ້ຽງ ເມືອງທຸລະຄົມ ແຂວງວຽງຈັນ, ທ່ານຄູ ຄຳກອງ ບ້ານເມືອງເສງ, ຕາແສງທ້າຍ ເມືອງແປກ ແຂວງຊຽງຂວາງ, ທ່ານຄູ ສີທົນ ນາງົ້ວ ບ້ານປຸ່ງປັນຕາແສງຄັງ ເມືອງແປກ ແຂວງຊຽງຂວາງ

ນັກຮຽນ ໂຮງຮຽນອິນແປງ 1954 - 57
1.ບ້ານ ສີຄູນມີ: ນາງ ຄຳເມິງ, ນາງທອງສີ, ທ້າວ ບຸນມາ, ທ້າວຄຳປ່ຽງ.

2. ບ້ານປຸ່ງປັນມີ : ທ້າວ ຫຼ້າ ສິງດາລາ, ທ້າວຫຼ້າ ສິງວິໄລ, ທ້າວ ຫຼ້າຫຼ້ີ, ທ້າວ ຫຼ້າກາງນັງ, ທ້າວຫຼ້າ ໂງກເງັກ, ທ້າວໂກ້, ນາງ ອູມ, ນາງຕຸ້ຍ

3. ບ້ານຫາດຄັງວຽງມີ: ທ້າວ ຫຼ ບຸນມາ, ທ້າວເພັດ, ທ້າວພັດ, ທ້າວ ຄຳບານ, ທ້າວຫຼ້າຫຼ້ືມ, ທ້າວຫຼ້າ ວັນຄຳ, ທ້າວ ບຸນເຕັມ, ທ້າວ ພິມພາ(ຄັງເນີ), ທ້າວເປີ້ນ (ຄັງເໜືອ), ທ້າວ ດ້ວງ (ຄັງເຫນືອ), ທ້າວ ພົມມີ (ກ້ັງ), ທ້າວ ບົວພັນ, ນາງ ບຸນຮົມ, ນາງ ສຸດສະດີ

4. ບ້ານໄຜ່ງຳມີ: ນາງໂຕ, ນາງພາ (ເຮືອນພະຊາຍ), ນາງ ສີທົນ, ນາງ. ຄຳປ້ອງ, ນາງ ອຳພາ, ນາງ ນວນສີ, ທ້າວ ວຽງຄຳ, ທ້າວ ເພ້ (ບ້ານບົວ), ນາງທັນດາ(ບ້ານບົວ), ທ້າວ ສາລີ, ທ້າວບົວຈັນ (ນາດີ) ທ້າວນົນສະຫວັດ

5. ນາຊ້ົງ - ໂພນທອງ ບ້ານລາວມີ: ທ້າວ ບົວພັນ, ທາວຮຽວຂ້ົງ (ນາແອະ), ທ້າວ ຜ້ົງ, ທ້າວ ເຮືອງ, ທ້າວ ແອນ້ອຍ, ທ້າວ ແອໃຫຍ່

6. ບ້ານໝ້ຽງນາດອນ ບ້ານນາລາມມີ: ທ້າວ ບຸນຍໍ ພິມະຈັກ, ທ້າວ ສົມລິດ, ທ້າວ ໂສວັນ, ທ້າວ ບຸນຕາ, ທ້າວ ດາ, ທ້າວ ເກ້ົາ, ທ້າວ ນົນ, ທ້າວ ຄຳດີ

ເປັນເວລາ ໃນ 50 ກວ່າປີແລ້ວ ທີ່ໂຮງຮຽນອິນແປງໄດ້ຮັບການສ້າງຂ້ຶນ ແລະ ອາຄານຮຽນຫຼັງເກ່ົາໄດ້ຖືກແປວໄພແຫ່ງສົງຄາມທຳລາຍເຜົາຜານໄປແລ້ວໄດ້ຮັບການ ສ້າງຂ້ຶນມາໃໝ່ ແລະພັດທະນາເປັນລຳດັບມາໃນຍາມສັນຕິພາບ ແຕ່ຂ້າພະເຈ້ົາຍັງ ຈາລຶກນຶກເຖິງຈົດຈຳບ່ໍລືມເລືອນ ບ່ອນທ່ີໄດ້ຮັບຄວາມຮູ້ຈາກຄູອາຈານຄັ້ງທຳອິດໃນ ຊີວິດ ແລະຄວາມເບີກບານມ່ວນຊ່ືນ ກັບໝູ່ເພ່ືອນຮຸ່ນຮາວຄາວດຽວກັນ ຮຸ່ນອ້າຍ ຮຸ່ນນ້ອງໆ ໃນທ້ອງຖ່ິນອິນແປງ ຍັງຝັງໃຈຂອງຕົນຕະຫຼອດມາ ແລະຕະຫຼອດໄປ.

ຂໍຂອບໃຈຢ່າງສູງສົ່ງ ນຳທ່ານຜູ້ມີໃຈບຸນທັງຫຼາຍ ທີ່ໄດ້ບໍລິຈາກຊັບສິນ ສັບພະສິ່ງທັງປວງ ມາຊ່ວຍພັດທະນາໂຮງຮຽນອິນແປງຂອງພວກຂ້າພະເຈົ້າ ໃຫ້ເຕີບໃຫຍ່ຂະຫຍາຍ ຕ໊ວຕາມແຜນພັດທະນາ ເສດຖະກິດ- ສັງຄົມ ຂອງຊາດ ແລະຂໍອວຍພອນໄຊອັນປະເສີດ ຈົ່ງເກີດມີແກ່ທ່ານຜູ້ມີຄວາມເຫຼື້ອມໃສໃນການພັດທະນາຄັ້ງນີ້ດ້ວຍ.

ອັນໜຶ່ງ ຂໍຮຽກຮ້ອງເພື່ອນມິດ ສິດສານຸສິດທັງຫຼາຍທີ່ຍັງມີຊີວິດຢູ່ ທັງຜູ້ຢູ່ໃກ້ ແລະຢູ່ໄກ ຈົ່ງຫັນໜ້າຄືນມາສູ່ໂຮງຮຽນ ອິນແປງຂອງພວກເຮົາ ດ້ວຍຄວາມພາກພູມໃຈ ແລະຍິ້ມແຍ້ມແຈ່ມໃສ ເພື່ອຮ່ວມຊື່ນຊົມຍິນດີ ເປັນສັກຂີພະຍານວ່າ ແສງສະຫວ່າງຂອງການສຶກສາທີ່ຮຸ່ງພົ້ນຮຽງໆ ເໝືອນແສງຫິ່ງຫ້ອຍໃນເມື່ອກ່ອນ ມາເຖິງບັດນີ້ ເວົ້າລວມໄດ້ກາຍເປັນທ່ວນໄຟ ທີ່ສະຫວ່າງສະໄຫວໄປທົ່ວດິນແດນພູພຽງ ປ່າແປກເມືອງພວນ ເວົ້າສະເພາະແມ່ນເຮືອເຮືອງເຫຼືອງເຫຼື້ອມ ປະດັບເອ້ເຂດຄັງຄາຍ ຢາຍໄປຕາມຖະໜົນ ໜອງເປັດ - ລາດບວກແລ້ວ.



ຮູບນີ້ຄື ສະພາບບວກຊ້າງ ທີ່ຍັງເຫຼືອຢູ່ໃນປັດຈຸບັນ



ຂອງຂວັນຈາກໃຈ ມອບແດ່ ອັນຄູ 7 ຕຸລາ

.....

ດອກໄມ້ປ່າ

ຕັ້ງແຕ່ນ້ອຍ ເຂົ້າຮຽນໃໝ່ທຳອິດ
ຢູ່ໂຮງຮຽນອິນແປງ ຟາກພູເທິງບ້ານ
ຮຽນຢູ່ຫ້ອງທີຫ້າ ຮຽນນຳນາຍຄູປ່ອງ
ເພິ່ນສິດສອນຖືກຕ້ອງ ຄູນ້ອງຊ່າງດີ ແທ້ນໍ ?

ຈັບມືຂຽນຂີດແຕ້ມ ເຝິກແອບໃຫ້ຂຽນງາມ
ຂຽນໄປຕາມບັນທັດ ທີ່ພິມໃນປຶ້ມ
ຂອດຫົວພ້ອມ ປາຍຫາງບໍ່ໃຫ້ລົ່ນ
ຄູກຳນົດບອກເລື້ອຍ ຍັງຈຳໄດ້ທຸກວັນ ນີ້ແລ້ວ

ຖັດຈາກນັ້ນອ້າຍຄູແກ້ວ ສອນຕໍ່ປີທີສອງ
ນັກຮຽນປອງດອງກັນ ຮັກແພງອ້າຍຄູແກ້ວ
ເພິ່ນແມ່ນຄົນສູຍພຸ້ນ ມາຮຽນແລ້ວສອນຕໍ່
ຂໍໃຫ້ຄູຈົ່ງໄດ້ ສະບາຍບ້າງຢູ່ສະຫວັນ ພຸ້ນທ້ອນ

ປີທີສາມຈົ່ງໄດ້ ຮຽນນຳນ້າບ່າວສີທົນ
ເພິ່ນໄດ້ພຽນສິດສອນ ທຸກຄົນບໍ່ມີຮ້າຍ
ນາຍຄູ ຫອມຫວນໃຫ້ ມີວິໄນຢ່າງເຂັ້ມງວດ
ເພິ່ນກວດຂັນໝູ່ນ້ອງໆ ໃຫ້ຮຽນຮູ້ຊູ່ຄົນ

ຄູສີທົນແມ່ນຄູກັບບ້ານ ຄັ້ງອຽງບ້ານປຸ່ງ ເຮົານີ້
ເພິ່ນເປັນຄົນຖິ່ນນີ້ ຊາວບ້ານຮັກແພງ ແທ້ນາ
ຄູທອງຄູທົນນີ້ ຈິ່ງໃຈໄດ້ຊົດຊ່ອຍ
ຂ້ອຍຈົ່ງຮຽນເກັ່ງຂຶ້ນ ເພາະມີນ້ຳເບິ່ງແຍງ ແທ້ແລ້ວ



ຮຽນຈົບປີສາມແລ້ວ ເລີຍຮຽນຕໍ່ນຳຄູພວາ
ຢູ່ບ້ານຄາຍ - ຄັງມອນ ເລີ່ມຮຽນຫ້ອງທີສອງນ້ອຍ
ເພິ່ນອີດຕົນຂ້ອຍ ເປັນຍິງແລ້ວຮຽນເກັ່ງ
ທັງຍ່າງໄກອີກດ້ວຍ ຄູພວາຍ້ອງຢູ່ສະເໝີ

ນັບແຕ່ບ້ານຂອງຂ້ອຍ ໄປຮອດໂຮງຮຽນ
ຫ້າຫົກຫຼັກໄກສົມຄວນ ແຕ່ຢາກຮຽນຄວາມຮູ້
ກໍຫາກມີບາງຄັ້ງ ຕົນເອງກໍຄ່ອຍຍ່າງ
ຮອດຫົນທາງຄົດໂງ້ງ ຕົວຂ້ອຍກໍແລ່ນເອົາ ພີ່ນ້ອງເອີຍ

ນອກຈາກ ຄຸນພໍ່ແມ່ຜູ້ບັງເກີດເກົ້າ ຂໍນົບນອບຄຸນຄູ
ຜູ້ສິດສອນວິຊາ ສາຕະສິນຄວາມຮູ້
ຈຶ່ງໄດ້ມີພະລັງສູ້ ໄພສົງຄາມກໍພົ້ນຜ່ານ
ຊີວິດ ແລະການງານກໍຈຶ່ງໄດ້ ມາເຖິງເທົ້າທຸກວັນ ນີ້ແລ້ວ

ຄຸນພໍ່ ຄຸນແມ່ເອີຍ ! ຄຸນຄູເອີຍ ! ຂໍຍົກໃສ່ເກົ້າ ເທົ້າຊົ່ວສຸດຊີວັງ
ຂໍຈົດຈຳຈາລຶກ ໃສ່ໃຈຖະໜອມໄວ້
ຂໍເປັນຄົນດີໃຫ້ ຜືນແຜ່ນດິນຖິ່ນກຳເນີດ
ຂໍອຸທິດຕົນມອບໃຫ້ ສັງຄົມໄດ້ຢູ່ສະບາຍ ອ້າຍຄູເອີຍ

ห้ามจำ



ໂຮງຮຽນຂອງຂ້ອຍ

.....

ເດັກໄລ່ຕໍ່

ຕັ້ງແຕ່ກໍ່ເພິ່ນເລົ່າກັນມາ
ເປັນເວລາຫ້າສິບປີກ່ອນ
ນີ້ແມ່ນບ່ອນມູນເຊື້ອໂຮງຮຽນ
ເພິ່ນໄດ້ຂຽນປະຫວັດໄວ້ວ່າ
ງາມສະຫງ່າໂຮງຮຽນອິນແປງ
ເຊົ້າ ແລະ ແລງນັກຮຽນປັດກວາດ
ດັງຊວາດໆ ໃຊ້ຕາດໄມ້ງາມ
ໃຜກໍ່ຕາມ ຊ່າລືດັງກ້ອງ
ໂຮງຮຽນນ້ອງຢູ່ລາດອິນແປງ
ຖ້ອຍຖະແຫຼງ ດັງວຽງກໍ່ແມ່ນ
ມັນເປັນແທ່ນສະອາດງາມຕາ
ຄົນໄປມາ ໃຜກໍ່ຢາກແວ່
ຜູ້ເຖົ້າແກ່ ມານັ່ງຊົມວິວ
ທຸງຊາດປິວ ສະບັດປິ່ນເປີ້ອງ
ມັນເປັນເລື່ອງ ຈັບອົກຈັບໃຈ
ໃຜຢູ່ໄກ ຫວນມາຢາມແດ່ !!!
ຫວນເມືອຢາມແດ່ !!!



ຂ້ອຍຮັກໂຮງຮຽນ

.....

ຜູ້ນ້ອຍກາງຄັງ

ໂຮງຮຽນຂ້ອຍ ຫຼັງນ້ອຍໆມີຮອດ ປ. 3
ມັນບໍ່ງາມ ກໍຕາມ ກໍຊ່າງ
ແຈ້ງຈ່າງປ່າງ ບໍ່ມີຝາບັງ
ສຽງດັງດັງ ລົມພັດປ່າແປກ
ສຽງມັນແຕກ ເປັນສຽງດົນຕີ
ມ່ວນອີ່ຫຼີ ເວລາເລີກຫຼິ້ນ
ສຽງອ້ອຍອິ່ນ ຍາມແລ່ນຈັບກັນ
ສິ່ງສຳຄັນ ພາກັນທ່ອງໄດ້
ປົດໃຫຍ່ໃຫຍ່ ລູລີ່ ລູລີເຂົ້າສາມ
ລູລາມ ລູລາມ ເຂົ້າເປືອກ
ຝູງເດັກນ້ອຍ ຕາເຫຼືອກຕາລານ
ໃຜມາພານ ຈັບເອົາໃຫ້ໄດ້...
ໂຮ ຮິ່ວ ໆລໆ



ບັນຊີ ລາຍຊື່ ຜູ້ປະກອບທຶນສ້າງອາຄານຮຽນມັດທະຍົມສົມບຸນອິນແປງ

ລດ	ຊື່ ແລະນາມສະກຸນ	ຈຳນວນເງິນກີບ
1	ບໍລິສັດ ຊິໂນ ໄຮ ໂຮ	246,000,000
2	ທ່ານຄຽງ ສິດທິເດດ ແລະ ນາງ ລີຊິງ	242,250,000
3	ທ່ານ ຄຳມະນີ ແລະນາງມະນີວັນ ອິນທິລາດ ພ້ອມຄອບຄົວ	205,000,000
4	ທ່ານ ບຸນມາ ແລະ ນາງ ປະທຸມພອນ ເພັດສາວົງ	173,790,000
5	ທ່ານ ແສງລາຕີ ແລະ ນາງລັດດາວອນ ສະຫວັນຄຳ	100,000,000
6	ທ່ານ ພົງສະຫວັນ ພົງສີແກ້ວ ພ້ອມດ້ວຍຄອບຄົວ	100,000,000
7	ທ່ານ ພູວຽງ ນາງ ອາມົງລັກ ພົງສະຫວັດ ພ້ອມດ້ວຍຄອບຄົວ	91,790,000
8	ທ່ານ ຕຸລາໄຊ ວໍລະຈິດ (ບໍລິສັດ ດາວສະຫວັນ)	82,000,000
9	ນາງ ມະນີວອນ ວິລະວົງ ພ້ອມດ້ວຍຄອບຄົວ	82,000,000
10	ທ່ານ ຢາວປົນ ພ້ອມດ້ວຍຄອບຄົວ	82,000,000
11	ທ່ານຈາວເຫວີຍ ແລະ ນາງມາຊູອີ	82.000.000
12	ນາງ ບົວໄພລິນ ສຸຂະວົງ ພ້ອມດ້ວຍຄອບຄົວ	50,000,000
13	ທ່ານ ຈານທອງ (ບໍລິສັດ ບໍ່ທອງ) ພ້ອມດ້ວຍຄອບຄົວ	50,000,000
14	ທ່ານ ຫວັດ ພ້ອມດ້ວຍຄອບຄົວ	41,000,000
15	ທ່ານ ສີສົມພູ ນັນທະພອນ ພ້ອມດ້ວຍຄອບຄົວ	30,000,000
16	ນາງ ບົວທາ ຂັດທິຍະ ພ້ອມຄອບຄົວ	25,000,000
17	ທ່ານ ພົນຈັດຕະວາ ວິໄສ ຈັນທະມາດ ພ້ອມດ້ວຍຄອບຄົວ	20,000,000
18	ນາງ ປ່ອກ ວົງວິຈິດ ພ້ອມດ້ວຍຄອບຄົວ	20,000,000
19	ທ່ານ ຄຳໄຜ່ (ບໍລິສັດຄຳໄຜ່ຊະນະກໍ່ສ້າງ) ພ້ອມດ້ວຍຄອບຄົວ	20,000,000
20	ບໍລິສັດ ເຫຼັກກ້າ ຊິງເວີ	16,400,000
21	ທ່ານ ສົມວັນດີ ນາຖາວົງ ພ້ອມດ້ວຍຄອບຄົວ	15,000,000
22	ທ່ານ ຄຳແພງ ດວງພະຈັນ ພ້ອມດ້ວຍຄອບຄົວ	10,000,000
23	ທ່ານ ສົມໝາຍ (ບໍລິສັດກໍ່ສ້າງ ອຸດົມໄຊ) ພ້ອມດ້ວຍຄອບຄົວ	10,000,000
24	ນາງ ກົງຈັນ (ບໍລິສັດກໍ່ສ້າງ ແພງລຳພັນ) ພ້ອມດ້ວຍຄອບຄົວ	10,000,000
25	ນາງ ບົວໄຫຼ ຈິດມະນີ ພ້ອມດ້ວຍຄອບຄົວ	10,000,000

26	ນາງ ດອກແກ້ວ ດາລາວົງ ພ້ອມດ້ວຍຄອບຄົວ	10,000,000
27	ນາງ ດວງຕາ ມາດມະນີສອນ ພ້ອມດ້ວຍຄອບຄົວ	10,000,000
28	ນາງ ມະນີວອນ ອ່ອນພະຈັນ ພ້ອມດ້ວຍຄອບຄົວ	10,000,000
29	ນາງ ທູນສະຫວັນ ພ້ອມດ້ວຍຄອບຄົວ	10,000,000
30	ທ່ານ ຄຳປະສິດ ແລະ ນາງລັດປະໄພ ເທບພະວົງສາ	10,000,000
31	ທ່ານ ສຸພາມິດ ບຸນລາວົງ ພ້ອມດ້ວຍຄອບຄົວ	10,000,000
32	ທ່ານ ຈັນສອນ ແສນບຸດຕະລາດ ພ້ອມດ້ວຍຄອບຄົວ	8,200,000
33	ທ່ານ ຫຼ້າ ສີງດາລາ ພ້ອມດ້ວຍຄອບຄົວ	5,000,000
34	ນາງ ຈັນທອນ ມັງໜ່ໍເມກ ພ້ອມດ້ວຍຄອບຄົວ	5,000,000
35	ທ່ານ ຄຳຈັນ ວິລະຈິດ ພ້ອມດ້ວຍຄອບຄົວ	5,000,000
36	ທ່ານ ສົດວິໄລ ວິລະຈິດ ພ້ອມດ້ວຍຄອບຄົວ	5,000,000
37	ທ່ານ ບົວຜັນ ພ້ອມດ້ວຍຄອບຄົວ	5,000,000
38	ທ່ານ ຄຳສີງ ເພັດດາວເຮືອງ ພ້ອມດ້ວຍຄອບຄົວ	5,000,000
39	ທ່ານ ສຽວສະຫວາດ ຈຸນລະມຸນຕີ ພ້ອມດ້ວຍຄອບຄົວ	5,000,000
40	ທ່ານ ຕົ້ງ (ບໍລິສັດຕົ້ງກໍ່ສ້າງຂົວ-ທາງ) ພ້ອມດ້ວຍຄອບຄົວ	5,000,000
41	ນາງ ມະນີວົງ ພູມະນີວົງ ພ້ອມດ້ວຍຄອບຄົວ	5,000,000
42	ນາງ ບຸບຜາ ເຄນລາວົງ ພ້ອມດ້ວຍຄອບຄົວ	5,000,000
43	ທ່ານ ທອງເລື່ອນ ພິມມະສານ (ຄັ້ງຮຽງ) ພ້ອມດ້ວຍຄອບຄົວ	5,000,000
44	ປ້າ ພູທອນ ພູມສະຫວັນ ພ້ອມດ້ວຍຄອບຄົວ	5,000,000
45	ທ່ານ ພິມພາ ວົງວຽງຄຳ ພ້ອມດ້ວຍຄອບຄົວ	5,000,000
46	ນາງ ສີຈັນ ວິພາວັນ ພ້ອມດ້ວຍຄອບຄົວ	5,000,000
47	ນາງ ບຸນຕາ ດາລາວີ ພ້ອມດ້ວຍຄອບຄົວ	3,000,000
48	ນາງປີ່ແກ້ວ ນັນທະວົງ ພ້ອມດ້ວຍຄອບຄົວ	2,500,000
ລວມ	ໜຶ່ງພັນເກົ້າຮ້ອຍຫ້າສິບເຈັດລ້ານເກົ້າແສນສາມໝື່ນກີບ	1,957,930,000

ຮູບພາບ ຂອງຜູ້ສົມທົບ (ຈຳນວນໜຶ່ງ) ພັດທະນາໂຮງຮຽນ ມັດທະຍົມສົມບູນ ອິນແປງ (ເຂດຄັງວຽງ)



ທ່ານ ຄຽງ ສິດທິເດດ
242.250.000 ກີບ



ທ່ານ ຄຳມະນີ ແລະ ນາງມະນີວັນ ອິນທິລາດ
205.000.000 ກີບ



ທ່ານ ພູວຽງ ພົງສະຫວັດ
100.000.000 ກີບ



ທ່ານ ບຸນມາ ແລະ ນາງ ປະທຸມພອນ ເພັດສາວົງ
173.790.000 ກີບ



ທ່ານ ແສງລາຕີ ແລະ ນາງ ມະນີວອນ ສະຫວັນຄຳ
100.000.000 ກີບ



ນາງ ມະນີວອນ ວິລະວົງ
82.000.000 ກີບ



ບົວໄພລິນ ສຸຂະວົງ
50.000.000 ກີບ



ສີສົມພູ ນັນທະພອນ
30.000.000 ກີບ



ບົວທາ ຂັດທິຍະ
25.000.000 ກີບ



ຄຳໄຜ່ ຊະນະ
20.000.000 ກີບ



ທ່ານ ສົມວັນດີ + ນາງອ່ອນຈັນ
15.000.000 ກີບ





ສຸພະມິດ ບຸນລາວົງ
10.000.000 ກີບ



ພູທອນ ພູມສະຫວັນ
5.000.000 ກີບ



ຄຳສິງ ເພັດດາວເຮືອງ
5.000.000 ກີບ



ພິມພາ ວົງວຽງຄຳ
5.000.000 ກີບ



ຄຳປະສິດ ແລະ ນາງລັດປະໄພ ເທບພະວົງສາ
10.000.000 ກີບ



ຈັນທອນ ມັ່ງໝໍ່ເມກ
5.000.000 ກີບ



ສີຈັນ ວິພາວັນ
5.000.000 ກີບ



ທອງເລື່ອນ ພິມມະສານ
5.000.000 ກີບ



ບຸນຕາ ດາລາວີ
3.000.000 ກີບ







ຈົດຈຳໂຮງຮຽນອິນແປງ ບໍ່ມີວັນລືມ

ສົມວັນດີ ນາຖາວົງສ໌
ແລະ ນາງ ອ່ອນຈັນ ທຳມະວົງ

ພວກຂ້າພະເຈົ້າ ສົມວັນດີ ນາຖາວົງສ໌ ແລະນາງອ່ອນຈັນ ທຳມະວົງ ລູກບ້ານຖານເມືອງບ້ານຄັງວຽງ ແລະບ້ານໄຜ່ງຳ ຕາແສງຍອດງື່ມ ເມືອງແປກ ແຂວງຊຽງຂວາງ. ພວກເຮົາທັງສອງຊີວິດໃນເຍົາໄວໄດ້ສຶກສາຮ່ຳຮຽນຊັ້ນປະຖົມ ຢູ່ໂຮງຮຽນລາດ ອິນແປງ ແຕ່ປີ 1957-1962. ໂຮງຮຽນແຫ່ງນີ້ ຈຶ່ງເປັນບ່ອນຊຸບຫຼໍ່ ບັ້ນເລີ່ມຕົ້ນແຫ່ງຊີວິດ ແຫ່ງສະຕິປັນຍາ, ຄຸນສົມບັດ, ການອອກແຮງງານ, ການກີລາ, ສິລະປະ ແລະສຸຂະພາບພະລານາໄມ ໃຫ້ເປັນຄົນທີ່ໄດ້ຮັບການພັດທະນາຢ່າງຮອບດ້ານ.

ການສຶກສາຮ່ຳຮຽນ ແລະການດຳລົງຊີວິດ ຕະຫຼອດໄລຍະຮຽນຊັ້ນປະຖົມ 5 ປີ, ເປັນພາບທີ່ປະທັບໃຈ ບໍ່ມີເວລາໃດຈະຫຼົງລືມໄດ້ ປັດໄຈອັນສຳຄັນແມ່ນໂຮງຮຽນໄດ້ຕິດພັນສະໜິດແໜ້ນກັບບ່ອນເຄົ້າກຳເນີດ,ບ່ອນຝັງສາຍແຮ່ ບ່ອນແຜ່ສາຍບຶ ຂອງຜູ້ບັງເກີດເກົ້າທີ່ເປັນບິດາແລະມານດາ ຜູ້ທີ່ແສນທະນຸຖະໜອມຮັກຂອງພວກເຮົາ. ພວກເຮົາທັງສອງມີຄວາມພາກພູມ ໃຈຢ່າງສຸດຊຶ້ງ ແລະຮູ້ບຸນຄຸນຢ່າງສູງສົ່ງຕໍ່ຄູອາຈານ ຜູ້ທີ່ໃຫ້ການສິດສອນສຶກສາອົບຮົມ ໃຫ້ພວກເຮົາທັງສອງມີຄວາມຄິດຮັກຊາດ, ຮັກບ້ານເກີດເມືອງນອນ,ເພີ່ມທະວີຄວາມເຊື່ອໝັ້ນຕໍ່ການນຳພາ ແລະແນວທາງນະໂຍບາຍຂອງພັ

ພວກເຮົາທັງສອງ ຮູ້ສຶກທະນົງໃຈ ແລະເປັນກຽດຢ່າງຍິ່ງ ທີ່ໄດ້ເກີດໃນດິນແດນຊຽງຂວາງວິຣະຊົນ ແລະໄດ້ເຂົ້າຮັບການສຶກສາຮ່ຳຮຽນ ຢູ່ໂຮງຮຽນລາດອິນແປງແຫ່ງນີ້. ການເລີ່ມຕົ້ນສຶກສາທີ່ໂຮງຮຽນອິນແປງ ໄດ້ສົ່ງຜົນໃຫ້ພວກເຮົາທັງສອງກ້າວໄປ ສູ່ການສຶກສາຂັ້ນສູງຂຶ້ນໄປເລື້ອຍໆ ແລະໄດ້ຮັບຄວາມໄວ້ວາງໃຈຈາກພັກ ລັດຖະບານ ແລະປະຊາຊົນໃຫ້ເຮັດວຽກຮັບໃຊ້ຊາດ ແລະປະຊາຊົນຕາມໜ້າທີ່ຕຳແໜ່ງຕ່າງໆຢ່າງໜ້າຊື່ນຊົມຄື:



ຂ້າພະເຈົ້າສົມວັນດີ ນາຖາວົງສ໌ ໄດ້ຮັບຕຳແໜ່ງ ເປັນຄູສອນປະຊາສຶກສາ, ຫົວໜ້າໂຮງຮຽນຊັ້ນປະຖົມ, ມັດທະຍົມ, ໂຮງຮຽນສ້າງຄູເລກ 3, ຫົວໜ້າໂຮງຮຽນ ຄຸ້ມຄອງການສຶກສາທົ່ວປະເທດ ແຫ່ງທຳອິດຂອງຊາດລາວ. ຕະຫຼອດໄລຍະ 25 ປີ ແຕ່ 1964-1990 ແມ່ນໄດ້ອຸທິດຊີວິດເພື່ອພາລະກິດການສຶກສາ, ສຳເລັດການສຶກສາລະ ດັບປະລິນຍາຫຼັ ວິຊາສະເພາະຄູວັນນະຄະດີ ແລະປະລິນຍາໂທ ວິຊາທິດສະດີມາກ-ເລນິນ ໃນຫ໋ວບົດວິທະຍານິພົນ ເສດຖະກິດສິນຄ້າໃນເງື່ອນໄຂຕະຫຼາດສັງຄົມນິຍົມ ຈາກສະຫະພາບໂຊວຽດປີໃນ1987-1990, ປັດຈຸບັນສືບຕໍ່ເຮັດໜ້າທີ່ເປັນຮອງເລຂາ ພັກ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ແລະເປັນຫົວໜ້າຄະນະສະມາຊິກສະພາ ແຫ່ງຊາດ ຊຸດທີ VI ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ.

- ນາງ ອ່ອນຈັນ ທຳມະວົງ ໄດ້ຮັບຕຳແໜ່ງເປັນຮອງຫົວໜ້າອຳນວຍການໂຮງ ຮຽນສ້າງຄູ, ຫົວໜ້າຄະນະສຶກສາ ແຂວງຊຽງຂວາງ, ປະທານສູນກາງສະຫະພັນ ແມ່ຍິງລາວ, ສະມາຊິກສະພາແຫ່ງຊາດ ແລະເປັນກຳມະການສູງກາງພັກ 4 ສະໄໝ (1986-2010), ປັດຈຸບັນ ເປັນລັດຖະມົນຕີວ່າການ ກະຊວງແຮງງານສະຫວັດດີການ ສັງຄົມ.

ພວກເຮົາທັງສອງ ຂໍສະແດງຄວາມຮູ້ບຸນຄຸນພັກ ລັດຖະບານທີ່ໄດ້ສຶກສາ ອົບຮົມ ກໍ່ສ້າງໃຫ້ເປັນພະນັກງານ ທີ່ດີຂອງລູກຫຼານ ແຫ່ງແຂວງວິລະຊົນ ຊຽງຂວາງ. ພວກເຮົາຈະສືບຕໍ່ອຸທິດຕົນຮອບດ້ານ ທັງກຳລັງກາຍ ແລະສະຕິປັນຍາ ເພື່ອປະກອບ ສ່ວນ ພັດທະນາປະເທດຊາດບ້ານເມືອງ ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນລາວ ບັນດາເຜົ່າ ຈົນເຖິງວິນາທີສຸດທ້າຍ. ຂໍສະແດງຄວາມຮູ້ບຸນຄຸນ ແລະຈົດຈຳໂຮງຮຽນລາດ ອິນແປງທີ່ໃຫ້ກຳເນີດແຫ່ງສະຕິ, ພູມປັນຍາ, ຊຶ່ງເປັນບາດກ້າວທຳອິດຂອງຊີວິດ. ຂໍໃຫ້ ໂຮງຮຽນອິນແປງ ຈົ່ງສົດໃສ ເຕີບໃຫຍ່ຂະຫຍາຍຕົວ ແລະສີວິໄລ ທັນສະໄໝຕະຫຼອດ ກາລະນານ.

ຈາກຄວາມຄິດຂອງພວກເຮົາ
ສົມວັນດີ ນາຖາວົງສ໌ ແລະ ນາງ ອ່ອນຈັນ ທຳມະວົງ



ຢາກມີໂຮງຮຽນງາມຢູ່ໃກ້ບ້ານ

ບຸນມາ ແລະນາງປະທຸມພອນ ເພັດສາວົງ

ເຖິງວ່າຂ້າພະເຈົ້າ ຈະເກີດຢູ່ເຂດເມືອງພູກູດວິຣະຊົນ(ເມືອງສຸຍ)ພຸ້ນກໍຕາມ ແຕ່ຍາຕິພີ່ນ້ອງກໍເປັນປ້ອງເປັນລ່ຳຍາຍກັນມາຢູ່ທາງຍອດງື່ມຄັງຄາຍ ເມືອງແປກວິຣະຊົນນີ້ ດັ່ງນັ້ນຈຶ່ງມັກແກ່ວນເຄີຍກັບເຂດນີ້ເປັນຢ່າງດີ. ການໄປມາຫາສູ່ໃນຄາວນັ້ນ ເຖິງຈະບໍ່ມີລົດລາງພາຫານະກໍຍ່າງໄປແລ່ນມາ ກໍຄືວ່າບໍ່ໄກປານໃດ.

ຍາມເປັນເດັກນ້ອຍ ໄປໂຮງຮຽນກໍມ່ວນຊື່ນລື່ນເລີງກັບທຳມະຊາດທີ່ສວຍສົດງົດງາມຂອງພູພຽງ. ເຖິງວ່າໂຮງຮຽນຕັ້ງຢູ່ໄກ ຕ້ອງໃຊ້ເວລາປະມານສອງຊົ່ວໂມງຈຶ່ງໄປເຖິງ ກໍບໍ່ໄດ້ຫວາດຫວັ່ນ ເຕັມທີແດ່ກໍແຕ່ຍາມລະດູໜາວ ອາກາດເຢັນຫຼາຍ ໜາວຈົນສະບັ້ນ ພໍ່ແມ່ແລະພີ່ນ້ອງຕ່າງຄົນກໍເອົາຖ່ານໃສ່ກະປອງ ເອົາລວດເຮັດເປັນສາຍ ແລ້ວຫິ້ວໄປ ຝັງໄປຈົນຮອດໂຮງຮຽນ ຖ້າຖ່ານດີກໍນາມມອດໄດ້ຕັ້ງໄວ້ກ້ອງໂຕະ ເພື່ອບັນເທົາຄວາມໜາວ. ຢູ່ໃນໂຮງຮຽນແທນທີ່ວ່າຈະອົບອຸ່ນແຕ່ອາກາດທັງໃນ ແລະນອກຫ້ອງຮຽນກໍຄືກັນ ຍ້ອນສະພາບຂອງໂຮງຮຽນບໍ່ດີພໍ ຄືມີຝາແອ້ມພຽງແຕ່ເຄິ່ງໜຶ່ງ(ພຽງແອວນາຍຄູ) ລົມພັດມາຍາມໃດ ເຢັນເຂົ້າເຖິງຫົວໃຈ ຮ່າງກາຍສັ່ນໜາວຢ້ອກໆ...ນີ້ແຫຼະຊີວິດຂອງເດັກໃນເມື່ອກ່ອນຍັງດ້ອຍໂອກາດ...ເວົ້າເຖິງເລື່ອງຮຽນແມ່ນຫ້ອງປ. 1 ປ. 2 ປ. 3 ມີນາຍຄູຜູ້ດຽວ ຍ້ອນແນວນັ້ນ ຂ້າພະເຈົ້າຈຶ່ງຄິດຢາກມີໂຮງຮຽນງາມໆແລະຢູ່ໃກ້ບ້ານ ເພື່ອຈະບໍ່ໄດ້ຍ່າງຕາກອາກາດໜາວ ໄປໂຮງຮຽນໄກ.

ເມື່ອການຮຽນສູງຂຶ້ນ ຂ້າພະເຈົ້າກໍໄດ້ຍ້າຍໄປຮຽນຕໍ່ຢູ່ບ່ອນອື່ນເລື້ອຍໆໄປ. ເຖິງປີ 1985 ຫຼັງຈາກຮຽນຈົບມາແຕ່ອະດີດ ສສສ. ໂຊວຽດ ຂ້າພະເຈົ້າໄດ້ກັບມາຢາມບ້ານເກີດ ແລະມາຢາມເຂດຍອດງື່ມ ເຂດຄັງວຽງ ເຫັນໂຮງຮຽນກໍຍັງຢູ່ໃນສະພາບຫຍຸ້ງຍາກ ແລະຕັ້ງຢູ່ໄກຄືເກົ່າ ພວກນ້ອງນຸ່ງລູກຫຼານນັກຮຽນ ກໍພົບຄວາມລຳບາກຄືກັບຕົນເອງໃນເມື່ອກ່ອນ ກໍຮູ້ສຶກສະເທືອນໃຈຫຼາຍ.

ໃນຊຸມປີ 2000 ເວລາທີ່ຂ້າພະເຈົ້າໄດ້ມາຢາມບ້ານອີກເທື່ອໜຶ່ງ ກັບແມ່ຄຳເມິງ ວໍລະຈິດ ໄດ້ເຫັນສະພາບຂອງນັກຮຽນ ແລະໂຮງຮຽນກໍຍັງຢູ່ຄືເກົ່າ. ແມ່ເວົ້າວ່າຢາກມີໂຄງການສ້າງໂຮງຮຽນມັດທະຍົມ ຢູ່ຄັງທາດ (ອິນແປງ) ເພື່ອໃຫ້ລູກຫຼານໄດ້ຮຽນ

ຢູ່ໃກ້ກັບບ້ານ ແມ່ເຄີຍຂໍໂຄງການຂອງຍີ່ປຸ່ນໃຫ້ມາຊ່ວຍເຫຼືອແຕ່ບໍ່ໄດ້. ຂ້າພະເຈົ້າເຫັນດີ ເຫັນພ້ອມນຳແມ່ ຈຶ່ງຄິດຫາທາງຊ່ວຍເພີ່ນ. ພາຍຫຼັງກັບຄືນສະຫວັນນະເຂດໃນຕົ້ນປີ 2004 ຂ້າພະເຈົ້າໄດ້ປຶກສາ ກັບຄອບຄົວ ແລະນ້ອງນຸ່ງຜູ້ເຮັດທຸລະກິດທີ່ພໍມີລາຍໄດ້ຄື: ທ່ານຄຽງ ສິດທິເດດ, ທ່ານພູວຽງ ພົງສະຫວັດ ເພື່ອລະດົມທຶນກໍ່ສ້າງໂຮງຮຽນຫຼັງທຳອິດ ຕອບສະໜອງຈຸດປະສົງຂອງແມ່ຄຳເມິງ ແລະໄດ້ຕົກລົງແບ່ງກັນຮັບຜິດຊອບໃນມູນຄ່າໂຄງການສີ່ຮ້ອຍກວ່າລ້ານກີບດັ່ງນີ້: ທ່ານຄຽງ ສິດທິເດດ ພ້ອມຄອບຄົວ 242,250.000 ກີບ, ທ່ານພູວຽງ ພົງສະຫວັດ ພ້ອມຄອບຄົວ91.790.000ກີບແລະຂ້າພະເຈົ້າ ພ້ອມຄອບຄົວ 91.790.000 ກີບຈຶ່ງເຮັດໃຫ້ໂຮງຫຼັງທີ່ໜຶ່ງສຳເລັດໃນປີ 2004.



ທ.ແສງລາຕີ ແລະນາງລັດດາວອນ ສະຫວັນຄຳ

ຍ້ອນການເພີ່ມຂຶ້ນຂອງນັກຮຽນໃນເຂດດົງວຽງ ພວກລູກຫຼານຫຼັງຈາກຈົບມັດທະຍົມຕົ້ນອິນແປງນີ້ແລ້ວ ກໍ່ບໍ່ມີບ່ອນຮຽນ. ແມ່ຄຳເມິງ ກໍໄດ້ເວົ້າວ່າຢາກໄດ້ໂຮງຮຽນມັດທະຍົມປາຍ ແລະບ່ອນຫຼິ້ນກິລາໃສ່ໂຮງຮຽນອິນແປງຕື່ມ ແມ່ເວົ້າວ່າແມ່ຈະເປັນຜູ້ລະດົມທຶນກໍ່ສ້າງ ຖ້າບໍ່ພໍເທົ່າໃດ ໃຫ້ພວກລູກຊ່ວຍໄດ້ບໍ? ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ປຶກສາຫາລື ກັບຄອບຄົວ ແລະຄອບຄົວນ້ອງນຸ່ງເປັນຕົ້ນແມ່ນຄອບຄົວທ.ແສງລາຕີແລະນາງລັດດາວອນສະຫວັນຄຳ ແລ້ວຕົກລົງຄອບຄົວຂ້າພະເຈົ້າປະກອບສ່ວນ 82.000.000 ກີບ ແລະຄອບຄົວ ທ. ແສງລາຕີ ສະຫວັນຄຳ ປະກອບສ່ວນ 100.000.000ກີບ

ພວກຂ້າພະເຈົ້າຄອບຄົວເພັດສາວົງ, ຄອບຄົວສິດທິເດດ, ຄອບຄົວສະຫວັນຄຳ ແລະຄອບຄົວພົງສະຫວັດ ມີຄວາມພາກພູມໃຈ ທີ່ໄດ້ປະກອບສ່ວນ ເຮັດໃຫ້ໂຮງຮຽນແຫ່ງນີ້ໄດ້ຮັບການສ້າງສຳເລັດ. ການສ້າງໂຮງຮຽນແຫ່ງນີ້ ແມ່ນຍ້ອນແນວຄິດ ແລະຈຸດປະສົງຂອງ ແມ່ຄຳເມິງ ຈໍລະຈິດ ທີ່ໄດ້ເຕົ້າໂຮມຄວາມສາມັກຄີຂອງລູກຫຼານ ອ້າຍນ້ອງ ແລະໝູ່ເພື່ອນ ປະກອບສ່ວນທັງຊັບສິນ ແລະສະຕິປັນຍາ ຈຶ່ງເຮັດໃຫ້ການສ້າງໂຮງຮຽນມັດທະຍົມສົມບູນແຫ່ງນີ້ສຳເລັດ.

ຂ້າພະເຈົ້າຫວັງວ່າ ລູກຫຼານນັກຮຽນ ພ້ອມທັງຄູ - ອາຈານຈະນຳໃຊ້ ໂຮງຮຽນແຫ່ງນີ້ໃຫ້ມີປະສິດທິຜົນ ແລະພ້ອມກັນປົກປັກຮັກສາໃຫ້ສະອາດ ງາມຕາ ແລະໝັ້ນຄົງໄວ້ເຖິງເສັ້ນລູກເສັ້ນຫຼານຂອງພວກເຮົາ.



ຄົນດີຂອງແຜ່ນດິນ

.....

ຄຳສິງ ເພັດດາວເຮືອງ
ນັກຮຽນມູລະປະຖົມອິນແປງ ສົກປີ 1952-54

ໂຮງຮຽນປະຖົມອິນແປງ ສ້າງຕັ້ງຂຶ້ນໃນປີ1949 ເປັນໂຮງຮຽນຫຼັງທຳອິດ ຂອງຕາແສງຄັງ ເມືອງແປກ ແຂວງຊຽງຂວາງ.

- ໂຮງຮຽນອິນແປງ ຫຼື ໂຮງຮຽນຄັງທາດ ແມ່ນອັນດຽວກັນ
-ໄປລາດອິນແປງ ຫຼືໄປລາດຄັງ ກໍແມ່ນໄປບ່ອນດຽວກັນ.

ໂຮງຮຽນອິນແປງ ຫຼື ໂຮງຮຽນຄັງທາດ ຕັ້ງຢູ່ເທິງເນີນພູພຽງທີ່ສວຍງາມ, ກວ້າງຂວາງ. ອ້ອມຮອບດ້ວຍພູສາລາໂຕະ, ພູເຢັ້ນ, ພູນາໝໍ້ ພູດາວ ມີສາຍນ້ຳຄາ ສາຍນ້ຳທູມ ແລະຝາຍປຸ່ງ. ບັນດາບ້ານ ທີ່ຢູ່ໃກ້ຄຽງໂຮງຮຽນອິນແປງມີ: ບ້ານທາດ, ບ້ານຄັງວຽງ, ບ້ານໝ້ຽງ ບ້ານສີຄູນ ບ້ານປຸ່ງປັນ ບ້ານນາລາມ ແລະ ບ້ານໄຜ່ງຳ ພິເສດ ໂຮງຮຽນອິນແປງຕັ້ງຢູ່ຈຸດໃຈກາງ ຂອງເສັ້ນທາງ ສາມແຍກໜອງເປັດ-ລາດບອກ.

ຢູ່ເດີ່ນຂອງໂຮງຮຽນ ມີບອກຊ້າງໃຫຍ່. ຜູ້ເຖົ້າຜູ້ແກ່ ໄດ້ເລົ່າຕໍ່ໆກັນມາວ່າ: ແຕ່ກ່ອນ ມີຝູງຊ້າງໄດ້ລົງມາກິນປຸ່ງທີ່ຝາຍປຸ່ງ (ທີ່ນີ້ຈຶ່ງໄດ້ຊື່ວ່າບ້ານປຸ່ງ) ແລະມາເກືອກບອກຢູ່ ບໍລິເວນເດີ່ນໂຮງຮຽນ ຈຶ່ງມີບອກຊ້າງ. ບອກຊ້າງໃຫຍ່ເທົ່າກັບບອກໂຍມ 500-1000 ກິໂລ (ປະມານກວ້າງສິບຫ້າແມັດ ເລິກຫ້າແມັດ) ດຽວນີ້ ບອກນີ້ຍັງເຫຼືອພຽງແຕ່ຮ່ອງຮອຍ ຍ້ອນວ່າດິນໄດ້ເຈື່ອນລົງຖົມ ຫຍ້າກໍປົ່ງປົກຫຸ້ມເປັນສ່ວນໃຫຍ່. ຍັງມີຊ້າງຫຼາຍຝູງໄປເກືອກບອກຢູ່ຕາແສງປຽງ, ທີ່ນັ້ນຈຶ່ງໄດ້ຊື່ວ່າ "ລາດບອກ" ມາຮອດປັດຈຸບັນນີ້.

ຢູ່ຕໍ່ໜ້າໂຮງຮຽນອິນແປງ ມີກົກຈອງໃຫຍ່ ແລະກົກໝາກໝັ່ນເຖືອນຫຼາຍກົກ (ໄມ້ທຳມະຊາດ) ດອກເປັນສີບົວ ຄືດອກຄາຍ (ບາງທ້ອງຖິ່ນກໍເອີ້ນວ່າ ດອກຄາຍປ່າ ເບິ່ງແລ້ວຄ້າຍໆກັບດອກຊາກຸຣະ ຂອງຍີ່ປຸ່ນ). ຍາມອອກດອກ ຈຸມຈີເບ່ັງບານແຂ່ງກັບດອກຈອງ ປະດັບໃຫ້ໂຮງຮຽນ ມີຄວາມສວຍງາມຫາທີ່ອື່ນປຽບປານໄດ້ຍາກ.

ຂ້າພະເຈົ້າຊື່ວ່າ: ຄຳສິງ ນາດອນ ຫຼື ຄຳກິ່ງ ນາດອນ ຢູ່ບ້ານ ຜູ້ໃດຈະເອີ້ນຊື່ໃດກໍໄດ້ ແຕ່ໃນທາງການເອີ້ນວ່າ ຄຳສິງ ເພັດດາວເຮືອງ ເປັນລູກຊາຍຫຼ້າ ຂອງ ພໍ່ຊຽງພິມ (ຍາເມືອງແພນນາດອນ) ແລະແມ່ນາງດີ ເກີດແລະເຕີບໃຫຍ່ຂຶ້ນໃນຖິ່ນນີ້ ແລ້ວໄດ້ຮຽນ ຢູ່ໂຮງຮຽນມູລະປະຖົມອິນແປງໃນສົກປີ 1952-53-54 ເລີ່ມຈາກຫ້ອງທີ 5 ຮຽນນຳນາຍຄູ ຄຳຈັນ ຄົນແຂວງບໍລິຄຳໄຊ ຫ້ອງທີ 4 ແລະ ຫ້ອງທີ 3 ໄດ້ຮຽນນຳນາຍຄູ ຄຳຈັນ ແລະນາຍຄູຄຳກອງ ສູນທະລາ ຄົນແຂວງສະຫວັນນະເຂດ.

ເມື່ອຮຽນຈົບຫ້ອງທີ 3 ແລ້ວ, ຈະຮຽນຕໍ່ຢູ່ອິນແປງ ກໍບໍ່ໄດ້ ເພາະທີ່ນີ້ມີພຽງ 3 ຫ້ອງທ່ໍນັ້ນ. ເພື່ອນຮ່ວມຮຸ່ນແຕ່ລະຄົນ ກໍແຍກຍ້າຍໄປຮຽນບ່ອນອື່ນ ຕາມເງື່ອນໄຂຂອງ ໃຜລາວ. ສ່ວນຂ້າພະເຈົ້າໄດ້ຮຽນຕໍ່ຫ້ອງທີສອງນ້ອຍ ຫ້ອງທີສອງໃຫຍ່ ແລະຫ້ອງທີ ໜຶ່ງ ຢູ່ໂພນສະຫວັນ ໃນສົກຮຽນ1955-56-57.ເມື່ອເສັງຈົບປະຖົມຈຶ່ງໄປຮຽນຕໍ່ມັດທະ ຍົມທີ່ College Modern ຢູ່ເມືອງຄູນ, ຮອດປີທີ 2 ຊຽງຂວາງ ກໍໄດ້ຮັບການປົດປ່ອຍ ແລ້ວຂ້າພະເຈົ້າກໍສະໝັກໄປຮຽນວິຊາການປ້ອງກັນອາກາດ (ປຕອ) ທີ່ຫວຽດນາມ.

ຍ້ອນໂຮງຮຽນອິນແປງ ມີສັນຍະລັກທຳມະຊາດ ທີ່ຈັບໃຈຫຼາຍປະການ ດັ່ງນັ້ນ ນັກຮຽນທີ່ໄດ້ເຂົ້າໂຮງຮຽນແຫ່ງນີ້ແລ້ວ ຈຶ່ງຮູ້ສຶກປະທັບໃຈ ແລະຜູກພັນ. ເຖິງວ່າຈະ ພັດພາກຈາກໄປ ໄກແສນໄກດົນແສນນານປານໃດກໍຕາມ ພາບທ໋ວທັດ ແຫ່ງພະອິນໄດ້ ດົນບັນດານປັ້ນແຕ່ງໄວ້ນີ້ ໄດ້ສະຫຼັກປັກປັກໃຈຢູ່ໃນຄວາມຊົງຈຳ ຂອງແຕ່ລະຄົນ ຕະຫຼອດມາ...ພາບທີ່ຜຸດຂຶ້ນເລື້ອຍໆ ໃນຄວາມຊົງຈຳຂອງຂ້ອຍແມ່ນ ຍາມພັກຮຽນ ຕອນທ່ຽງ ໃຜໆກໍຕ່າງຢອກໄຍ ໄລ່ກັນແລ່ນອ້ອມບວກຊ້າງ ຫຼືໄລ່ຢອກກັນໄປຕາມເປີ້ນ ພູທີ່ມີປ່າແປກຊຽວງາມຊຸ່ມຊື່ນໜ້າອອນຊອນລາງເທື່ອກໍພາກັນນັ່ງຫຼົ້ນຢູ່ກ້ອງຮົ່ມແປກ ຮົ່ມກົກໝັ້ນເຖືອນ ຮົ່ມກົກຈອງໃຫຍ່ ຫຼາຍຄົນມາແຕ່ບ້ານໄກ ກໍໄຂຫໍ່ເຂົ້າ ອອກມາກິນ ຮ່ວມກັນຢ່າງແຊບນ໊ອຫ໊ອມ່ວນ.

ສະເພາະຂ້ອຍເອງ ມື້ໃດບໍ່ໄດ້ຫໍ່ເຂົ້າ ກໍຍ່າງໄປບ້ານນາງົ້ວ (ບ້ານປຸ່ງ)ເພື່ອກິນ ເຂົ້າສວາຍນຳອ້າຍຜູ້ຊື່ວ່າ ຊຽງບຸນຍັງ ພິມມະຈັກ ຊຶ່ງມາເອົາເມຍຢູ່ບ້ານນີ້. ມີບາງມື້ ຝົນຕົກ ເລີກຮຽນຕອນແລງ ຂ້ອຍກໍໄປນອນຢູ່ເຮືອນນາງົ້ວ. ເອື້ອຍໃພ້ກໍໃຈດີ ແລະ ຮັກແພງຂ້ອຍ ຫຼາຍເທື່ອເພີ່ນກໍເອົາຫໍ່ເຂົ້າກັບປາປີ້ງ, ແຈ່ວປາດຸກ, ແຈ່ວບອງ...ໃຫ້ຂ້ອຍ ຖືໄປກິນຢູ່ໂຮງຮຽນກັບໝູ່ເພື່ອນ. ຄຸນງາມຄວາມດີຄວາມຮັກໄຄ່ໄມຕີທີ່ອ້າຍ ເອື້ອຍໃພ້ ມີຕໍ່ຂ້ອຍໃນເວລານັ້ນ ຂ້ອຍຍັງຈົດຈຳສຳນຶກໄວ້ ໃນດວງໃຈບໍ່ມີວັນຫຼົງລືມ.

ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະພາກພູມໃຈ ເປັນຢ່າງຍິ່ງ ທີ່ໄດ້ຂຽນບົດຫວນຄຶນມູນເຊື້ອປະຫວັດສາດ ຂອງໂຮງຮຽນອິນແປງເຂົ້າໃນປຶ້ມ "ແຫນພະຄຸນແຜ່ນດິນທີ່ໃຫ້ກຳເນີດ" ເຫຼັ້ມນີ້. ຂໍສະແດງຄວາມ ຮູ້ບຸນຄຸນອັນລົ້ນເຫຼືອຕໍ່ພໍ່ແມ່ອ້າຍເອື້ອຍ ແລະຜືນແຜ່ນດິນທີ່ໃຫ້ກຳເນີດ ແລະຊຸບລ້ຽງໃຫ້ໃຫຍ່ສູງ. ຂໍສະແດງຄວາມຮູ້ບຸນຄຸນ ຕໍ່ໂຮງຮຽນອິນແປງທີ່ໃຫ້ກຳເນີດວິຊາຄວາມຮູ້ທຳອິດ ແລະຄູບາອາຈານ ຄືທ່ານຄູຄຳຈັນ ທ່ານຄູຄຳຄ່ອງ ສູນທະລາ ທີ່ໄດ້ສິດສອນໃຫ້ມີຄວາມຮູ້ ຄວາມສາມາດເປັນພື້ນຖານ ອັນສຳຄັນ ເຮັດໃຫ້ຂ້າພະເຈົ້າໄດ້ມີເງື່ອນໄຂໄດ້ຮັບການສຶກສາສູງຂຶ້ນເລື້ອຍໆ ຕາມລຳດັບຈົນກ້າວຂຶ້ນ ໄດ້ໄປສຶກສາຮ່ຳຮຽນຕໍ່ ທີ່ຕ່າງປະເທດເຮັດໃຫ້ມີຄວາມຮູ້ຄວາມສາມາດ ແລະຄຸນສົມບັດສິນທຳປະຕິວັດ ໃນລະດັບອັນແນ່ນອນ. ດັ່ງນັ້ນ ໃນເວລາເຂົ້າເຮັດວຽກລັດຖະການ ນັບແຕ່ປີ 1961 ເປັນຕົ້ນມາ ພັກ-ລັດ ກໍໄດ້ໄວ້ວາງໃຈ ມອບໝາຍໜ້າທີ່ວຽກງານສຳຄັນຕ່າງໆ ໃຫ້ເຮັດຈົນເຖິງປັດຈຸບັນ.

ຂໍສຳນຶກຮູ້ບຸນຄຸນ ອັນສູງສົ່ງຊົ່ວກາລະນານ ຕໍ່ພໍ່ແມ່ຜູ້ໃຫ້ກຳເນີດ ທີ່ມີນາມວ່າ: ຂຽງພິມ (ຍາເມືອງແພນ ນາດອນ) ສາວດີ ຜູ້ເປັນແມ່ ພ້ອມດ້ວຍຂຽງວັນນາ+ ສາວບຸນທັນ(ຄົນຄັ້ງວຽງນີ້ເອງ)ຜູ້ເປັນພໍ່ແມ່ລ້ຽງ ຜູ້ລ້ຽງດູ ຊຸກຍູ້ ພ້ອມດ້ວຍເອື້ອຍຈັນທາ ແລະເອື້ອຍບົວສີ ທີ່ໄດ້ຊຸກຍູ້ສົ່ງເສີມໃຫ້ຂ້າພະເຈົ້າໄດ້ຮຽນໜັງສື ມີຄວາມຮູ້ ຄວາມສາມາດ ມີຄຸນສົມບັດ ສາມາດປະຕິບັດໜ້າທີ່ຮັບໃຊ້ຊາດ ປະສົບຜົນສຳເລັດຢ່າງຈົບງາມຕະຫຼອດມາ.

ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຢ່າງລົ້ນເຫຼືອຕໍ່ແມ່ນາຍ ຄຳເມິງ ວໍລະຈິດ ພ້ອມດ້ວຍຄອບຄົວລູກຫຼານ ທີ່ໄດ້ປະກອບທຶນຮອນ ມາບູລະນະໂຮງຮຽນອິນແປງ ໃຫ້ເປັນໂຮງຮຽນປະຖົມ-ມັດທະຍົມສົມບູນລະດັບມາດຕະຖານ ຊຶ່ງຈະເປັນມູນມໍລະດົກໄວ້ໃຫ້ລູກຫຼານໄດ້ໃຊ້ເປັນທີ່ສຶກສາຮ່ຳຮຽນເອົາວິຊາຄວາມຮູ້ຕໍ່ໄປຕະຫຼອດກາລະນານ.



ຄຳສອນຂອງພໍ່ແມ່ ຮຽນໜັງສື ຈຶ່ງຊິມີຄວາມຮູ້

ສີຈັນ ວິພາວັນ
ນັກຮຽນເກົ່າ ໂຮງຮຽນປະຖົມນາໜອງ (ອິນແປງ)



ຂ້ອຍເປັນລູກສາວ ຂອງພໍ່ຊຽງມີ ແລະ ແມ່ບຸນມີ ເກີດທີ່ບ້ານລາວ ຕາແສງຄັງ ເມືອງແປກ ແຂວງຊຽງຂວາງ ເປັນໜຶ່ງໃນ ຈຳນວນນັກຮຽນຫ້ອງ ປ. 4 ຂອງໂຮງຮຽນ ປະຖົມສົມບູນ ບ້ານນາໜອງ (ອິນແປງ) ເມືອງແປກ ແຂວງຊຽງຂວາງໃນປີ 1967, ຊຶ່ງແມ່ນທ່ານຄູ ພອນສະໄໝ ວົງພະຈັນ ເປັນຜູ້ສອນ. (ກ່ອນນີ້ ຮຽນປ.1-ປ.2 ຢູ່ບ້ານລາວ, ປ.3 ຢູ່ໂພນທອງ)

ບ້ານລາວໄກຈາກໂຮງຮຽນນາໜອງ ປະມານ 11 ກິໂລແມັດ ໝົດບ້ານມີພຽງ ແຕ່ຂ້ອຍຜູ້ດຽວທີ່ໄປຮຽນຮອດຫ້ອງ ປ.4 ໃນສົກຮຽນນັ້ນ. ທາງໄປໂຮງຮຽນເປັນປ່າຄັ່ງ ບາງມື້ແມ່ໄດ້ໄປສົ່ງ, ບາງມື້ແມ່ນລຸງຊຽງຫຼ້າບຸນມີ (ດຽວນີ້ເພິ່ນໄດ້ຊັ້ນພັນໂທ ພັກຜ່ອນ ກິນບຳນານແລ້ວ) ມີຫຼາຍມື້ກໍໄດ້ໄປຜູ້ດຽວ, ທັງຍ່າງທັງແລ່ນ, ຢ້ານມີອັນຕະລາຍເພາະ ສັດຕູເລີ່ມເຄື່ອນໄຫວທາງໜ້າດິນ. ໂດຍປົກກະຕິ ຂ້ອຍຈະພາຍຖົງແດງໄປໂຮງຮຽນ ແຕ່ວ່າໄລຍະຫຼັງບໍ່ກ້າພາຍ ເພາະຢ້ານຍົນເຫັນ ຈຶ່ງໄດ້ເອົາແພຈ້ອງລາຍມາພົກປີ້ນ ແລະ ຫໍ່ເຂົ້າ. ເວລາເສັງຈົບຊັ້ນປະຖົມແມ່ນໄປເສັງຢູ່ບ້ານເປີບ.

ມີຫຼາຍເທື່ອ ກໍທໍ້ຖອຍກຳລັງໃຈ ແຕ່ສິ່ງທີ່ດົນບັນດານ ແລະຊຸກດັນ ໃຫ້ຂ້ອຍມີ ມານະໄປຮຽນໃນເວລານັ້ນ ກໍແມ່ນຄຳສັ່ງສອນຂອງພໍ່ແມ່ ທີ່ເພິ່ນເຄີຍບອກເລື້ອຍໆວ່າ ***"ລູກຕ້ອງຮຽນໜັງສືໃຫ້ໄດ້, ມີແຕ່ຄົນຮູ້ໜັງສືເທົ່ານັ້ນຈຶ່ງສາມາດມີຊີວິດທີ່ດີໄດ້, ຄົນອື່ນ ບໍ່ຮຽນກໍ່ຊ່າງເຂົາ"*** ຄຳເວົ້າດັ່ງກ່າວນັ້ນຍັງກ້ອງດັງຢູ່ໃນຫູ ແລະເປັນຄະຕິເຕືອນໃຈ ຕະຫຼອດມາເທົ້າທຸກວັນນີ້. (ເຫດທີ່ພໍ່ເວົ້າແນວນັ້ນກໍຍ້ອນວ່າເວລາທີ່ຂ້ອຍໄປຊວນໝູ່ຮ່ວມ ບ້ານໄປຮຽນໜັງສື ຜູ້ເປັນພໍ່ແມ່ ກໍຈະຫ້າມລູກຂອງເພິ່ນວ່າ: ***ບໍ່ຕ້ອງໄປ, ເຮັດຫູກດີກວ່າ, ບໍ່ໄປໂຮງຮຽນ ກໍໄດ້ກິນເຂົ້າ***) ດັ່ງນັ້ນ ຂ້ອຍຈຶ່ງໄດ້ໄປຮຽນຜູ້ດຽວ

ຄິດຮອດ ແລະຈື່ໄດ້ໝູ່ນັກຮຽນຮຸ່ນດຽວກັນເຊັ່ນ: ເອື້ອຍພຽງສີ,ນາງທັນມີ, ນາງ ຄຳໝັ້ນ ບ້ານສີຄູນ, ທ້າວບຸນຍົ້ງ ເພັດດາວເຮືອງ ບ້ານດອນ, ນາງແສງຈັນ ບ້ານນາຮອນ, ນາງທັນດາ ບ້ານບົວ, ທ້າວສົມເພັດ ບ້ານປຸ່ງ, ທ້າວດວງດາ ບ້ານຄັ້ງວຽງ, ນາງອ່ອນ ຈັນ ບ້ານໝັ້ນຊົມ, ນາງບຸນທອນ ບ້ານເສືອ, ນາງອອນສີ ນາລັນ, ນາງຄຳຜົ້ງ ແລະ ຜູ້ອື່ນໆອີກ.

ຂໍຮ່ວມຊື່ນຊົມ ຍິນດີນຳການພັດທະນາໂຮງຮຽນອິນແປງຢ່າງສຸດອົກສຸດໃຈ.



ຮັກບ້ານເກີດເມືອງນອນບໍ່ມີວັນເຫືອດຫາຍ

ທອງເລື່ອນ ພິມມະສານ
ຫົວໜ້າຄະນະບັນນາທິການໜັງສືພິມວຽງຈັນໃໝ່

ໃນໄລຍະເວລາທີ່ຜ່ານມາ, ຄອບຄົວພິມມະສານ ຂອງພວກຂ້າພະເຈົ້າ ມີຫຼາຍຄົນໄດ້ຖືກມອບໝາຍຈາກການຈັດຕັ້ງໃຫ້ໄປເຮັດໜ້າທີ່ວຽກງານອັນມີກຽດແລະໄດ້ຮັບຜົນສຳເລັດຕາມເປົ້າໝາຍ. ພ້ອມດຽວກັນນີ້ກໍເຮັດໃຫ້ຮູ້ສຶກຮັກບ້ານເກີດເມືອງນອນກໍຄື ປະເທດຊາດຫຼາຍຂຶ້ນ. ຄວາມຮັກ ຄວາມຄິດຮອດມາຕຸພູມ ຂອງຕົນກໍຍິ່ງມີຄວາມໜັກແໜ້ນ ແລະບໍ່ມີຍາມເຫືອດຫາຍໄດ້.

ຄອບຄົວພິມມະສານ ພວກຂ້າພະເຈົ້າ ມີຄວາມເອກອ້າງທະນົງໃຈ ແລະຮັບຮູ້ຢ່າງເລິກເຊິ່ງວ່າ: ຊີວິດ ແລະຄວາມກ້າວໜ້າຂອງຕົນເອງນັ້ນ ຍາມໃດ ກໍເລີ່ມຈາກ ແລະຕິດພັນກັບດິນດອນຕ່ອນຫຍ້າ ຕິດພັນກັບຍາດພີ່ນ້ອງ ຢູ່ບ້ານເກີດເມືອງນອນ ຂອງຕົນ.ໃນນີ້ພິເສດອັນທີ່ຂ້າພະເຈົ້າຍາມໃດກໍບໍ່ສາມາດລືມໄດ້ນັ້ນແມ່ນໂຮງຮຽນ ອິນແປງ. ສະຖານທີ່ຊຶ່ງ ຄົນຕະກູນພິມມະສານ ຂອງຂ້າພະເຈົ້າໄດ້ເຂົ້າຮັບການສຶກສາ ຈາກບັນດາຄູອາຈານ ທີ່ໄດ້ສິດສອນອົບຮົມບົ່ມເພາະ ເຮັດໃຫ້ຂ້າພະເຈົ້າກາຍເປັນຄົນດີຂອງສັງຄົມ ແລະປະເທດຊາດມາຈົນເຖິງທຸກມື້ນີ້.

ດ້ວຍຈິດສຳນຶກ ແລະຄວາມກະຕັນຍູຮູ້ຄຸນ ຕໍ່ບ້ານເກີດ ແລະຄູອາຈານທັງຫຼາຍ ໂດຍສະເພາະແມ່ນເພື່ອເປັນການຊຸກຍູ້, ສົ່ງເສີມການສຶກສາໄປສູ່ດິນແດນມາຕຸພູມໃຫ້ມີບາດກ້າວຂະຫຍາຍຕົວ ຕາມແນວທາງ ນະໂຍບາຍຂອງພັກ ແລະລັດໃນການພັດທະນາຊັບພະຍາກອນມະນຸດ ເພື່ອໃຫ້ລູກຫຼານທີ່ບ້ານເກີດ ມີເງື່ອນໄຂໄດ້ສຶກສາຮ່ຳຮຽນດ້ວຍຄວາມສະດວກ ແລະມີລະດັບນັບມື້ນັບສູງຂຶ້ນ, ປະກອບສ່ວນເຂົ້າ ໃນການສ້າງສາ ແລະພັດທະນາປະເທດຊາດໃຫ້ກ້າວໄປສູ່ຄວາມຈະເລີນຮຸ່ງເຮືອງໃນອະນາຄົດ. ຄອບຄົວ ພິມມະສານ ພວກຂ້າພະເຈົ້າຈະຕັ້ງໜ້າຂໍປະກອບສ່ວນຊຸກຍູ້ ສົ່ງເສີມການສຶກສາໃຫ້ແກ່ໂຮງຮຽນບ້ານເກີດ ຂອງຕົນຕະຫຼອດໄປຕາມຄວາມສາມາດຕົວຈິງຂອງຕົນ.



ປີນີ້ ແມ່ມີອາຍຸ 92 ປີແລ້ວ



ລະນຶກເຖິງ ໂຮງຮຽນອິນແປງສະເໝີ

.....

ພິມພາ ວົງວຽງຄຳ
ອະດີດນັກຮຽນຮຸ່ນທຳອິດຂອງໂຮງຮຽນອິນແປງ
ປັດຈຸບັນອາຍຸ 72 ປີ, ກຳມະການແນວລາວສ້າງຊາດ ປະຈຳ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ

ຫວນຄືນອະດີດ 50 ປີກວ່າທີ່ຜ່ານມາ ທຸກສິ່ງທຸກຢ່າງ ກ່ຽວກັບການຮ່ຳຮຽນ ແລະດຳລົງຊີວິດເປັນນັກຮຽນຢູ່ໂຮງຮຽນອິນແປງ ຍັງຝັງເລິກຢູ່ໃນຄວາມຊົງຈຳຂອງ ຂ້າພະເຈົ້າຕະຫຼອດມາ ແລະບໍ່ມີວັນຈະຫຼົງລືມໄດ້.

ໂຮງຮຽນດັ່ງກ່າວ ປຸກຊູພື້ນດິນທຳມະຊາດ, ແອັມແປ້ນ ມຸງຫຍ້າ ເປີດສິດສອນ ນັກຮຽນຮຸ່ນ ປະຖົມມະເລີກໃນສົກປີ 1949-50, ໂດຍແມ່ນທ່ານຄູຄຳຈັນ ຄົນປາກຊັນ ແຂວງບໍລິຄຳໄຊ ເປັນຄູສອນ. ຂ້າພະເຈົ້າໄດ້ເຂົ້າຮຽນຢູ່ໂຮງຮຽນນີ້ ນັບແຕ່ຫ້ອງທີ 5 ຫ້ອງທີ 4, ຫ້ອງທີ 3. ບັນດານັກຮຽນ ທີ່ມາຮ່ວມຮຽນຢູ່ນີ້ໄດ້ພາກັນຍ່າງມາດ້ວຍຕີນ ເປົ່າກຳມີ ໄດ້ຮັບຄວາມຫຍຸ້ງຍາກ ລຳບາກຫຼາຍສົມຄວນ. ຕ້ອງໄດ້ພ້ອມກັນອົດທົນຜ່ານ ຜ່າອຸປະສັກ ນານາປະການເຊັ່ນ: ຂາດເຂີນອຸປະກອນການສິດສອນ ແລະການຮ່ຳຮຽນ. ຕົນເອງພ້ອມໝູ່ຮຸ່ນດຽວກັນ 2 ຄົນຄື: ທ່ານບຸນໂຮມ ນາຖາວົງ ແລະທ່ານທັນ ຖາວອນ ພາຍຫຼັງຈົບຫ້ອງທີ 3 ຈາກໃນໂຮງຮຽນນີ້ແລ້ວ ກໍໄດ້ສືບຕໍ່ຮ່ຳຮຽນຫ້ອງທີສອງນ້ອຍ ຫ້ອງທີສອງໃຫຍ່ ແລະຫ້ອງທີໜຶ່ງຢູ່ໂພນສະຫວັນ ແລະຮຽນຕໍ່ຂັ້ນມັດທະຍົມຢູ່ເມືອງ ຄູນ ຊຶ່ງແມ່ນຄົນຝຣັ່ງເປັນຄູສອນດ້ວຍພາສາຝຣັ່ງ, ຮຽນ 4 ປີ ກໍເສັງຈົບມັດທະຍົມຕົ້ນ (Diplome) ໄດ້ຮັບໃບປະກາສະນິຍະບັດໃນປີ1960 ຊຶ່ງແມ່ນຝຣັ່ງເສດເປັນຜູ້ອອກໃຫ້.

ເຖິງວ່າໂຮງຮຽນເກົ່າຈະຖືກທຳລາຍເຜົາຜານໄປໃນປາງສົງຄາມ,ພາຍຫຼັງສັນຕິ ພາບກັບຄືນມາ ໂຮງຮຽນອິນແປງກໍໄດ້ຮັບການສ້າງຄືນໃໝ່ ດ້ວຍຄວາມຮ່ວມແຮງ ຮ່ວມ ໃຈຂອງປະຊາຊົນກັບການຈັດຕັ້ງ.ມາບັດນີ້ຂົງເຂດນີ້ຍິ່ງໄດ້ຮັບການພັດທະນາຮອບດ້ານ ທັງຖະໜົນຫົນທາງພ້ອມຂົວ ແຕ່ໜອງເປັດຮອດລາດບວກ,ທາງພ້ອມຂົວແຕ່ບ້ານດ່ອງ ຫາບ້ານຄັງວຽງ ໂດຍມີລຸງບຸນຍັງ ແລະປ້າຄຳເມິງ ໄດ້ເອົາໃຈໃສ່ຊຸກຍູ້ ຊ່ວຍເຫຼືອສົມທົບ ກັບອຳນາດການປົກຄອງທ້ອງຖິ່ນ ນຳເອົາໄຟຟ້າ ແລະນ້ຳລິນມາຮັບໃຊ້ຊີວິດການເປັນ ຢູ່ຂອງປະຊາຊົນ ເຮັດໃຫ້ຂົງເຂດນີ້ມີໂສມໜ້າໃໝ່ພົ້ນເດັ່ນຂຶ້ນ ຢ່າງບໍ່ເຄີຍມີມາກ່ອນ .

ລຸງບຸນຍັງ+ປ້າຄຳເມີງ ວໍລະຈິດ ເປັນຜູ້ນຳພັກລັດ ທີ່ມີຈິດໃຈກວ້າງຂວາງ ເອື້ອເຟື້ອ ເຜື່ອແຜ່ມອງເຫັນໄກຕໍ່ໂຊກຊະຕາຂອງບ້ານເມືອງ, ອະນາຄົດຂອງລູກໆຫຼານໆ ໂດຍສະເພາະແມ່ນຜູ້ຢູ່ໃນເຂດຊົນນະບົດສອກຫຼີກ. ທ່ານທັງສອງໄດ້ທຸ່ມເທ ສະຕິປັນຍາ ເຫື່ອແຮງ ຫົວຄິດປະດິດສ້າງ ນຳເອົາເງິນຄຳຂອງຕົນ ແລະຄົ້ນຄວ້າແຫຼ່ງທຶນຈາກຍາດພີ່ນ້ອງ ແລະຜູ້ໃຈບຸນເພື່ອສົມທົບທຶນ ເຂົ້າໃສ່ການກໍ່ສ້າງໂຮງຮຽນອິນແປງໃຫ້ພຽງພໍກັບຄວາມຕ້ອງການຂອງພວກລູກຫຼານ ທີ່ນັບມື້ນັບເພີ່ມຈຳນວນຂຶ້ນເລື້ອຍໆ.ພ້ອມນີ້ ກໍໄດ້ສ້າງເດີ່ນກິລາໄວ້ເປັນທີ່ອອກກຳລັງກາຍເພື່ອສຸຂະພາບ ແລະຫຼີກໄກຢາເສບຕິດ ອີກດ້ວຍ.

ໃນນາມ ນັກຮຽນເກົ່າຂອງໂຮງຮຽນອິນແປງຂ້າພະເຈົ້າຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ແລະສຳນຶກໃນຄຸນປະໂຫຍດອັນໃຫຍ່ຫຼວງຂອງໂຮງຮຽນ ແລະຄູອາຈານຜູ້ຖ່າຍທອດຄວາມຮູ້ຄວາສະຫຼາດຫຼັກແຫຼມໃຫ້ຂ້າພະເຈົ້າ ຈາກຈຸດເລີ່ມຕົ້ນທີ່ໂຮງຮຽນແຫ່ງນີ້ ພາໃຫ້ຂ້າພະເຈົ້າ ນຳພາຊີວິດ ແລະຄອບຄົວກ້າວໄປສູ່ຜົນສຳເລັດທຸກຢ່າງເທົ້າເຖິງປັດຈຸບັນນີ້. ໃນໂອກາດນີ້ຂ້າພະເຈົ້າຈຶ່ງປະກອບເງິນສ່ວນຕົວຕາງນ້ຳໃຈຂອງຄອບຄົວ ສົມທົບເຂົ້າໃນການສ້າງສາພັດທະນາໂຮງຮຽນແຫ່ງນີ້ຈຳນວນ 5,000,000 ກີບ (ຫ້າລ້ານກີບ).

ຂ້າພະເຈົ້າ ມີຄວາມດີອົກ ດີໃຈຕໍ່ຜົນງານອັນລ້ຳຄ່າຂອງທ່ານທັງສອງ ແລະຂໍວິງວອນເອົາສິ່ງສັກສິດໃນສາກົນລະໂລກນີ້ ຈົ່ງດົນບັນດານຄຸ້ມຄອງທ່ານທັງສອງພ້ອມດ້ວຍຄອບຄົວລູກຫຼານໃຫ້ຢູ່ເຢັນເປັນສຸກ,ມີສຸຂະພາບເຂັ້ມແຂງ,ອາຍຸໝັ້ນ ຂວັນຍືນ



ອິນແປງ ແຈ້ງສະຫວ່າງ

.....

ບຸນຕາ ດາລາວີ ຜອ. ທະນາຄານພັດທະນາລາວ,
ນັກຮຽນປະຖົມອິນແປງ (ນາໜອງ) ສົກປີ 1965-69: ເລົ່າເລື່ອງ
ຄຳຟອງ ພູມວົງໄຊ :ແຕ່ງເປັນກອນ

ດ້ວຍສຳນຶກໃນພະຄຸນຂອງ ຄູພອນສະໄໝ ວົງພະຈັນ
ຄູພິມພາ ແສງວົງຈິດ, ຄູພູມີ ທິບພະວອນ ພ້ອມອ້າຍເອື້ອຍຄູຜູ້ອື່ນໆ

ເຖິງຈະ ນັ່ງຢູ່ໃນຫ້ອງກວ້າງ ຕຶກໃຫຍ່ທັນສະໄໝ
ນັ່ງຕັ່ງນວມໃນແອ ຢູ່ເຢັນຫາຍຮ້ອນ
ແຂກມາຢາມຫຼາຍລົ້ນ ລະດັບສູງຫຼາຍຝ່າຍ
ຕາມແນວທາງພັກຊີ້ ສະໄໝນີ້ຮ່ວມມື ...

ແຕ່ກໍ ຍັງຄິດຄ້ອຍໆ ຄະນິງຮອດຕອນຫຼັງ
ຮຽນ ກ . ຂ ...ທຳອິດ ຢູ່ໂຮງຮຽນອິນແປງພີ້
ມີໝູ່ຍິງຊາຍພ້ອມ ສະໜຸກໃຈໄລ່ແລ່ນ
ຕາມກາງຄ້ຽງທົ່ງກວ້າງ ຕອນນັ້ນຊື່ນໃຈ ແທ້ເດ !

ພໍເມື່ອ ໄດ້ຫໍ່ເຂົ້າຈາກບ້ານ ພາຍຖົງແດງຍ່າງເປັນພົ້ງ
ແຕ່ນາສັ້ງ - ນາລາມ ເລາະລົ້ງໂຮມເຕົ້າ
ມາເຖິງໂຮງຮຽນນ້ອຍ ອິນແປງແຈ້ງສະຫວ່າງ
ຈິດກ່າຍຮຽນຮ່ຳຮູ້ ຕາມຄູຊີ້ສັ່ງສອນ ນັ້ນນາ

ຄອນຄອນ ເຖິງເມື່ອຍາມເລີກຫຼິ້ນ ເປັນພີ່ຍ່າງຕາມຄັ້ງ
ບາງຄົນກໍເລີຍນອນ ຮີ່ມແປກເຢັນອີ່ງເທົ້ຽ
ອອນຊອນຫຼາຍກໍຫຼັບຈ້ອຍ ມືນຕາມາບ່ເຫັນໝູ່ ໜີໄປກ່ອນ
ເກມຢອກກັນຈັ່ງຊີ້ ມີຂຶ້ນຈີ່ບ່ລືມ ຄິດເຖິງເດ !

ຈາກນັ້ນ ສິ່ງຄາມກໍ່ເກີດຂຶ້ນ ຍິນຖິ້ມລະເບີດທຳລາຍ
ໂຮງຮຽນກາຍເປັນຄວາມຝັນ ໄດ້ຫຼີກລຽງລີ່ງຫ້ວຍ
ໄປຮຽນຢູ່ນາໜອງພຸ້ນ ບ່ທັນດົນພັດຈຳພາກ
ອົບພະຍົບໄປຢູ່ເລື້ອຍໆ ພູພຶ້ງພຸ້ນຕ່ຳມາ ຍາກເດ

ຖ້າຈະ ພັນລະນາກໍບ່ລ້ອນ ສະຖານທີ່-ທີ່ເຄີຍຮຽນ
ແຕ່ກໍຍັງແພງພຽນຮັກ ຊື່ "ອິນແປງ" ໄວ້
ສົມວ່າ" ອິນແປງ" ນີ້ ມີພະຄຸນອະນັນເນກ
ສ້າງນັກຮຽນຫຼາຍຮຸ່ນໃຫ້ ຢາຍຢູ່ໄກ ແລະ ໃກ້
ໃຜກໍຮູ້ຮ່ວມເຫັນ

ໃນໂອກາດ ໂຮງຮຽນອິນແປງໄດ້ ບູລະນະໃໝ່ຂະຫຍາຍຕົວ
ຂໍ່ຊື່ນຊົມຍິນດີ ແລະຮ່ວມທຶນໂຮມເຕົ້າ
ເອົາຈິດໃຈປະສົ່ງສ້າງ ລວມສັດທານຳປ້າໃຫຍ່
ເປັນຂອງຂວັນສົ່ງຍູ້ ຊູຊ້ານຊ່ວຍປະຊາ ນີ້ແລ້ວ

ອັນໜຶ່ງ ວັນຄູມາຮອດແລ້ວ ຂໍແວ້ສົ່ງພອນໄຊ
ເຖິງພະຄຸນຂອງຄູ ຊູ່ຄົນກະເສີມສ້າງ
ນັກຮຽນຍິ່ງຄົນນີ້ ເປັນຄົນດີບ່ລືມຖິ່ນ
ໄດ້ຢູ່ວຽງໃຫຍ່ກວ້າງ ມີການງາມ ກ້າວໜ້າ
ບ່ລືມໃຫ້ເຫີດຄູ ໄດ້ແລ້ວ.



ຂໍຖືເປັນແຈ່ນແຍງທີ່ເຫຼື້ອມໃສ ແລະຂໍຮຳຮຽນຜັນຂະຫຍາຍ

.....

ບົວທາ ຂັດທິຍະ
ຫົວໜ້າກອງເລຂາຄະນະກຳມະການ
ແຫ່ງຊາດລາວ ເພື່ອມຄຸ້ມຄອງເສດຖະກິດ
ພິເສດ, ຄະນະບໍລິຫານງານສູນກາງຊາວໜຸ່ມ

ຂ້າພະເຈົ້າ ຕາງໜ້າໃຫ້ ຄອບຄົວຂັດທິຍະ ຂໍສະແດງຄວາມຊື່ນຊົມ ໃນແນວຄິດສ້າງສັນ ທີ່ເຕັມໄປດ້ວຍນ້ຳໃຈໄມຕີ ຂອງແມ່ຄຳເມິງ ວໍລະຈິດ ພ້ອມດ້ວຍຄອບຄົວ ແລະຍາດພີ່ນ້ອງ ທີ່ໄດ້ເຕົ້າໂຮມທຶນກໍ່ສ້າງອາຄານຮຽນ ມັດທະຍົມສົມບູນ ເຂດຄັງວຽງ (ອິນແປງ).

ຂ້າພະເຈົ້າ ຕີລາຄາສູງ ແລະຖືວ່າການປະກອບສ່ວນຂອງພີ່ນ້ອງ ທີ່ເຫຼື້ອມໃສ ຈິງໃຈ ໃນຄັ້ງນີ້ລ້ຳຄ່າ ຊຶ່ງບໍ່ມີສິ່ງອື່ນໃດຈະມາປຽບທຽບໄດ້, ແລະຂໍຖືເອົາແນວຄິດ ແລະການ ເຄື່ອນໄຫວເພື່ອການສຶກສາ ໃຫ້ແກ່ອະນຸຊົນ ເຍົາວະຊົນ ແລະການເຄື່ອນໄຫວພັດທະນາສັງຄົມ ຂອງແມ່ ຄຳເມິງ ເປັນແບບຢ່າງເພື່ອຜັນຂະຫຍາຍ

ຄອບຄົວຂັດທິຍະ ຊຶ່ງເປັນລູກຫຼານ ຂອງບັນພະບູລຸດ ແຫ່ງດິນແດນຊຽງຂວາງ ວິຣະຊົນ ພູມໃຈປະກອບສ່ວນເງິນຈຳນວນ 25,000,000 ກີບ ເພີ່ມກ້ອນທຶນພັດທະນາຊັບພະຍາກອນມະນຸດ ເວົ້າລວມ, ເວົ້າສະເພາະ ແມ່ນສ້າງລູກຫຼານໃນດິນແດນຄັງວຽງ ເມືອງແປກ ວິຣະຊົນໃຫ້ເປັນຄົນດີ ມີອະນາຄົດ ອັນສົດໃສ ເພື່ອສືບຕໍ່ພາລະກິດ ພັດທະນາປະເທດຊາດໃນອະນາຄົດອັນຍາວໄກ. ຂໍສະແດງຄວາມພາກພູມໃຈ ທີ່ໄດ້ຮ່ວມສ້າງກຸສົນອັນຍິ່ງໃຫຍ່ ແລະມີຜົນປະໂຫຍດອັນກວ້າງໄກ ນຳພີ່ນ້ອງທຸກໆຄົນ.

ຂໍອວຍພອນ ແດ່ຊາວພວນທັງຫຼາຍຈົ່ງມີແຕ່ຄວາມສຸກ ແລະມີສາມັກຄີເປັນປຶກແຜ່ນແໜ້ນໜາ ພ້ອມກັນພັດທະນາປະເທດຊາດບ້ານເມືອງ ໃຫ້ຈະເລີນຮຸ່ງເຮືອງ ປົກປັກຮັກສາທົ່ງຄັງປ່າແປກໃຫ້ຂຽວສົດໃສ ໜ້າອອນຊອນຕະຫຼອດໄປ ໃຫ້ມີທຸງພັກທຸງຊາດ ແລະທຸງຊາວໜຸ່ມ ປົວສະບັດໃນດິນແດນເມືອງພວນແຫ່ງນີ້ຕະຫຼອດໄປ.



ໂຮງຮຽນອິນແປງ ໃນຄວາມຊົງຈຳຂອງຂ້ອຍ

.....

ສຸພາມິດ ບຸນລາວົງ (ສິດາ)


ຂ້ອຍຖືກຳເນີດ ໃນຕູບນ້ອຍໆຂອງຄອບຄົວ ແລະເຕີບໃຫຍ່ຂຶ້ນບົນດິນແດນທີ່ໃກ້ກັບໂຮງຮຽນອິນແປງແຫ່ງນີ້. ພໍແຕ່ຮູ້ດຽງສາຄວາມເປັນມະນຸດ ຂ້ອຍກໍໄດ້ເຫັນແລະຮູ້ວ່າມີໂຮງຮຽນຕັ້ງຢູ່ຄັງທາດ. ໂຮງຮຽນນີ້ ເປັນແຫ່ງທຳອິດ ທີ່ຂ້ອຍໄດ້ກ້າວເຂົ້າສູ່ການສຶກສາ ແລະກໍເປັນບ່ອນໜຶ່ງທີ່ຂ້ອຍມີຄວາມຜູກພັນໃນການດຳລົງຊີວິດ ຕາມປະສາເດັກນ້ອຍລ້ຽງງົວ ລ້ຽງຄວາຍ ຢູ່ຕາມທົ່ງຫຍ້າຄັງທາດ.

ຈາກວັນນັ້ນມາເຖິງວັນນີ້ ຂ້ອຍຮູ້ສຶກວ່າມັນເປັນເວລາດົນນານພໍສົມຄວນ ແລະທັງຊີວິດຕົນເອງກໍໄດ້ຜ່ານຜ່າອຸປະສັກນານາປະການຢ່າງຫຼວງຫຼາຍ ກ່ອນຈະມາເຖິງຈຸດນີ້. ສຳລັບຂ້ອຍແລ້ວໂຮງຮຽນແຫ່ງນີ້ ກໍເປັນສ່ວນໜຶ່ງ ທີ່ໄດ້ໃຫ້ການຊຸບຫຼໍ່ ຂ້ອຍຈາກຄົນຫູໜວກຕາບອດ ໃຫ້ກາຍເປັນຄົນຫູແຈ້ງຕາສະຫວ່າງ ເປັນຄົນມີການສຶກສາ ມີລະດັບຄວາມຮູ້ ຄວາມສາມາດຂັ້ນສູງ ແລະໄດ້ຮັບໃຊ້ຊາດ-ຮັບໃຊ້ສັງຄົມທຸກວັນນີ້.

ນອກຈາກ ຂໍສະແດງຄວາມຮູ້ບຸນຄຸນຕໍ່ການນຳພັກ-ລັດ ແລະບັນດາອະດີດຄູອາຈານໃນໂຮງຮຽນແຫ່ງນີ້ ດ້ວຍປັດໃຈເລັກໆນ້ອຍໆ ເພື່ອເປັນການປະກອບສ່ວນເຂົ້າໃນການສ້າງໂຮງຮຽນມັດທະຍົມສົມບູນອິນແປງແຫ່ງນີ້ ດ້ວຍຄວາມຈິງໃຈ ແລະເພື່ອສືບຕໍ່ຮັກສາຊື່ສຽງຂອງ ໂຮງຮຽນແຫ່ງນີ້ໄວ້ຊົ່ວຟ້າກາລະນານ. ຄວາມຊົງຈຳຄິດເຖິງໂຮງຮຽນອິນແປງ ຍັງຄົງຝັງເລິກໃນດວງໃຈຂອງຄົນຊື່ ສຸພາມິດ ບຸນລາວົງ ຫຼື ສິດາ ຊຶ່ງເປັນບຸດຂອງ ພໍ່ຂຽງຣົມ ແລະແມ່ທັນນີ ຄົນບ້ານທາດຄັງວຽງ ທີ່ເຕີບໃຫຍ່ຈາກຕູບນ້ອຍໆຂອງຄອບຄົວທຸກຍາກໃນເມື່ອກ່ອນ,ປັດຈຸບັນ ໄດ້ເປັນຮອງປະທານສະພາຜູ້ອຳນວຍການລັດວິສາຫະກິດ ພັດທະນາເຂດພູດອຍ.

ວັນທີ 25 ສິງຫາ 2010

ຄົນພວນບ້ານທາດ ສຸພາມິດ ບຸນລາວົງ (ສິດາ)



ພູມໃຈທີ່ໄດ້ປະກອບສ່ວນ

ຄຳໄຜ່ ເມືອງພອນ ພ້ອມຄອບຄົວ

ເຖິງຈະມີປັດໄຈອັນເລັກນ້ອຍ ແຕ່ກໍພູມໃຈທີ່ໄດ້ຮ່ວມສົ່ງເສີມການສຶກສາ ເຂດຄັງວຽງ ເຊິ່ງເປັນຊຸມຊົນທີ່ໜາແໜ້ນ ແລະແມ່ນຄວາມປະສົງຂອງລູກຫຼານ ທີ່ຍັງຂາດໂອກາດ ແລະກໍແມ່ນຄວາມຕັ້ງໃຈ ທີ່ບໍລິສຸດຜຸດຜ່ອງຂອງຂ້າພະເຈົ້າ ພ້ອມດ້ວຍຄອບຄົວ ທີ່ຮ່ວມກັບພີ່ໆນ້ອງໆໃນຄອບຄົວໃຫຍ່ ວໍລະຈິດ ໄດ້ປະກອບສ່ວນສົ່ງເສີມການສຶກສາໃນເຂດສອກຫຼີກຫ່າງໄກ. ວຽກງານ ດັ່ງກ່າວເປັນຂໍກຸນແຈທີ່ສຳຄັນໄຂປະຕູໄປສູ່ຄວາມກ້າວໜ້າຂອງຍຸກສະໄໝ. ຂໍຝາກນ້ຳໃຈໄວ້ກັບຄູອາຈານ ພໍ່ແມ່ ລູກຫຼານໃນເຂດຄັງວຽງ (ອິນແປງ)ດ້ວຍຄວາມຮັກແພງທຸກໆຄົນ.

ຂໍຂອບໃຈຢ່າງສູງ ທີ່ປ້າ ຄຳເມີງ ໄດ້ໃຫ້ໂອກາດຮ່ວມງານທີ່ສຳຄັນໃນຄັ້ງນີ້ ດ້ວຍຄວາມຈິງໃຈຂອງ ຄຳໄຜ່ ເມືອງພອນ ພ້ອມດ້ວຍຄອບຄົວລູກເຕົ້າ.





ໄດ້ຮຽນໜັງສືໂຕ ກ. ຢູ່ໂຮງຮຽນອິນແປງນີ້

.....

ສີສົມພູ ນັນທະພອນ ພ້ອມຄອບຄົວ

ຂ້າພະເຈົ້າ ມີຄວາມພາກພູມໃຈຢ່າງຍິ່ງທີ່ໄດ້ ເກີດເປັນລູກບ້ານຫຼານເມືອງ ເຂດຄັງວຽງ ແລະກໍໄດ້ຮຽນໜັງສືໂຕ ກ. ໂຕ ຂ... ທຳອິດໃນໂຮງຮຽນແຫ່ງນີ້. ຂ້າພະເຈົ້າ ມີຄວາມຮັກ ແລະຜູກພັນບ້ານເກີດເມືອງນອນ ດ້ວຍຊີວິດຈິດໃຈມາຕະຫຼອດ. ເມື່ອປ້າ ຄຳເມິງ ມອບໝາຍວຽກງານກໍ່ສ້າງອາຄານຮຽນ ໃຫ້ຂ້າພະເຈົ້າຮັບຜິດຊອບໃນຄັ້ງນີ້. ຂ້າພະເຈົ້າ ຈຶ່ງໄດ້ຕັ້ງໃຈເຮັດດ້ວຍຄວາມພາກພູມໃຈ ແລະສູ້ຊົນໃຫ້ສຳເລັດຕາມແຜນການເປັນຢ່າງດີ. ພ້ອມນີ້ກໍໄດ້ປະກອບທຶນຮອນ ຈຳນວນໜຶ່ງສົມທົບນຳເພີ່ນ, ທັງນີ້ ກໍເພື່ອນ້ອມລຳລຶກ ແລະຕອບບຸນແທນຄຸນພໍ່ແມ່, ແຜ່ນດິນທີ່ໃຫ້ກຳເນີດ ແລະ ຄູອາຈານ ທີ່ໄດ້ສິດສອນວິຊາຄວາມຮູ້ ຄວາມສາມາດໃຫ້ແກ່ຕົນເອງ.





ການປະກອບສ່ວນຂອງ ຄູອາຈານແລະນັກຮຽນ ໃນການກໍ່ສ້າງ

.....

ທ່ານ ວັນດີ ສີບຸນເຮືອງ ຜູ້ອຳນວຍການ ໂຮງຮຽນມັດທະຍົມສົມບູນ ອິນແປງ

ນັບວ່າເປັນບຸນຄຸນອັນສູງສົ່ງ ແລະໃຫຍ່ຫຼວງ ຂອງປະຊາຊົນເຂດຍອດງຶ່ມ ໂດຍສະເພາະແມ່ນລູກຫຼານ ແລະປະຊາຊົນເຂດຄັງວຽງ ຂອງພວກເຮົາທີ່ໄດ້ຮັບອາຄານຮຽນຫຼັງໃໝ່ຊຶ່ງເປັນຂອງຂວັນອັນປະເສີດລ້ຳຄ່າຈາກປ້າຄຳເມິງວໍລະຈິດພ້ອມຄອບຄົວ ແລະຍາດມິດຜູ້ໃຈບຸນທັງຫຼາຍ. ເກືອບວ່າ 20 ກວ່າປີແລ້ວທີ່ພວກເຮົາ ມີຄວາມຝັນແລະຄອງຄອຍຢາກໄດ້ໂຮງຮຽນຫຼັງໃໝ່ ເພື່ອໃຫ້ລູກຫຼານໄດ້ໃຊ້ສຶກສາຮ່ຳຮຽນ ພໍ່ແມ່ປະຊາຊົນ ຄູອາຈານ ແລະນັກຮຽນ ມີຄວາມຫວັງຕໍ່ອາຄານຮຽນຫຼັງນີ້ຫຼາຍ ດັ່ງນັ້ນເລີ່ມແຕ່ມີການກະກຽມປຸກສ້າງ ພໍ່ແມ່ປະຊາຊົນນັກຮຽນ ແລະຄູອາຈານ ກໍໃຫ້ຄວາມສົນໃຈ ແລະໄດ້ປະກອບສ່ວນຕາມຄວາມສາມາດເຊັ່ນວ່າ:

1. ໄດ້ຂຸດປັບໜ້າດິນບ່ອນທີ່ຈະປຸກສ້າງ 650 ແຮງງານ
2. ໄດ້ເອົາດິນ ແລະຂົນດິນ 750 ແຮງງານ
3. ປະກອບໄມ້ຕີແບບ ຈຳນວນ 8 ແມັດກ້ອນ
4. ປະກອບໄມ້ຕີແບບ (4 x 8) ຈຳນວນ 2 ແມັດກ້ອນ
5. ປະກອບໄມ້ຄ້ຳແບບ ຈຳນວນ 500 ລຳ
6. ນອກນັ້ນ ຍັງໄດ້ໃຫ້ກເຂົ້າປາອາຫານແກ່ກຳມະກອນເຊັ່ນວ່າ: ເຂົ້າ, ເປັດ ໄກ່, ຜັກ ແລະອື່ນໆຈຳນວນ 320 ກິໂລ.ຖ້າຄິດເປັນມູນຄ່າຈະຕົກຢູ່ປະມານ 1.980.000 ກີບ.

ສຳລັບໂຮງຮຽນປະກອບສ່ວນມີດັ່ງນີ້:

1. ໄດ້ເອົາດິນ ແລະຂົນດິນເຂົ້າໃນໂຮງຮຽນ 615 ແຮງງານ
2. ຂຸດຫ້ອງນ້ຳ ຈຳນວນ 23 ແຮງງານ
3. ແປງດິນອ້ອມໂຮງຮຽນບ່ອນຈະປຸກສ້າງ ຈຳນວນ 620 ແຮງງານ.

ເມື່ອໄດ້ອາຄານຮຽນໃໝ່ແລ້ວ ສິ່ງສຳຄັນຂອງພວກເຮົາ ແມ່ນຈະໄດ້ສຶກສາອົບຮົມແນວຄິດໃຫ້ ຄູອາຈານ ແລະນັກຮຽນ ພ້ອມທັງພໍ່ແມ່ປະຊາຊົນ ໃຫ້ເຂົ້າໃຈວ່າກ່ອນຈະໄດ້ອາຄານຮຽນຫຼັງໃໝ່ນີ້ ແມ່ນມີຄວາມຍຸ້ງຍາກຫຼາຍປານໃດ ໄດ້ແລ້ວໂຮງຮຽນມີຄວາມສຳຄັນແນວໃດ, ແລະຄວນເຮັດຫຍັງແດ່ເພື່ອເປັນການຮູ້ບຸນຄຸນຂອງຜູ້ຊ່ວຍສ້າງ ຈາກນັ້ນຈະເວົ້າເຖິງການປົກປັກຮັກສາຄືວ່າ: ຈະຈັດຕັ້ງນັກຮຽນເວນຍາມເປັນປະຈຳ, ປະສານສົມທົບ ກັບອຳນາດການປົກຄອງທ້ອງຖິ່ນ ວາງກົດລະບຽບຄຸ້ມຄອງໂຮງຮຽນ ແລະປະສານສົມທົບກັບຊາວໜຸ່ມບ້ານຢູ່ອ້ອມຂ້າງໂຮງຮຽນ ເພື່ອເຮັດວຽກງານຮັກສາຄວາມສະຫງົບປອດໄພ ພ້ອມທັງຊອກຫາແຫຼ່ງທຶນ ມາສະໜັບສະໜູນການເວນຍາມຮັກສາຄວາມປອດໄພ

ຂໍສະແດງຄວາມຮູ້ບຸນຄຸນມາຍັງ ປ້າຄຳເມີງ ວໍລະຈິດ ພ້ອມຄອບຄົວ ແລະທ່ານຜູ້ໃຈບຸນທັງຫຼາຍເປັນຢ່າງສູງ.

ຈະໄດ້ໂຮງຮຽນ ບໍ່ແມ່ນງ່າຍ



ທິດບຸນຜັນ ຈັນທະສີງ
ຊາວບ້ານຄັງວຽງ

ກ່ອນຈະໄດ້ໄມ້ມາປຸກສ້າງໂຮງຮຽນ ບໍ່ແມ່ນຂອງງ່າຍ, ແຕ່ກ່ອນ ແມ່ນໄດ້ຍ່າງໄປເລືອຍໄມ້ ຢູ່ພູສາລາໂຕະຊຶ່ງຫ່າງຈາກນີ້ ປະມານ 4 ກິໂລແມັດພຸ້ນ. ສ່ວນຫຼາຍແມ່ນໄດ້ແບ່ງໃສ່ຫົວເຮືອນ ເພື່ອຮັບຜິດຊອບໄປຊອກໄມ້. ຊາວບ້ານພາກັນຍ່າງໄປນອນເລືອຍໄມ້ຢູ່ປ່າ ເປັນເວລາຫຼາຍມື້ຕິດຕໍ່ກັນ. ຂ້ອຍກໍເປັນຜູ້ໜຶ່ງ ທີ່ໄດ້ເອົາໃຈໃສ່ປະກອບສ່ວນເຫື່ອແຮງ ສ້າງໂຮງຮຽນໃຫ້ລູກໃຫ້ຫຼານ

ສິ່ງທີ່ຫຍຸ້ງຍາກ ແລະມີຄວາມສ່ຽງກວ່າໝູ່ກໍ່ແມ່ນລູກລະເບີດ ໝາກໂບມບີ, ໝາກໂບມ ລູກປືນ. ມີຫຼາຍຄັ້ງ ເວລາຊາວບ້ານຂຸດປັບໜ້າດິນປຸກສ້າງໂຮງຮຽນ ແມ່ນໄດ້ພົບໝາກໂບມບີ. ເວົ້າແທ້ ເຂດນີ້ຍັງມີລູກລະເບີດຫຼາຍ ແຕ່ກໍເປັນຈັ່ງບຸນບໍ່ມີໃຜໄດ້ຮັບອັນຕະລາຍຍ້ອນວ່າພາກັນລະມັດລະວັງທີ່ສຸດ. ການທີ່ປ້າຄຳເມີງ ວໍລະຈິດ ມາຊ່ວຍສ້າງອາຄານຮຽນຫຼັງໃໝ່ກໍຊ່ຳກັບວ່າ ໄດ້ສ້າງເສັ້ນທາງ ແລະໄຂປະຕູໃຫ້ລູກຫຼານໄດ້ໄປເຖິງສະຫວັນ ແຫ່ງຄວາມເປັນຄົນພຸ້ນແຫຼ້ວ !



ໄດ້ທັງການສຶກສາ ແລະການກິລາ

ທ່ານ ເວີນຄຳ ດວງຜາສິດ
ຮອງຫົວໜ້າເຂດພັດທະນາຄັງວຽງ

ຂ້າພະເຈົ້າ ກໍເປັນຜູ້ໜຶ່ງທີ່ໄດ້ເອົາໃຈໃສ່ ປະກອບສ່ວນກໍ່ສ້າງໂຮງຮຽນແຫ່ງນີ້ ພ້ອມທັງປຸກລະດົມພໍ່ແມ່ປະຊາຊົນບັນດາເຜົ່າໃຫ້ໃສ່ໃຈຕໍ່ການສຶກສາ ການກິລາ ແລະ ສິລະປະຂອງລູກຫຼານ.

ໃນໄລຍະຜ່ານມາ ແມ່ນໄລຍະທີ່ປະຊາຊົນຂຸ້ນຂ້ຽວ ໃນການພັດທະນາ ເສດຖະກິດຄອບຄົວ, ມີຫຼາຍຄົນກໍຄິດຫຼາຍແງ່ຫຼາຍທາງ, ມີຈຳນວນໜຶ່ງບໍ່ເຫັນຄວາມ ສຳຄັນຂອງການສຶກສາເທົ່າທີ່ຄວນ, ດັ່ງນັ້ນການປະກອບສ່ວນ ໃຫ້ແກ່ການສຶກສາ ກໍບໍ່ເຂັ້ມແຂງປານໃດ. ເຖິງຢ່າງໃດກໍດີ ໃນການປຸກສ້າງອາຄານຮຽນ 2 ຫຼັງ ໃນໄລຍະ 2005-2006 ຜ່ານມານັ້ນ ປະຊາຊົນສ່ວນໃຫຍ່ກໍໄດ້ປະກອບສ່ວນວັດຖຸ ແລະເຫື່ອ ແຮງສ່ວນໜຶ່ງ ເຊັ່ນວ່າ:ໄມ້ຕີແບບ 19 ແມັດກ້ອນ,ໄມ້ຄ້ຳແບບ 950 ລຳ, ອອກແຮງງານ ປັບໜ້າດິນຊ່ວຍ ນາຍຊ່າງບໍ່ໄດ້ນັບຈຳນວນເລີຍ. ປະກອບສ່ວນດ້ວຍສະບຽງອາຫານ ຄິດເປັນເງິນ ປະມານ 2.100.000 ກີບ.

ຕໍ່ກັບການໄດ້ອາຄານຮຽນຫຼັງໃໝ່ນີ້ ເຫັນວ່າຊາວໜຸ່ມ ແລະເດັກນັກຮຽນ ມີຄວາມດີໃຈຫຼາຍ ເພາະນອກຈາກໄດ້ອາຄານຮຽນໃໝ່ຈົບງາມ ທີ່ຖາວອນແລ້ວ, ພິເສດ ຍັງໄດ້ເດີ່ນ ກິລາແບບ ຄົບວົງຈອນ ຊຶ່ງຈະໃຊ້ເປັນສູນເຝິກແອບກິລາຫຼາຍປະເພດ ໃຫ້ແກ່ ລູກຫຼານອີກດ້ວຍ. ໄລຍະທີ່ຜ່ານມາວຽກງານກິລາ-ສິລະປະໃນເຂດນີ້ ກໍຄືໃນໂຮງຮຽນ ກໍ່ບໍ່ຄ່ອຍເຂັ້ມແຂງປານໃດ, ເກືອບວ່າບໍ່ມີນັກກິລາ-ສິລະປະໄປແຂ່ງຂັນນຳໝູ່. ຂ້າພະເຈົ້າ ກໍມີຄວາມດີໃຈຫຼາຍ ແລະກໍຈະປະກອບສ່ວນເຝິກແອບລູກຫຼານ ຈົນສຸດຄວາມສາມາດ ຂອງຕົນ.



ຫຼາຍບັນຫາຈະຖືກແກ້ໄຂ

ທ່ານ ວັນສີ ທິຖາວອນ
ຫົວໜ້າກຸ່ມພັດທະນາເສດຖະກິດຄັ້ງວຽງ



ພໍ່ແມ່ ປະຊາຊົນມີຄວາມພາກພູມໃຈຫາອັນປຽບບໍ່ໄດ້ ແລະຂໍຮູ້ບຸນຄຸນຢ່າງລົ້ນເຫຼືອຂອງພັກ-ລັດທີ່ໄດ້ເອົາໃຈໃສ່ຊອກຫາແຫຼ່ງທຶນຈາກຫຼາຍພາກສ່ວນ ມາພັດທະນາການສຶກສາ ຢູ່ທ້ອງຖິ່ນຂອງພວກເຮົາ, ພິເສດ ແມ່ນຂໍສະແດງຄວາມຂອບອົກຂອບໃຈ ແລະຮູ້ບຸນຄຸນມາຍັງ ປ້າຄຳເມິງ ວໍລະຈິດ ພ້ອມຄອບຄົວ ລວມທັງອະດີດນັກຮຽນໂຮງຮຽນອິນແປງ ແລະທ່ານຜູ້ໃຈບຸນທັງຫຼາຍທີ່ໄດ້ ໃຊ້ຄວາມຮູ້ ຄວາມສາມາດ ສະຕິປັນຍາ ແລະວັດຖຸສິ່ງຂອງປະກອບສ່ວນພັດທະນາການສຶກສາ ກໍຄືການກໍ່ສ້າງອາຄານຮຽນຫຼັງໃໝ່ ເດີ່ນກິລາ ແລະສ້ອງແປງໂຮງຮຽນ ປະຖົມຫຼັງເກົ່າ ລວມເປັນເງິນມູນຄ່າເຖິງ1.8 ຕື້ກວ່າກີບ.

ເມື່ອກ່ອນ ນັກຮຽນທີ່ຈົບມັດທະຍົມປີທີ 3 (ມ.3)ຢູ່ເຂດນີ້ ຕ້ອງໄດ້ໄປຮຽນຕໍ່ຢູ່ໂຮງຮຽນມັດທະຍົມໜອງເປັດ ຊຶ່ງຫ່າງຈາກນີ້ປະມານ 10 ກິໂລແມັດ. ນັກຮຽນບາງຄົນຊ້ຳພັດໄກຈາກໂຮງຮຽນເຖິງ19-20 ກິໂລແມັດກໍມີ. ປະຊາຊົນໃນເຂດນີ້ ຈຶ່ງພົບຂໍ້ຫຍຸ້ງຍາກຫຼາຍໃນການສົ່ງລູກຫຼານໄປຮຽນ. ໃນ 2-3 ປີມານີ້ ນັກຮຽນຜູ້ໜຶ່ງໆຈຳຕ້ອງໄດ້ເສຍເງິນຈ້າງລົດໂດຍສານແຕ່ລະວັນ 6.000 ກີບ. ຖ້າຜູ້ໃດມີລູກຫຼານ 2-3 ຄົນຂຶ້ນໄປພໍ່ແມ່ກໍແຮ່ງຊ້ຳພົບບັນຫາຫຼາຍ. ລາຍໄດ້ຈາກການຂາຍເປັດ ຂາຍໄກ່ກໍບໍ່ພຽງພໍໃຫ້ລູກຈ້າງລົດໄປຮຽນ, ຍິ່ງໄປກວ່ານັ້ນ ການໄປຮຽນຂອງເດັກກໍມີຄວາມສ່ຽງຫຼາຍໂດຍສະເພາະ ແມ່ນຜູ້ໃຊ້ລົດຈັກ, ມີບາງຄົນກໍໄປບໍ່ຮອດໂຮງຮຽນ ຫຼືໄປໃນທາງອື່ນໆ. ຍ້ອນແນວນັ້ນ ພໍ່ແມ່ ຜູ້ປົກຄອງ ຈຳນວນໜຶ່ງຈຳຕ້ອງໄດ້ເອົາລູກອອກໂຮງຮຽນ. ສະເລ່ຍແລ້ວແຕ່ລະປີ ມີຜູ້ອອກໂຮງຮຽນກາງປີ ຫຼືບໍ່ສືບຕໍ່ຮຽນເລີຍປະມານ 15-18% ທຸກຝ່າຍກໍໄດ້ຊ່ວຍກັນຊອກຫາງອອກໃນຫຼາຍດ້ານ, ໂດຍສະເພາະກໍແມ່ນໄດ້ລະດົມ ຊຸມຊົນປະກອບສ່ວນແຮງງານ ແລະເງິນຄຳເພື່ອປຸກສ້າງໂຮງຮຽນໃຫ້ແກ່ລູກຫຼານ, ແຕ່ກໍຍັງບໍ່ໄດ້ມາດຕະຖານ ແລະພຽງພໍກັບຄວາມຮຽກຮ້ອງຕ້ອງການ ຈຶ່ງເຮັດໃຫ້ພົບບັນຫາຕະຫຼອດມາ. ດັ່ງນັ້ນການໄດ້ໂຮງຮຽນຫຼັງໃໝ່ ຄິດວ່າຄົງຈະຊ່ວຍແກ້ໄຂຫຼາຍບັນຫາໄດ້.





ໂສມໜ້າໃໝ່ ຂອງການສຶກສາໃນເຂດຄັງວຽງ

ທ່ານ ຄຳສີ ພັນທະວົງ
ຫ້ອງການສຶກສາທິການເມືອງແປກ

ເມື່ອກ່ອນໂຮງຮຽນ ມັດທະຍົມສຶກສາໃນເຂດນີ້ແມ່ນຕັ້ງຢູ່ບ້ານຄາຍ ມີຊື່ວ່າ: ໂຮງຮຽນ ມັດທະຍົມສຶກສາ ເມືອງແປກ ເລກ II ຊຶ່ງໄຂຂຶ້ນໃນສົກຮຽນ 1976-1977 ມາເຖິງສົກຮຽນ 1988-1989 ຈຶ່ງຖືກຍົກຍ້າຍຈາກບ້ານຄາຍມາຕັ້ງຢູ່ຄັງທາດ ຫຼືເອີ້ນວ່າ ບ້ານຄັງວຽງໃນປັດຈຸບັນ. ໃນໄລຍະຕົ້ນ ຄູແລະນັກຮຽນກໍບໍ່ຫຼາຍພໍເທົ່າໃດ, ມາຮອດ ສົກຮຽນ 2004-2005 ເຫັນວ່າປະຊາກອນໃນເຂດນີ້ໄດ້ເພີ່ມຂຶ້ນຫຼາຍ ແລະຈຳນວນນັກ ຮຽນກໍເພີ່ມຂຶ້ນ, ຄິດສະເລ່ຍແລ້ວຈຳນວນນັກຮຽນມີເຖິງ 46-47ຄົນ ຕໍ່ 1 ຫ້ອງ. ຍ້ອນ ວ່າອາຄານຮຽນບໍ່ພຽງພໍຕາມຄວາມຕ້ອງການ ຈຶ່ງເປັນເຫດໜຶ່ງພາໃຫ້ນັກຮຽນທີ່ຈົບ ຊັ້ນປະຖົມປີທີ 5 (ປ.5) ແລ້ວສືບຕໍ່ຮຽນຊັ້ນມັດທະຍົມປີທີ 1 ມີພຽງແຕ່ 92,34% ເທົ່າ ນັ້ນ ແລະເມື່ອເວລາຮອດປີທີ 3 ກໍຍັງເຫຼືອພຽງ 71,26% ເທົ່ານັ້ນ (ສະຖິຕິປີ 2006)

ຕົກມາເຖິງສົກຮຽນ 2006-07 ໂຮງຮຽນແຫ່ງນີ້ ຈຶ່ງໄດ້ມີການກໍ່ສ້າງອາຄານ ຮຽນໃໝ່ 1 ຫຼັງ ດ້ວຍທຶນຊ່ວຍເຫຼືອ ຈາກສະຖານທູດຍີ່ປຸ່ນ, ແຕ່ກໍ່ຍັງບໍ່ພຽງພໍ ກັບຈຳ ນວນນັກຮຽນທີ່ເພີ່ມຂຶ້ນ. ເວລາຈົບແລ້ວ ຈຳນວນນັກຮຽນແມ່ນເພີ່ມຂຶ້ນຢ່ຽນຕົ. ດັ່ງ ນັ້ນການໄດ້ອາຄານຮຽນຫຼັງໃໝ່ ອັນເປັນຂອງຂວັນພິເສດ ຈາກປ້າຄຳເມິງ ວໍລະຈິດ ພ້ອມ ຄອບຄົວ ແລະທ່ານຜູ້ໃຈບຸນທັງຫຼາຍນັ້ນ ຈະຊ່ວຍແກ້ໄຂບັນຫາການຂາດແຄນ ຫ້ອງຮຽນໄດ້ເປັນຢ່າງດີ. ຄາດວ່າຫ້ອງຮຽນໃໝ່ ຈະພຽງພໍກັບການເພີ່ມຂຶ້ນຂອງ ນັກຮຽນ. ອາຄານຮຽນຫຼັງໃໝ່ທີ່ໄດ້ຮັບການກໍ່ສ້າງຂຶ້ນນີ້ ໄດ້ຕອບສະໜອງຕາມແຜນ ພັດທະນາການສຶກສາ ຂອງພະແນກສຶກສາທິການ ແຂວງຊຽງຂວາງ ກຳນົດໄວ້ ໂດຍສະພາະແມ່ນ ແຜນງານຂະຫຍາຍໂອກາດທາງການສຶກສາໃຫ້ປາກົດເປັນຈິງ.

ເພີ່ມໂອກາດທາງການສຶກສາ



ທ່ານ ສົມໃຈ ມົວຫວ່າງຢາ
ຫົວໜ້າພະແນກສຶກສາທິການ
ແຂວງຊຽງຂວາງ

ໃນແຜນພັດທະນາການສຶກສາ ເພື່ອທຸກຄົນຂອງແຂວງແຕ່ປີ 2010 - 2015 (EFA) ໄດ້ວາງເປົ້າໝາຍສູ້ຊົນເພື່ອໃຫ້ບັນລຸຄື: 1.ຂະຫຍາຍໂຮງຮຽນໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກໃຫ້ທົ່ວເຖິງ 2. ຂະຫຍາຍການຮຽນ ການສອນຫ້ອງຄວບໃຫ້ກວ້າງຂວາງ 3. ຊອກຫາແຫຼ່ງທຶນປຸກ ສ້າງໂຮງຮຽນຈາກຫຼາຍໆພາກສ່ວນເທົ່າທີ່ມີເງື່ອນໄຂ 4. ປຸກລະດົມຊຸມຊົນປະກອບສ່ວນ ສ້າງໂຮງຮຽນເຄິ່ງຖາວອນໃຫ້ຫຼາຍເຊັ່ນວ່າ: ປະຊາຊົນປະກອບສ່ວນໄມ້ ແລະແຮງງານ, ລັດປະກອບສັງກະສີ, ຕະປູ....5. ສ້ອມແປງໂຮງຮຽນ ເຄິ່ງຖາວອນທີ່ປະຊາຊົນສ້າງຂຶ້ນໃຫ້ດີດ້ວຍການລະດົມທຶນຈາກຊຸມຊົນ,ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (NGO) ແລະພາກສ່ວນອື່ນໆ.

ການສ້າງອາຄານຮຽນຫຼັງໃໝ່ ທີ່ມັດທະຍົມສຶກສາອິນແປງນີ້ ຈະແກ້ໄຂບັນຫາການເຂົ້າໂຮງຮຽນຂອງລູກຫຼານໃນເຂດຄັງວຽງແຫ່ງນີ້ ຍ້ອນວ່າຈຳນວນພົນລະເມືອງໃນກຸ່ມພັດທະນາເສດຖະກິດຄັງວຽງມີ 373 ຄອບຄົວ, ມີ 2074 ຄົນ, ກວມເອົາເຂດບໍລິການ 2 ແຫ່ງ ແລະກວມເອົາ 6 ບ້ານ, ນອກນັ້ນຍັງໄດ້ຮັບເອົາ ນັກຮຽນຈາກບ້ານອື່ນໆອີກຫຼາຍບ້ານ. ທີ່ຜ່ານມາໂຮງຮຽນນີ້ມີຈຳນວນນັກຮຽນເຖິງ 40-42 ຄົນຕໍ່ຫ້ອງ ຊຶ່ງຖືວ່າຫຼາຍລົ້ນຫ້ອງ ຫຼືແອອັດໃນສົກປີ 2010-2011 ນີ້ ຖ້າຫາກຂະຫຍາຍຊັ້ນມັດທະຍົມປີທີ 7 (ມ.7) ໄດ້ກໍຖືວ່າພະແນກສຶກສາ ມີຜົນສຳເລັດອັນໃຫ່ຍຫຼວງ ໃນການສ້າງໂອກາດໃຫ້ລູກຫຼານໄດ້ສືບຕໍ່ຮ່ຳຮຽນ.ໃນຕໍ່ໜ້າພວກເຮົາມີເປົ້າໝາຍ ຈະກໍ່ສ້າງໂຮງຮຽນແຫ່ງນີ້ ເປັນໂຮງຮຽນຄົບວົງຈອນ ຫຼືວ່າເປັນໂຮງຮຽນຕົວແບບແຫ່ງໜຶ່ງໃນເຂດຄັງວຽງ.

ໃນນາມພະແນກສຶກສາແຂວງຊຽງຂວາງ ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຢ່າງສູງມາຍັງ ປ້າຄຳເມິງ ວໍລະຈິດ ພ້ອມຄອບຄົວ ແລະທ່ານທັງຫຼາຍ ທີ່ໄດ້ຊອກຫາແຫຼ່ງທຶນມາກໍ່ສ້າງໂຮງຮຽນແຫ່ງນີ້.ຫວັງວ່າໂອກາດໜ້າ ປ້າແລະບັນດາທ່ານຈະປຸກລະດົມພາກສ່ວນອື່ນໆ ໃຫ້ມາຊ່ວຍແຂວງຊຽງຂວາງພວກເຮົາຕື່ມອີກ.



ຂໍສະແດງຄວາມຮູ້ບຸນຄຸນ ແລະຂອບໃຈເປັນຢ່າງລົ້ນເຫຼືອ

.....

ດວງຕາ ສີປະເສີດ ປະທານສະມາຄົມ ພໍ່ແມ່ ນັກຮຽນຂອງກຸ່ມ ບ້ານພັດທະນາຄັງວຽງ

ຂ້າພະເຈົ້າມີຄວາມພາກພູມໃຈຢ່າງຍິ່ງທີ່ເຂດຂອງພວກເຮົາໄດ້ມີອາຄານຮຽນຫຼັງໃໝ່ ໃຫ້ລູກຫຼານໄດ້ໃຊ້ເພື່ອການສຶກສາຮ່ຳຮຽນ. ໃນໄລຍະຜ່ານມາໂຮງຮຽນຢູ່ກຸ່ມບ້ານຂອງພວກເຮົາມີອາຄານຮຽນໜ້ອຍຫຼັງ ຊຶ່ງບາງຫຼັງກໍເກົ່າແກ່ຊຸດໂຊມ ແລະບໍ່ແໜ້ນໜາ. ການຮຽນ-ການສອນກໍມີແຕ່ຂັ້ນປະຖົມ ແລະມັດທະຍົມຕອນຕົ້ນເທົ່ານັ້ນ. ມາບັດນີ້ພວກເຮົາໄດ້ມີອາຄານຮຽນຫຼັງໃໝ່ ທັງໃຫຍ່ທັງງາມ ແລະທັງ ແໜ້ນໜາຖາວອນ ຊຶ່ງຈະເຮັດໃຫ້ພວກເຮົາສາມາດຍົກລະດັບການສຶກສາຂຶ້ນເປັນມັດທະຍົມສົມບູນ ແລະ ອຳນວຍຄວາມສະດວກ ຢ່າງທີ່ບໍ່ເຄີຍມີມາກ່ອນ ໃຫ້ແກ່ລູກຫຼານຂອງພວກເຮົາ.

ຂ້າພະເຈົ້າ ພ້ອມດ້ວຍພໍ່ແມ່ພີ່ນ້ອງ ແລະລູກຫຼານຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງລົ້ນເຫຼືອນຳລຸງ ບຸນຍັງ ແລະປ້າ ຄຳເມິງ ວໍລະຈິດ ພ້ອມດ້ວຍລູກຫຼານຍາດຕິພີ່ນ້ອງ ແລະເພື່ອນມິດທີ່ໄດ້ມີນ້ຳໃຈອັນປະເສີດ ມີຄວາມເປັນຫ່ວງເປັນໃຍຕໍ່ອະນາຄົດຂອງລູກຫຼານໃນເຂດຄັງວຽງ ຈຶ່ງໄດ້ໃຫ້ການອຸປະຖຳຄ້ຳຊູ ຕໍ່ຊາວບ້ານ ແລະ ລູກຫຼານຂອງພວກເຮົາມີບ່ອນສຶກສາຮ່ຳຮຽນຢ່າງເປັນລະບົບຕໍ່ເນື່ອງມີຄວາມສະດວກສະບາຍ ສ້າງພື້ນຖານອັນຈຳເປັນ ສຳລັບຂະຫຍາຍໂອກາດທາງການສຶກສາ.





ຈະຍົກລະດັບຄຸນນະພາບການສຶກສາ

.....

ນາງ ສຸດທາ ພິມມະສອນ
ຄູສອນວິຊາພາສາລາວ-ວັນນະຄະດີຊັ້ນ ມ. 2
ທັງຮັບຜິດຊອບວຽກງານສິລະປະ ວັນນະຄະດີ

ຂ້າພະເຈົ້າເປັນຄູສອນຢູ່ໂຮງຮຽນແຫ່ງນີ້ ຈຶ່ງຮູ້ເຫັນວ່າອາຄານຂອງໂຮງຮຽນນີ້ມີຄວາມເກົ່າແກ່ຫຼາຍ ຫ້ອງຮຽນກໍບໍ່ພຽງພໍ ກັບຄວາມຮຽກຮ້ອງຕ້ອງການ ເຮັດໃຫ້ການຮຽນ-ການສອນຂອງຄູ ແລະນັກຮຽນບໍ່ສາມາດຂະຫຍາຍຕົວເທົ່າທີ່ຄວນ. ໃນໂອກາດນີ້ເຫັນວ່າໂຮງຮຽນຂອງພວກເຮົາໄດ້ມີໂສມໜ້າໃໝ່ ຍ້ອນໄດ້ຮັບການອຸປະຖຳຄ້ຳຊູຈາກລຸງບຸນຍັງ ແລະ ປ້າຄຳເມິງ ວໍລະຈິດ ພ້ອມດ້ວຍຍາດພີ່ນ້ອງຜູ້ໃຈບຸນທັງຫຼາຍທີ່ໄດ້ມາຊ່ວຍສ້າງສາພັດທະນາໂຮງຮຽນນີ້ ໃຫ້ກາຍເປັນໂຮງຮຽນຂັ້ນມັດທະຍົມສຶກສາສົມບູນຢ່າງຖາວອນ.

ຂ້າພະເຈົ້າ ຂໍໃຫ້ຄຳໝັ້ນສັນຍາວ່າ ຈະຕັ້ງໃຈສິດສອນນັກຮຽນ ຍົກຄຸນະພາບການສຶກສາໃນຂົງເຂດນີ້ໃຫ້ນັບມື້ກ້າວໜ້າ ເພື່ອສ້າງເຍົາວະຊົນຜູ້ສືບທອດທີ່ດີຂອງຊາດ ໃນອະນາຄົດ ແລະເສີມຂະຫຍາຍມູນເຊື້ອໂຮງຮຽນນີ້ໄວ້ໃຫ້ຜ່ອງໃສຕະຫຼອດໄປ.



ບັນດາພະນັກງານຂັ້ນນຳ ຂອງທຸກການຈັດຕັ້ງໃນເຂດຄັ້ງວຽງ
ເຂົ້າຮ່ວມປະຊຸມ ປະຈຳເດືອນ ທີ່ຫ້ອງຮຽນຂອງໂຮງຮຽນອິນແປງ



ບັນຍາກາດໃໝ່ ແລະປະສິດທິຜົນ

.....

ນາງ ປິ່ນມະນີທອງ ພິມມະສານ
ຄູສອນວິຊາພາສາລາວ - ວັນນະຄະດີ ຫ້ອງ ມ. 4.
ຮອງຈຸງານວິຊາການ, ຫົວໜ້າສະຫະພັນແມ່ຍິງ
ໂຮງຮຽນ ມ.ສ. ອິນແປງ.

ໂຮງຮຽນຂອງພວກເຮົາ ຢູ່ຫ່າງໄກຈາກຕົວເມືອງ ເປັນໂຮງຮຽນມູນ ຂອງຂັ້ນພື້ນຖານ ທີ່ຊາວບ້ານສ້າງຂຶ້ນດ້ວຍເຫື່ອແຮງຂອງຕົນເອງ ບໍ່ໄດ້ມາດຕະຖານ ບໍ່ແໜ້ນໜາ ການສິດສອນ-ຮ່ຳຮຽນຂອງຄູ ແລະນັກຮຽນ ກໍພົບຄວາມຫຍຸ້ງຍາກຫຼາຍດ້ານ. ມາເຖິງ ມື້ນີ້ ພວກເຮົາໄດ້ຮັບທຶນຊ່ວຍເຫຼືອ ຈາກຄອບຄົວລຸງ ບຸນຍັງ ວໍລະຈິດ ພ້ອມດ້ວຍ ຍາດພີ່ນ້ອງ ມາຊ່ວຍສ້າງໃຫ້ກາຍເປັນໂຮງຮຽນຖາວອນ.ອາຄານຮຽນໃໝ່ຄົງຈະໃຫ້ ບັນຍາກາດໃໝ່ ແລະຊ່ວຍອຳນວຍຜົນດີຫຼາຍຢ່າງໃນການຮຽນການສອນ.

ໃນນາມເປັນຄູສອນ ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄູອາຈານ-ນັກຮຽນສະແດງ ຄວາມຮູ້ບຸນຄຸນຢ່າງສູງສົ່ງມາຍັງ ລຸງບຸນຍັງ ແລະປ້າຄຳເມິງ ວໍລະຈິດ ພ້ອມດ້ວຍຍາດ ພີ່ນ້ອງ ແລະຜູ້ປະກອບທຶນ ແລະຂໍອວຍພອນໃຫ້ທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນ ສຳເລັດໃນໜ້າທີ່ວຽກງານ ແລະມີຄວາມຜາສຸກໃນຄອບຄົວ.





ຈະຮັກສາມູນເຊື້ອອັນດີງາມຂອງໂຮງຮຽນ

.....

ເພັດມະຄອນ ພິມມະສານ
ເລຂາຊາວໜຸ່ມໂຮງຮຽນ
ຮອງຫົວໜ້າໜ່ວຍງານ ກິດຈະການນັກຮຽນ.

ຂ້າພະເຈົ້າພາກພູມໃຈຫາອັນປຽບບ່ໄດ້ໃນ ເມື່ອລຸງ ບຸນຍັງ ວໍລະຈິດ ພ້ອມຍາດພີ່ນ້ອງໄດ້ອຸປະຖຳ ສ້າງອາຄານຮຽນຫຼັງໃໝ່ ໃຫ້ແກ່ໂຮງຮຽນຂອງພວກຂ້າພະເຈົ້າ ເຊິ່ງສະແດງໃຫ້ເຫັນ ຄວາມເປັນຫ່ວງເປັນໃຍຕໍ່ອະນາຄົດລູກຫຼານ ຂອງປະຊາຊົນບັນດາເຜົ່າ ເວົ້າສະເພາະແມ່ນລູກຫຼານຢູ່ໃນເຂດຄັງວຽງຂອງພວກເຮົາ.

ດັ່ງນັ້ນ ຂ້າພະເຈົ້າໃນນາມຄູສອນຜູ້ໜຶ່ງ ຈະພະຍາຍາມຮັກສາມູນເຊື້ອ ອັນດີງາມທີ່ທ່ານໃຫ້ຄວາມອົບອຸ່ນແກ່ລູກຫຼານ ຂອງພວກເຮົາແລະຂ້າພະເຈົ້າ ຈະພະຍາຍາມນຳເອົາວິຊາຄວາມຮູ້ ທີ່ຕົນເອງໄດ້ຮຽນມາຖ່າຍທອດໃຫ້ແກ່ນ້ອງນັກຮຽນຂອງພວກເຮົາ. ຂ້າພະເຈົ້າຂໍອວຍພອນໄຊອັນປະເສີດຈົ່ງເກີດມີ ແກ່ລຸງບຸນຍັງ ວໍລະຈິດ ພ້ອມຄອບຄົວ ແລະວົງຄະນາຍາດຂອງເພິ່ນຈົ່ງມີແຕ່ ອາຍຸວັນນະ ສຸຂະ ພະລະ ເທີ້ນ



ບັນດາພະນັກງານຂັ້ນນຳ ຂອງທຸກການຈັດຕັ້ງໃນເຂດຄັງວຽງ
ຖ່າຍຮູບ ຕໍ່ໜ້າໂຮງຮຽນອິນແປງ ຮ່ວມກັບຜູ້ຮັບຜິດຊອບຈັດພິມປຶ້ມ



ຍັງຮັບຜິດຊອບວຽກດ້ານການສຶກສາ

.....

ນາງ ວັນພອນ ນາທະວົງ
ຫົວໜ້າສະຫະພັນແມ່ຍິງບ້ານໝັຽງ

ຂ້າພະເຈົ້າ ກຳເນີດຈາກຄອບຄົວຊາວນາ ທີ່ບ້ານໝັຽງ ເຂດຄັງວຽງ ເມືອງແປກ ແຂວງຊຽງຂວາງເປັນລູກຂອງທ້າວ ຊຽງວົງ ແລະນາງ ບາງ ມີອ້າຍເອື້ອຍນ້ອງຄົງ 5 ຄົນຄື: ສ້າງຄອບ ຄົວໃນປີ 1983 ກັບທ້າວ ບຸນມາ ນາທະວົງ ມີລູກຮ່ວມກັນ 4 ຄົນ

ນັບແຕ່ປີ 1973 ຕົນເອງໄດ້ເຄື່ອນໄຫວພາລະໜ້າທີ່ປະກອບສ່ວນຮັບໃຊ້ຊາດ ຮັບໃຊ້ທ້ອງຖິ່ນ ດ້ວຍການເປັນຄູສອນຈົນເຖິງປີ 1988 ໃນຄອບຄົວໄດ້ມີຄວາມຫຍຸ້ງຍາກຈຶ່ງໄດ້ອອກຈາກຄູ ເຖິງປີ 1989 ໄດ້ຮັບການຄັດເລືອກຈາກເອື້ອຍນ້ອງໃຫ້ເປັນຫົວໜ້າສະຫະພັນແມ່ຍິງບ້ານຈົນເຖິງປັດຈຸບັນ. ພ້ອມນີ້ຍັງໄດ້ຮັບຜິດຊອບວຽກງານການສຶກສາ, ດ້ານວັດທະນະທຳ, ສຸຂະອະນາໄມ ແລະກຸ່ມອອມຊັບປະຢັດ ພັດທະນາຂອງບ້ານອີກດ້ວຍ. ບ້ານໝັຽງມີພົນລະເມືອງທັງໝົດ 226 ຄົນເປັນຍິງ 112 ຄົນ ສະມາຊິກສະຫະພັນແມ່ຍິງທັງໝົດ 34 ຄົນ ໃນນັ້ນມີສະມາຊິກພັກ 5 ສະຫາຍ.



ດີອົກດີໃຈຫຼາຍ

.....

ນາງ ຄຳສີ ວັນທະຈັກ
ຫົວໜ້າສະຫະພັນແມ່ຍິງເຂດພັດທະນາຄັງວຽງ

ຂ້າພະເຈົ້າເກີດ ແລະໃຫຍ່ຂຶ້ນ ທີ່ບ້ານໝ້ຽງ ເຂດຄັງວຽງ ເມືອງແປກ ແຂວງຊຽງຂວາງ ທີ່ຜ່ານມາເຂດຄັງວຽງ ຂອງພວກເຮົາພ້ອມ ອາຄານຮຽນຊັ້ນປະຖົມ-ມັດທະຍົມຕອນຕົ້ນອິນແປງ ເປັນໂຮງຮຽນທີ່ເກົ່າແກ່ ເຮັດແບບ ມູນເດີມ ຍັງບໍ່ທັນຖາວອນ ທັງຫ້ອງຮຽນກໍໜ້ອຍ ແຕ່ນັກຮຽນພັດມີຫຼາຍ ຍ້ອນແນວນັ້ນ ຈຶ່ງ ເຮັດໃຫ້ໂຮງຮຽນມີຄວາມແອອັດ ການຮ່ຳຮຽນບໍ່ເປັນລະບົບຕໍ່ເນື່ອງ ລູກຫຼານນັກຮຽນ ບາງຄົນ ບໍ່ໄດ້ຮັບການຮ່ຳຮຽນສະໝ່ຳສະເໝີ ການສິດສອນຂອງນາຍຄູ ກໍບໍ່ພຽງພໍ ຈຳເປັນຕ້ອງສອນຄວບ ນັກຮຽນບາງຄົນ ການຂຶ້ນຫ້ອງຍັງຂາດວັກຂາດຕອນ ມີຄວາມ ຫຍຸ້ງຍາກ ຍ້ອນຂາດທຶນຮອນໃນການກໍ່ສ້າງ. ຂ້າພະເຈົ້າ ຕາງໜ້າໃຫ້ເອື້ອຍນ້ອງແມ່ຍິງ ແລະລູກຫຼານຊາວເຂດຄັງວຽງ ຂໍສະແດງຄວາມຮູ້ບຸນຄຸນນຳ ລຸງ ບຸນຍັງ ກັບປ້າ ຄຳເມິງ ວໍລະຈິດ ທີ່ໄດ້ຊ່ວຍສ້າງສາພັດທະນາໂຮງຮຽນປະຖົມ - ມັດທະຍົມອິນແປງ ໃຫ້ຈະເລີນ ສີວິໄລກ້າວໜ້າ ພ້ອມທັງພັດທະນາກຸ່ມຄັງວຽງ ຂອງພວກເຮົາໃຫ້ກ້າວໜ້າເຂັ້ມແຂງ.





ພວກລູກຫຼານຈະໄດ້ຮ່ຳຮຽນສົມໃຈ

.....

ນາງ ຄຳແສງ ອຸດທະນີ
ປະທານສະຫະພັນແມ່ຍິງບ້ານໄຜ່ງຳ

ຂ້າພະເຈົ້າ ມີຄວາມດີໃຈຫຼາຍ ທີ່ລຸງ ບຸນຍັງ ແລະ ປ້າ ຄຳເມິງ ວໍລະຈິດ ໄດ້ມີ ຄ ວາມເປັນຫ່ວງເປັນໃຍຕໍ່ພວກເຮົາ ແລະໄດ້ມາຊ່ວຍພັດທະນາບ້ານເກີດເມືອງນອນ ໂດຍ ສະເພາະ ໄດ້ເຮັດໃຫ້ໂຮງຮຽນອິນແປງພວກເຮົາແຕ່ມື້ນັ້ນຈົນຮອດມື້ນີ້ໄດ້ຮັບການພັດ ທະນາເປັນກ້າວໆມາ. ພໍ່ແມ່ປະຊາຊົນກໍມີ ຄວາມອົບອຸ່ນຫຼາຍ. ພວກລູກຫຼານຈະໄດ້ຍູ ຖ່າງສຶກສາ ຮ່ຳຮຽນຕາມຄວາມມຸ່ງຫວັງຕັ້ງໃຈ.

ຂ້າພະເຈົ້າຂໍຂອບອົກຂອບໃຈ ລຸງບຸນຍັງ ແລະປ້າ ຄຳເມິງ ວໍລະຈິດ ທີ່ໄດ້ມາ ພັດທະນາໃຫ້ເຂດພວກເຮົາດີຂຶ້ນເລື້ອຍໆ. ຂໍອວຍພອນໃຫ້ ລຸງບຸນຍັງ ແລະ ປ້າ ຄຳເມິງ ວໍລະຈິດ ຈົ່ງມີຄວາມຜາສຸກ ອາຍຸໝັ້ນ ຂວັນຍືນຕະຫຼອດໄປ.





ບໍ່ລືມຄົນເກົ່າ

.....

ໂດຍ: ສາວພອນ

ຈົດໜຶ່ງ..ພາກພູມໃຈທີ່ໄດ້ ເຫັນຄົນເກົ່າກາຍມາ
ແຕ່ກໍ...ຫວນຫັນຄິດ ຊັ່ງຊາຫຼັງໜ້າ
ເລີຍເລົ່າ ຫາທາງເວັ້ນ ຫວັງຫຼົບໄປໃຫ້ພົ້ນຫ່າງ
ຕິຕ່ຳຕົນຜູ້ນ້ອຍ ບໍ່ຫານກ້າຊິພົບພານ ເພິ່ນເດ

ແຕ່ວ່ານາງຜູ້ນັ້ນ ພັດເບັດໃສ່ຫາມາ
ທັງເລົ່າວາຈາໄຂ ກ່າວຄວາມຄິດ້ອຍ
ເອ໊ອຍເອີຍ ສັງວ່າທຳແນວນັ້ນ ໜີໄກເວັ້ນຫ່າງ ນ້ອງນໍ ?
ຄົນຮັກແພງແຕ່ເກົ່າກີ່ ບໍ່ຄວນເວັ້ນຫຼີກຫາງ ເອ໊ອຍເອີຍ

ຫຼາຍສິບປີກ່ອນນີ້ ຕອນຮຽນແພດທຳອິດ
ອ້າຍເອ໊ອຍເຄີຍນຳພາ ສັ່ງສອນຄວາມຮູ້
ຄຸນສົມບັດພ້ອມ ຈັນຍາບັນຂອງແພດ
ການຕິດແທດຕັ້ງແຕ່ກີ່ ຍັງຈຳໝັ້ນບໍ່ລືມ ດອກນາ

ໂອ້ນ້ອງເອີຍ.. ບໍ່ແມ່ນຕັ້ງຫຼີກນ້ອງ ມັນແມ່ນຈົ່ງຈຸມຕົວ
ການພົວພັນຕອນຫຼັງ ພາກພູມມະໂນເອ໊ອຍ
ອັດທະຍາໄສ ໄມຕີນ້ອງ ເຕັ້ມໃຈຂໍຊົມຊື່ນ
ແພດປະຕິວັດ ຄົນປະຕິວັດທ່ຽງແທ້
ມີມະນຸດສຳພັນດັ່ງນ້ອງ ຂໍຍ້ອງຍົກສູງ ແທ້ເນີ



ไขความปิดสะพา ของอาจามพิม

.....

ເລົ່າໂດຍ: ພໍ່ເຖົ້ານາດອນ ຊຽງວັນນາ ພິມມະຈັກ
ບັນທຶກໂດຍ: ກົ່ງເດືອນ ເນດຕະວົງ

ພໍ່ເຖົ້າຊຽງວັນນາ ລູກຊາຍກົກອາດຍາເມືອງແພນ ປັດຈຸບັນອາຍຸ 88 ປີ ໄດ້ເລົ່າສູ່ຟັງວ່າ:

"ໃນຄາວພໍ່ເຖົ້າ ຍັງບວດເປັນຈ໋ອນ້ອຍ ອາຍຸປະມານ 12 ປີ ບ່ຳເພັນກຸສົນຢູ່ວັດ ບ້ານໝ້ຽງ, ມີພະອາຈານໃຫຍ່ຕົນໜຶ່ງ ຊື່ອາຈານ ພົມ ຄົນບ້ານລາວ-ໂພນທອງໄດ້ເວົ້າສູ່ຟັງ ພ້ອມກັບຈ໋ອ ບຸນທັນ ຈ໋ອ ບົວພັນ ແລະອີກຈ໋ອ ໜຶ່ງລືມຊື່ລາວແລ້ວ ຊຶ່ງເປັນຄົນບ້ານງ່ຳວ່າ: ***"ພວກລູກຫຼານ ຜູ້ຍັງໜຸ່ມນ້ອຍເອີຍໃຫ້ ຄອຍຕິດຕາມເບິ່ງໄປເນີ ໃນຍຸກຕໍ່ໄປພາຍໜ້າພຸ້ນ ປີໃດບໍ່ຮູ້ ຄົນເຮົາຈິມີຫູແກ້ວຕາທິບ ຜູ້ໃດມີບຸນອາຍຸໝັ້ນຍືນ ຈົ່ງຈິເຫັນ - ໜຶ່ງມ້າຈິອອກເຂົ້າ ? ສອງເສົາຈິອອກດອກ ? ສາມ ຈິຍົກແຂນສອກລົ້ມກັນ ?***

ພໍ່ເຖົ້າໄດ້ຕິດຕາມເບິ່ງບ້ານເມືອງມາແຕ່ນ້ອຍ ຈົນເຖິງດຽວນີ້ ຈົ່ງໄດ້ຕີບັນຫາຄ່ຳ ເວົ້າຂອງອາຈານພົມອອກ, ເບິ່ງແລ້ວກໍແມ່ນ:

1. ***"ມ້າອອກເຂົ້າ"*** ຄົນເຮົາໄປມາຫາສູ່ກັນໃນສະໄໝກ່ອນນັ້ນແມ່ນໃຊ້ມ້າ (ສັດ ບໍ່ມີເຂົາ) ເປັນພາຫະນະ. ແຕ່ຮອດປັດຈຸບັນນີ້ ໄປ-ມາທາງໃດ ຄົນກໍພາກັນຂີ່ ***ລົດຈັກ (ລົດຖີບ)*** ຊຶ່ງມີເຂົາເປັນພາຫະນະແທນມ້າ. ສ່ວນມ້າແທ້ໆນັ້ນ ກໍມະຫັບ ມະຫາຍໄປ ເກືອບບໍ່ມີ ແລ້ວ ມ້າສະໄໝນີ້ຈົ່ງເປັນມ້າເຫຼັກ ແລະມີເຂົາ.

2. ***"ເສົາອອກດອກ"*** ນັ້ນຄືຈິໝາຍຄວາມເຖິງເສົາໄຟຟ້າ ***ມີດອກໄຟຫ້ອຍ*** ນັ້ນແລ້ວ. ເພາະດຽວນີ້ບ້ານເມືອງ ມີເສົາໄຟຟ້າຍາຍໄປຮອດບ່ອນໃດ ກໍມີສີສັນຮຸ່ງເຮືອງ ສະຫວ່າງສະໄຫວໄປໝົດ. ເສົາອອກດອກແມ່ນເສົາໄຟຟ້າ ມີດອກໄຟນີ້ແຫຼະ ລ້ອງ ບ້ານໝ້ຽງນາດອນເຮົາຖ້າບໍ່ມີເຂີຍເມິງ ເອົາໄຟຟ້າເຂົ້າມາ, ລູກຫຼານຍັງຈິພາຍເປ້ແບກ ຂວານໄປ ເອົາແປກມາດັ່ງຈົນຮູດັ່ງດ່ຳເປັນສີ່ຢູ່ນີ້ແລ້ວ,ໃຫ້ລູກຫຼານຮູ້ບຸນຄຸນແລະ ຂອບໃຈ ນ່ຳເພີ່ນແດ່ເນີ.!.

3. ***"ຍົກສອກລົ້ມກັນ"*** ໃນຊຸ່ມ້ືນີ້ເຮົາສາມາດເຫັນຄົນຍົກສອກລົ້ມກັນຢູ່ເລ້ືອຍໆ ເຫັນແລ້ວ ກໍເປັນຕາຢາກຫ໋ວ ເບິ່ງເພິ່ນລົ້ມຜູ້ດຽວຢູ່ອຸ່ມໆອີ່ມໆ ມີບາງເທ່ືອກໍຫ໋ວຍຸ້ມໆ ແຍ້ມໆ...ບາດຫຍັບເຂົ້າໄປໃກ້ໆ ໂລດແມ່ນເພິ່ນລົ້ມກັນດ້ວຍ ***ໂທລະສັບມ້ືຖ.***

ໂອຍຈັ່ງແມ່ນມັນຖືກກັບຄ່ຳເວົ້າຂອງອາຈານພົມ ເອົາແທ້ ເອົາວ່າ!

ຖົງແດງ ອິນແປງ



....

ໂດຍ: ເພັດເມືອງພອນ

ຂໍອະນຸຍາດກ່ອນເວົ້າ ປະຫວັດເກົ່າຄົນພອນ
ເຄື່ອງໃຊ້ສອຍຫຼາຍແນວ ສະເພາະພວນນຳໃຊ້
ມີທັງຄົນຍູກັ້ງ ຖົງແດງພາຍໃສ່ບ່າ
ຍິງສາວນຸ່ງສິ້ນໝີ່ປ້ອງອ້ອຍ ຕີນສິ້ນກໍເລົ່າງາມ ແທ້ນາ

ບໍ່ໄດ້ລ່ວງບໍ່ໄດ້ຫ້ວນ ພໍດີເບິ່ງງາມຕາ
ການເວົ້າຈາສຽງຫວານ ອ່ອນໂຍນຍາມຕ້ານ
ຍາມເມື່ອໄປມາພ້ອມ ເຫັນກັນກໍຖາມຂ່າວ
ຄືວ່າລົ້ງແກວ່ນແທ້ ສະເໝີດ້ວມດັ່ງຄອບຄົວ

ຍາມແຂກລາກັບບ້ານ ຂອງຂວັນໄດ້ມີຝາກ
ຫຸບຫໍ່ເອົາຂອງທີ່ມີ ຢູ່ໃນເຮືອນຢ້າວ
ມີທັງໝາກເຜັດແຫ້ງ ຫົວຜັກທຽມເປັນເຟົ່າ (ມັດ)
ຫຼືຫໍ່ເຂົ້າສຸກພ້ອມໄຂ່ຕົ້ມ ເມືອຕ້ອນຜູ້ຢູ່ເຮືອນ ແທ້ນາ

ມາໃນຍຸກເປີດກວ້າງ ພົວພັນຮ່ວມເສດຖະກິດ
ມູນເຊື້ອອັນດີງາມ ຫຼາຍຄົນຍັງຮັກສາໄວ້
ໄດ້ໄປເຫັນມາແລ້ວ ອິນແປງງາມສະຫງ່າ
ຖົງແດງພາຍໃສ່ບ່າ ແລ້ວແລ່ນຊື້-ຂາຍສິນຄ້າ
ແນວນີ້ຈັ່ງແມ່ນງາມ ແທ້ນໍ!

ຂໍຮຽກຮ້ອງພີ່ນ້ອງ ທຸກພາກສ່ວນຊາວພວນ
ໃຫ້ສົ່ງເສີມກັນພາຍຖົງແດງ ແລະແຕ່ງເປັນສິນຄ້າ
ເຖິງລາຄາມັນຈະໜ້ອຍ ແຕ່ຄວາມໝາຍແສນຍິ່ງໃຫຍ່
ໃຫ້ລູກຫຼານນັກຮຽນຈົ່ງຮີບໃຊ້ ໃຫ້ແດງກ້ວທົ່ວຄັງ ນີ້ເນີ

ຂໍຊົມເຊີຍ ແລະຍົກຍ້ອງ ຊາວທ້ອງຖິ່ນຄັງຄາຍ
ຫຼາຍຄົນຍັງຮັກສາ ຮີດຄອງທີ່ດີໄວ້
ອະນຸລັກຖົງແດງໃຫ້ ຕິດພັນປະຫວັດສາດ ເຮົາເນີ
ໃຫ້ເປັນລິຂະສິດຂອງພີ່ນ້ອງ ພວນນີ້ຕະຫຼອດໄປ ແທ້ໄດ!



ພູສັນ + ໜໍ່ສັນ

.....

ໂດຍມາລີພອນ

ຖ້າຫາກຢືນຕໍ່ໜ້າ
ແຍງຫຼຽວສຸດສາຍຕາ
ແມ່ນພູສັນ ແລະພູຄ້ໍ
ມີຕຳນານກ່າວໄວ້

ພູສັນແມ່ນດ່ານດ້າວ
ພະພຸດທະເດີນທຸດົງມາ
ອັນວ່າເສືອສິງຮ້າຍ
ພາວະນາຮຽບຮ້ອຍ

ອາຫານພະພຸດທະເຈົ້າ
ກ່ອນຈະສັນເພີ່ນກໍຫັກ
ເພື່ອມະນຸດຈະໄດ້
ຫຼາຍປີກໍໄດ້

ຈາກນັ້ນຄົນໄປມາກໍໄດ້
ຈະເຮັດໜໍ່ເມົ່າ ເຜົ່າ ຫຼືແກງ
ດຽວນີ້ເປັນສິນຄ້າ
ໜໍ່ໄມ້ພັນພິເສດນີ້

ຈົນວ່າຄົນຊ່ຳເວົ້າ
ມີບາງຕອນບັນຍາຍ
ຈັກຈະມີ ຫຼືແຕ້ມ
ຝ່າຍຜູ້ຂຽນພໍຈື່ໄດ້

ອາຄານໃໝ່ໂຮງຮຽນອິນແປງ
ເມກອງຢູ່ເທິງນັ້ນ
ເປັນພູປະຫວັດສາດ
ດົນແລ້ວສືບຕໍ່ມາ

ພິເສດແດນສະຫງົບ
ນັ່ງພາວະນານ້ຳ
ໃນດົງບໍ່ມາຜ່ານ
ກໍສັນເຂົ້າຖືກຍາມ (ຕື່ມແຮງ)

ມີແຕ່ໜໍ່ນາງຜັກ
ປູກລົງດິນໄວ້
ຊົມໃຊ້ຕໍ່ໆ ໄປ
ຂະຫຍາຍກວ້າງທົ່ວພູ (ພູສັນນ້ອຍ-ໃຫຍ່)

ໄປເອົາໜໍ່ມາກິນ (ຫັກ ຫຼືຂຸດ)
ແຮ່ງແຊບນ້ຳຈິ້ງແທ້
ຂາຍລົງມາຮອດເມືອງເອກ (ວຽງຈັນ)
ມີແທ້ແຕ່ຢູ່ຄັ້ງ ພຸ້ນເນ້ (ຄັ້ງວຽງ)

ໃຫ້ເປັນກາບເປັນກອນ
ຮ່ຳມາເຖິງວັນນີ້
ເປັນຜະຫຍາໃຫ້ເກາະກ່າຍ
ຈະມາເວົ້າສູ່ຟັງ ຕື່ມເນີ

ເພິ່ນວ່າ: ຄົນບ້ານຮິ່ມ ສ່ວນຫຼາຍກໍຂາຍຕອງ
ຄົນບ້ານໜອງ ຫຼາຍຄົນກໍຂາຍຕໍ່
ອັນວ່າຂາຍໝາກຄໍ້ ແມ່ນບ້ານຫວດນາຕັນ
ຜູ້ໄດ້ຂາຍໜໍ່ສັນ ແມ່ນລາວ - ທອງ - ດອນ - ໝ້ຽງ
ບ້ານທີ່ຂາຍໝາກກ້ຽງ ແມ່ນບ້ານ ປຸ່ງ - ຄ້ຽວຽງ ... ວ່າຊັ້ນ

ດຽວນີ້ປ່າໜໍ່ສັນກໍໄດ້ ລາມອອກໄປໄກ
ຝາກພູສັນທາງເນີ (ໃນ) ຝ່າຍເມືອງຄຳພຸ້ນ
ປະຊາຊົນສອງເປີ້ນ ພູສັນໄດ້ນຳສິ່ງ
ເປັນຂອງຝາກ ແລະຕ້ອນ ຂາຍຊື້ອະເນກນອງ ພີ່ນ້ອງເອີຍ

ນີ້ແລ້ວ ພະພຸດທະເຈົ້າໄດ້ໃຫ້ ບັນດາມເກີດເງິນຄຳ
ຂໍໃຫ້ພາກັນນຳເອົາ ແລະມີວິທີຮັກສາພ້ອມ
ໃຫ້ຮັກສາສິ່ງແວດລ້ອມ ໃນເວລາເຂົ້າໄປປ່າ
ໃຫ້ອຸດົມສົມບູນຢູ່ເລື້ອຍ ສິນຄ້າຊິຄ່າສູງ ພີ່ນ້ອງເອີຍ

(ນີ້ແລ້ວເພິ່ນຈຶ່ງເອີ້ນວ່າ ພູສັນເທົ່າທຸກວັນນີ້)





ຂໍຂອບໃຈ ປ້າສົດ

.....

ກ໋ຽເດືອນ (ມະນີຄູນ)

ຖ໋ຽແດງນ້ອຍເປັນເອກະລັກອັນໜຶ່ງຂອງວັດທະນະທຳ
ພວນ ໃຫ້ເສີມຂະຫຍາຍແລະຮັກສາຢູ່ຫ້ອຍບ່າໄວ້ໃຫ້
ເພິ່ນຊ່າຢູ່ເລື້ອຍວ່າຄົນພາຍຖ໋ຽແດງນັ້ນ "ແມ່ນພວນ"

ຂໍສົ່ງສານນ້ອຍໆ
ເພື່ອສະແດງຄວາມຂອບໃຈ
ຖ໋ຽແດງເປັນສັນຍາໃຫ້
ຖ໋ຽທີ່ປ້າມອບໃຫ້

ຕົບແຕ່ງມາເປັນກອນ
ມອບຄືນເຖິງປ້າ
ໃຈພວນຮັກຮໍ່
ຈະຮັກສາໄວ້ລ່ຳແຍງ ປ້າເອີຍ

ກ່ອນຈະອອກຈາກບ້ານ
ພວກເຮົາພາກັນໄປ
ເຫັນໝູ່ຍ໋ງ-ຊາຍພ້ອມ
ເປັນເອກະລັກພື້ນບ້ານ

ທ້ອງຖິ່ນຄັງວຽງ
ລຽບຊົມສິນຄ້າ (ລາດອິນແປງ)
ພາຍຖ໋ຽແດງທີ່ມີຄ່າ
ໃຜກໍຮູ້ທົ່ວແດນ ພວນເອີຍ

ຂໍຂອບໃຈ ແມ່ປ້າ
ນັ້ນແມ່ສິມີພວນ
ພາກັນສືບສາວໄວ້
ວັດທະນະທຳເຜົ່າເຊື້ອ

ທີ່ຢິບຝາກຂອງຂວັນ
ຕ່ຳເອງທຸກເຮືອນຢ້າວ
ສິມີດີພີ້ນ້ອງຕ່ຳ
ໃຫ້ຍໍ່ຍ້ອງ ແລະສົ່ງເສີມ ໄດເນີ





ຊ່ອຍແຮງ

.....

ທ້າວເຫີນ ຂຸນພິທັກ
ພ້ອມດ້ວຍທີມງານຜູ້ຈັດທຳປຶ້ມອະນຸສອນ

ໂອນ໋ ເມືອງພວນ ລືຊື່ຊັ້ນ ຊາວພວນກັ່ນຄົນຂະຫຍັນ
ພົ້ນຜ່ານວັນສົງຄາມ ໄດ້ເລັ່ງມືເສີມສ້າງ
ຫວັງເພື່ອເມືອງຟຟື້ນ ຜືນດິນແດນໃໝ່
ໃຫ້ສຳຊົນຊາດຊັ້ນ ຫານກ້າສິບສະກຸນ ຊອບແລ້ວ
ຍິນຂ່າວ.. ຊາວຄັ້ງວຽງ ຟົດຟື້ນ ສ້າງກໍ່ສະຖາບັນ
ການສຶກສາຊຸມຊົນ ບ່ອນ"ອິນແປງ"ປັ້ນ
ໂຮມຮ່ວມທຶນສັນສ້າງ ມັດທະຍົມ ໃຫ້ສົມຊື່
ລືເລື່ອງພົ້ນພວກພ້ອງ ໃຜກໍ່ຍ້ອງວ່າດີ ແທ້ນາ
ສົມແລ້ວ ສົມວ່າ ມີຊື່ຊັ້ນ "ອິນແປງ" ລາດຄັ້ງວຽງ
ສົມວ່າ ດິນແດນພວນ ຮັ່ງມີ ຫານກ້າ
ສົມວ່າ ໃຈປະສົງສ້າງ ຄັ້ງວຽງໃຫ້ເຮືອງຮຸ່ງ
ສົມວ່າ ມີແມ່-ປ້າ ໃຈປະເສີດເລີດລ້ຳ
ພວກຫຼານຫຼ້າໄດ້ເພິ່ງບຸນ ເຈົ້າແລ້ວ
ທຸຣມນີ້ ເງິນຄຳມີເລັກນ້ອຍ ຂໍຊູຊ່ອຍ ທາງກະວີ ນິ້ນາ
ຂໍອາໄສການເຮັດ ແຕ່ງແປງໃຫ້ເປັນປຶ້ມ
ພໍຕື່ມແຕ້ມສົມຊ້ອນ ຊອນແຊມເສີມສົ່ງ
ຫວັງວ່າພໍຕື່ມແຕ້ມ ແຕ້ມຖ້ອຍຊ່ອຍແຮງ ພີ່ນ້ອງເອີຍ
ໂອນ໋ ! ຍາມເມື່ອ ຂຸຣມຂີດແຕ້ມ ປະພັນແຕ່ງຕາມການ ຂໍ້ມູນນັ້ນ
ວາດວ່າງເຕີມສີສັນ ໃສ່ໃນໃບເຈ້ຍ
ຮູບພາບຄັ້ງວຽງເວົ້ງ ເງົ້າງາມ ໃສສ່ອງ ຫຼາຍເດ
ປະຫວັດ ການກໍ່ກ່າວຍ້ອງ ເຫັນແລ້ວໄດ້ຊື່ນໃຈ ເຈົ້າເອີຍ
ຄອມພິວເຕີ ໜ່ວຍນ້ອຍ ຊູຊ່ອຍ ພໍເບົາແຮງ ຂ້ອຍນັ້ນ
ປັ້ນແຕ່ງ ເຕີມ "ອະນຸສອນ" ໃຫ້ອອກມາເປັນປຶ້ມ
ພິມປະຫວັດການໄວ້ "ອິນແປງ"ພໍໄດ້ອ່ານ ຫົວນີ້
ເຊີນເຍີ.. ເຊີນພວກພົ້ງພີ່ນ້ອງ ປອງຄົ້ນອ່ານດູ ແດ່ເນີ.



ເຊີນຊວນໃຊ້ຫ້ອງສະໝຸດໃນໂຮງຮຽນ

.....

ໂດຍ: ແສງຜາເມືອງ

ຄົນເຮົາ ຄັນບ່ອອກຈາກບ້ານ ບ່ເຫັນດ່ານແດນໄກ
ຖ້າໄດ້ໄປຄາວດຽວ ກໍເລົ່າຫຼົ່ງທາງຊ້ຳ
ດີແຕ່ໃຈຫຽວຄົ້ນ ຫາທາງຫຽວໃໝ່
ໄກທ່ໃດ ຄັນວ່າໃຈຮອດແລ້ວ ກໍເດີນດັ້ນດຸ່ງໄປ

ເໝືອນດັ່ງ ຝູງພວກນ້ອງ ບັນນາລັກຫໍສະໝຸດ
ສຸດສົ່ງເສີມງານຫຼັກ ໃຫ້ແພ່ຜາຍຂະຫຍາຍກວ້າງ
ຫວັງເພື່ອຊົນຊາວເຊື້ອ ສົນໃຈຮັກການອ່ານ
ສະແຫວງຄວາມຮອບຮູ້ ປັນຍາກວ້າງເລິດຄົ້ນ

ຄັນເມື່ອ ມີຫ້ອງສະໝຸດແລ້ວ ເອົາໃຈໃສ່ ບໍລິຫານ ແດ່ເນີ
ວອນວານຄູອາຈານ ໃຫ້ລ່ຳແລແຍງເຝົ້າ
ໂຮມຮ່ວມແຮງປະສານຊັ້ນ ການນຳທຸກພາກສ່ວນ
ເຊີນຊັກຊວນພວກນ້ອງ ເຂົ້າໄປຄົ້ນອ່ານຮຽນ

ອັນໜຶ່ງ ໃຫ້ພາກັນພ່ຳພ້ອມ ວາງລະບຽບຫຼັກການ
ເພື່ອໃຫ້ຍືນນານເຫິງ ຢູ່ຄຽງຄົງໝັ້ນ
ສົມວ່າສັນຫາໄວ້ ໃຫ້ພາກັນຂະຫຍັນອ່ານ ເອົາເນີ
ຂັບໄລ່ຄວາມກຽດຄ້ານ ປັນຍາແຈ້ງຊີ່ສ່ອງທາງ

ເມື່ອວ່າໄດ້ອ່ານປຶ້ມ ໃຫ້ຮັກຮ່ອມພຽນແພງ ແທ້ເນີ
ທັງເຫັນຄຸນຄົນຂຽນ ແຕ່ງແປງພິມໄວ້
ຢ່າໄດ້ທຳເປີະເປື້ອນ ມຸມມອມຂາດວິ່ນ
ເຫັນຮູບງາມ ວ່ານັ້ນ ຂໍນຳເຈົ້າຢ່າຈີກໄປ ນັ້ນນາ.



ເມືອຢາມເມືອງຊຽງ

.....

ຄຳຟອງ ເພັດລຸນນະວົງ

ຊຽງຂວາງເອີຍ ! ຍາມເມື່ອພາກຈາກເຈົ້າ ໄລຫ່າງໄກໜີ
ຫຼາຍສິບປີໄດ້ຫວນຄືນ ຊຶນຊົມເຫຼືອລົ້ນ
ມາເຫັນຊົນຊາວເຊື້ອ ເຄືອພວນຄະນາຍາດ
ຜູ້ອາດຫານເກັ່ງກ້າ ຍັງຫ້ວຍົ້ມຢູ່ຊູ່ຄົນ ແທ້ນໍ !

ແຕ່ເມື່ອມາຄິດຄົ້ນ ຄັ້ງກ່ອນຕອນຫຼັງ
ຄາວທີ່ຜີມານຍັງ ຍ່ຳຍີເມືອງບ້ານ
ຄາວນັ້ນຊາວຊຽງເສົ້າ ໄຟເຜົ່າມັດຈລາດ
ປະຫວັດສາດສາມກ້ຽງ ສູນສ້ຽງບ່ໃຫ້ເຫຼືອ

ຊີວິດ ແລະເລືອດເນື້ອ ຊາວຊຽງຖອກເທໄຫຼ
ຫົວໃຈຊາວຊຽງລຸກ ລວກລົ້ນໄຟຮ້ອນ
ລຸກຫານຊາວຊຽງໃຫ້ ໄລລາໄກຈາກ
ພາກພໍ່ຄົງແມ່ເຄົ້າ ເມືອງບ້ານທີ່ເພິ່ງພາ

ຫຼາຍສິບປີຜ່ານຟ້າ ຫຼາຍຫ່າຝົນທີ່ເທລົງ ກໍດາຍແລ້ວ
ແຕ່ລະເບີດຍັງເປັນຂຸມ ດ້ຳເດີມດາເຄົ້າ
ຂຸມແຄ້ນໃນໃຈເຈົ້າ ເຮົາຮາຊ່ຳບໍ່ວ່າ
ແສບຊົ່ວດົນຊົ່ວຟ້າ ບໍ່ສູນສົ້ນທໍ່ເມັດງາ ໄດ້ແລ້ວ

ແຄ້ນນີ້ຮັກສາໄວ້ ໃນຍຸກໃໝ່ເປັນພະລັງ
ເປັນແມ່ແຮງທ້າງຄວາມຄິດ ຍິ່ງຮັກແພງພົ້ງເຊື້ອ
ເຊື່ອໝັ້ນແນວທາງຊີ້ ນະໂຍບາຍພັກວາງອອກ
ຮູຈັກຜິດ ແລະຖືກຕ້ອງ ດີຮ້າຍແນນຢ່າງໃດ

ເຈັບນີ້ຮັກສາໄວ້ ພະລັງໃໝ່ການເວລາ
ຖອກເທລ້ຽງລ້ຽງລາ ໃຫ້ຮຸ່ງເຮືອງເມືອງບ້ານ
ໃຫ້ຮຸ່ງເຮືອງງາມເອ້ ດ້ັ່ງດອກຈອງ ແລະດອກຄາຍ ບານເຮື່ອ
ປະດັບສີໂອບເອື້ອ ຫອມກົ້ວກິ່ນລະອ້ອງ ນັ້ນເນີ
ເມືອງຊຽງເອີຍ !



ເຊີນມາຢາມເມືອງຊຽງ

.....

ຄຳອອນ ເພັດລຸນນະວົງ

ແຂວງຊຽງຂວາງເປັນທີ່ຕັ້ງ ປະຫວັດສາດລືຊາ
ຢູ່ໃນດິນແດນເໜືອ ບໍ່ເຊື່ອເມືອຢາມຢ້ຽມ
ອັນວ່າອຸນຫະພູມນັ້ນ ທຳມະດາບໍ່ຮ້ອນເຮັ່ງ
ລະດູໜາວມີໝອກຂຸ້ນ ຍາມແລ້ງກໍສະບາຍ ແທ້ເນີ

ເອກະລັກບົ່ງໄວ້ ພິເສດແມ່ນໄຫຫີນ
ມີຕຳນານຂານໄຂ ຊ່າລືແມ່ນເຈືອງສ້າງ
ຕັ້ງແຕ່ເປີ່ງປາງສູ້ ສະຫຼອງໄຊຊຸມມ່ວນ
ໄດ້ເຈາະໄຫຫີນໃສ່ເຫຼົ້າ ປາງນັ້ນເລົ່າມາ ວ່າຊັ້ນເດ

ຊຽງຂວາງຫວິດຫວ່າງມົ້ນ ພົ້ນຜ່ານສົງຄາມ ມາແລ້ວ
ແຕ່ວ່າ ໄຟສົງຄາມລຸກ ບໍ່ທັນໝົດສິ້ນ
ຜືນແຜ່ນດິນມີຮອຍແປ້ວ ຍາຍຢັ້ງຊຸມລະເບີດ
ບໍ່ອາດນັບອ່ານໄດ້ ຫຼາຍລົ້ນທົ່ວຊຽງ ພີ່ນ້ອງເອີຍ

ຊຽງຂວາງມີທົ່ງກວ້າງ ປ່າແປກສີຂຽວ
ຫຼຽວໄປຫາພູໃດກໍອອນຊອນ ເມື່ອລົມໂຊຍຍູ້
ປ່າແປກໂອບເອນຕ້ອງ ແລມອງຄະນຶງຮ່ຳ
ຄວາມຫຼັງໄດ້ຜ່ານພົ້ນ ແຕ່ໃຈຄົ້ນອ່າວຄະນຶງ ແທ້ນາ

ຊຽງຂວາງມີຊື່ໄວ້ ບາງຄົນວ່າເມືອງຊຽງ
ບາງກຸ່ມຄົນຂະໜານນາມ ວ່າເມືອງພວນແທ້
ຈະວ່າເມືອງຊຽງ ຫຼື ເມືອງພວນກໍໄດ້ ຊາວຊຽງຂວາງແວວຄຳ (Welcome)
ຂໍເຊື້ອເຊີນພີ່ນ້ອງ ໄປຢາມຢ້ຽມພວນ ແດ່ເນີ

ຊາວຊຽງຂວາງອອກປາກຕ້ານ ເວົ້າຊື່ບໍ່ມີນອນ ປານໃດເນີ
ແຕ່ຫົວໃຈຄົນພວນ ຫາກຊື່ຕົ໋ງຄົ໋ງໝັ້ນ
ເວົ້າແນວໃດໃຈແນວນັ້ນ ສຳຄັນບໍ່ຕົ໋ວະລ່າຍ
ຫົວໃຈໜັກແລະໃຫຍ່ກວ້າງ ທຽມເທົ້າທົ່ງໄຫ ພຸ້ນແລ້ວ

ການບຸ໋ງຖືວ່ານັ້ນ ເອກະລັກແມ່ຍິງພວນ
ໃນມືຖືຄັນຍູ ທີ່ສ້າງເອງຢູ່ຊຽງພີ້
ສວມເສື້ອຂາວແຂນບັ້ງ ຜົມດຳໆຄຳເກົ້າຫ່ຽງ
ຕີນຕຳແນະຕ່ຳສົ້ນມີ່ປ້ອງອ້ອຍ ຖົ໋ງແດງຫ້ອຍບ່າຍ່າງຍ້າຍ
ເດີນຜ້າຍຈັ່ງແມ່ນງາມ ແທ້ເດ

ອາຫານມີແຊບຊ້ອຍ ຫຼາຍເຍື່ອງຫຼາຍແນວ
ຈະຮັບປະທານແນວໃດ ກໍ່ສັ່ງຕາມໃຈໄດ້
ສິ່ງສຳຄັນບໍ່ຄວນລືມນັ້ນ ຝ້ຈານ ແລະນົກແອ່ນ
ບໍ່ແມ່ນຊວນໃຫ້ຊື້ ຊົມແລ້ວຈະຖືກໃຈ ດອກນາ

ໝາກໄມ້ຂອງພື້ນບ້ານ ຈອງ-ຄາຍແມ່ນຂອງເດີ່ມ
ໝາກໝັ້ນມີມາແຖມ ຕົ່ມເຕີ່ມທັງແຫ້ວ
ໝາກເຜັດແພງຂອງແຫ້ງ ໜໍ່ສັນ ແລະໂຕເມົ່າ
ເອົາເມືອຕ້ອນພີ່ນ້ອງ ທາງບ້ານກໍ່ແມ່ນດີ

ມີຫຼາຍສິ່ງເວົ້າບໍ່ຖ້ວນ ໃຫ້ໄປທ່ຽວຊົມເອົາ
ວັດທະນະທຳ ປະເພນີ ກໍ່ຮັ່ງມີມູນເຕົ້າ
ຄົນທັ້ງຫຼາຍພາກັນເຂົ້າ ນະມັດສະການພະເຈົ້າໃຫຍ່
ວັດເພຍວັດລືເລື່ອງແລ້ວ ສັນລະເສີນພ້ອມຊື່ນຊົມ

ເຊີນເຍີ ເຊີນທ່ານໄປທ່ຽວຫຼີ້ນ ຊົມທົ່ງໄຫຫີນ
ໄປເບິ່ງພູພຽງງາມ ປ່າແປກຂຽວຂຳຊ້ອງ
ຊາວເມືອງພວນຫວງແຫນບ້ານ ຮັກສາເມືອງຍອດຍິ່ງ
ສົ່ງຄາມຫວິດຫວ່າງມື້ ພ້ອມພ່ຳກັນກໍ່ສ້າງ
ເມືອງພວນພຸ້ນໃຫ້ຮຸ່ງເຮືອງ ແທ້ນາ

ປະຫວັດຫຍໍ້ ແລະການເຄື່ອນໄຫວ ຮັບໃຊ້ປະເທດຊາດ ໃນໄລຍະຕົ້ນ .....



ຄຳເມິງ ວໍລະຈິດ ແມ່ນລູກສາວ ຂອງພໍ່ ວັນນາ ແລະແມ່ ຫຸມມາ ກຳເນີດເກີດມາ ແລະເຕີບໃຫຍ່ໃນວົງແຂນຂອງພໍ່ແມ່ ທີ່ບ້ານຄັງວຽງ ເມືອງແປກ ແຂວງຊຽງຂວາງ, ມີເອື້ອຍ ນ້ອງຮ່ວມກັນທັງໝົດ 6 ຄົນ, ຍິງ 4 ຊາຍ 2 (ຊາຍສອງຄົນກໍຜ່ານຊີວິດ ທະຫານ ທຸກຄົນ)ຕອນຍັງນ້ອຍກໍໄດ້ຮັບຄວາມອົບອຸ່ນ ຈາກພໍ່ແມ່ພີ່ນ້ອງ ເປັນຄອບຄົວທີ່ມີຊີວິດ ຊີວາຕາມປະສາຂອງຄອບຄົວຊາວນາ ພໍຢູ່ພໍກິນ. ອ້ອມແຂນຂອງພໍ່ແມ່ໃຫ້ຄວາມຮັກ ຄວາມສັ່ງສອນທີ່ດີເອື້ອຍນ້ອງມີບັນຍາກາດຊີວິດທີ່ສົດໃສ,ຢອກໄຍໄລ່ແລ່ນຕາມທົ່ງຄັງ ເປັນພູນັ້ນ ສັນພູນີ້, ແຕ່ບ້ານປຸ່ງ - ສີຄູນ - ຄັງວຽງ ບ້ານທາດ... ນັ້ນຄືເຖົ່ອນຫຼົ້ມ ເຖົ່ອນ ນຳງົ້ວ ນຳຄວາຍຊ່ວຍພໍ່ແມ່, ລະດູເຮັດນາ ພໍ່ແມ່ພີ່ນ້ອງຊາວບ້ານ ກໍເຮັດນາເຮົ່າ ນາວານ ຫາຝຸ່ນໃສ່ນາ, ຕຶກປາ ຕຶກຂົ້ວະ(ຮວກ),ໄປນາເຮົ່າໆດຳນາ, ເຮົ່າບາຍຫຍ້ານາ, ເຮົ່າ ກ່ຽວເຂົ້າ, ເຮົ່າຕີເຂົ້າ ແລະເຮົ່າຂົນເຂົ້າຂຶ້ນເລົ້າ ຂຶ້ນເຍຍ,ວິຖີແຫ່ງຊີວິດຊາວນາ ຍັງຈົດຈຳ ແລະຈາລຶກໄວ້ໃນດວງໃຈຂອງເພິ່ນ.

ເມື່ອເຖິງໄວເຂົ້າໂຮງຮຽນ ພໍ່ແມ່ກໍໃຫ້ເຂົ້າຮຽນພ້ອມເອື້ອຍນ້ອງ ເພາະຢູ່ແປະໆ ບ້ານກໍມີໂຮງຮຽນອິນແປງແຫ່ງນີ້ແຫຼະ,ເຫັນຮຸ່ນຜູ້ໃຫຍ່ເພິ່ນຮຽນຕົນກໍແລ່ນໄປແລ່ນ ມາຈອບເບິ່ງ ຄິດຢາກຮຽນຄືເພິ່ນ ຄວາມຄິດຂອງຕົນກໍສອດຄ່ອງກັບຄວາມຫວັງ ຂອງ ພໍ່ແມ່ ແລະນ້າບ່າວ...

ບໍ່ແມ່ນຍ້ອງຕົນເອງເກີນໄປ, ຄວາມຈິງຕົນເອງກໍເປັນເດັກຄຳຮູ້, ຂະຫຍັນ, ຮຽນເກັ່ງ ຮຽນດີ ມີຄວາມເຂົ້າໃຈ ແລະ ຊົ່ງຈຳດີໆ 3 ປີທີ່ຮຽນ ປ1, ປ2, ປ3, ສາມນາຍ ຄູຄື: ຄູປ່ອງ, ຄູແກ້ວ, ຄູທົນ ຕ່າງຄົນກໍຢັ້ງຢືນວ່າ ນາງນີ້ຮຽນໄດ້ ຄວນສົ່ງເສີມຕໍ່, ນີ້ຄື ຄວາມພາກພູມໃຈແລະຄວາມເຄືອງໃຈຂອງພໍ່ແມ່ ແລະນ້າບ່າວນັບທັງຕົນເອງ ກໍຄິດ ຍາກ, ທັງຢາກຮຽນໄປຕໍ່ນຳຄູ ພວງ ຢູ່ບ້ານຄາຍ ກໍໄກ, ໝູ່ຄູ່ຈະຍ່າງໄປນຳພໍເປັນຄູ່ປາກ ຄູ່ລົມນຳທາງກໍບໍ່ມີ, ສຸດທ້າຍກໍຕັດສິນໃຈໄປຜູ້ດຽວ ສົມຄວາມຕັ້ງໃຈອີຫຼີ ອ້າຍຄູພວງ ກໍຢັ້ງຢືນແຕ່ມື້ນັ້ນມາວ່າອີຕົນເປັນຜູ້ນ້ອຍແມ່ຍິງຜູ້ດຽວມາຮຽນທັນເວລາ,ຄຸນສົມບັດດີ,



ຮຽນເກັ່ງ ກຳລັງໃຈຈາກພໍ່ແມ່ ນ້າບ່າວ ແລະ ເອື້ອຍນ້ອງທາງບ້ານ ບວກໃສ່ ຄວາມເອົາໃຈໃສ່ ແລະກຳລັງໃຈຈາກອ້າຍຄູ ກໍໄດ້ເພີ່ມໃຫ້ມີພະລັງ ເຊົ້າຍ່າງມາຮຽນ ແລງຍ່າງກັບບ້ານ 1 ປີ ກໍບໍ່ນານເກີນລໍ ການຮຽນຫ້ອງທີສອງນ້ອຍໃນປີຮຽນ 1962-63 ໄດ້ຜ່ານພົ້ນໄປດ້ວຍດີ.

ຍ້ອນບຸນຍາປາລະມີແນວໃດ ກໍບໍ່ຊ່າງວ່າ ເພາະຕົນເອງເກີດມາທ່າມກາງຄວາມອົບອຸ່ນໃນຄອບຄົວຕາມປະສາເດັກນ້ອຍຊົນນະບົດໄດ້ພຽງຊົ່ວຄາວດຽວ, ກໍເລີ່ມເຂົ້າສູ່ສົງຄາມ.ພໍເລີ່ມເປັນສາວນ້ອຍ,ກໍພໍດີຖືກກັບໄລຍະທີ່ແນວລາວຮັກຊາດມາປົດປ່ອຍເອົາແຂວງຊຽງຂວາງ ຈຶ່ງມີພະນັກງານ ທະຫານລົງກໍ່ສ້າງພື້ນຖານ ຢູ່ແຕ່ລະບ່ອນຕາມບາດກ້າວຂະຫຍາຍຕົວ ຂອງການປະຕິວັດ.ໃນຄອບຄົວຂອງຕົນ ກໍຄືຫົວບ້ານ ຫົວເມືອງ ກໍມີຜູ້ລົງມາໃກ້ຊິດຕິດແທດ ເປັນລູກຮັກຫຼານແພງ, ຊີ້ແຈງ ອະທິບາຍແນວທາງນະໂຍບາຍຕ່າງໆ ຂອງແນວລາວຮັກຊາດ ເພື່ອປຸກລະດົມປະຊາຊົນເຂົ້າຮ່ວມການປະຕິວັດໃຫ້ນັບມື້ນັບຫຼາຍ...ໃນໄລຍະນີ້ຕົນເອງກໍເປັນ ສິລະປະຍຸວັນນະລີ ໄດ້ໄປສະແດງວັນນະຄະດີໂດຍມີການຟ້ອນອ້ອມກອງຫົ້ວກອງຟືນ ຮ່ວມກັບຊາວບ້ານ ແລະ ພະນັກງານທະຫານທີ່ລົງພື້ນຖານໃນເຂດນັ້ນ (ກອງພັນທີ 2).

ຜົນຂອງການອະທິບາຍ ຊີ້ແຈງນະໂຍບາຍຕ່າງໆນັ້ນສອດຄ່ອງກັບອຸດົມການທີ່ປະຊາຊົນລາວກໍຄືຄອບຄົວພວກຂ້າພະເຈົ້າແມ່ນເປົ້າໝາຍອັນດຽວກັນ, ພໍ່ແມ່ຈຶ່ງບອກວ່າໄປຮຽນກໍຫຍຸ້ງຍາກ ບ້ານເມືອງກໍບໍ່ຄ່ອຍສະຫງົບປານໃດ ອັນໜຶ່ງລູກກໍເປັນແມ່ຍິງໄປມາກໍໄກ ພໍ່ແມ່ກໍເປັນຫ່ວງ ພາສາຝຣັ່ງກໍພໍອ່ານອອກຂຽນໄດ້ໄປຮຽນແພດຮຽນໝໍຄືຈະໄດ້ຢູ່ດອກ...

ແພດເປັນຜູ້ປະຄັບປະຄອງ, ທຸກສິ່ງທຸກຢ່າງໃຫ້ມີຄວາມສະດວກ ແລະປອດໄພ ຊີວິດປະຈຳວັນກໍເປັນແນວນີ້ແລ້ວ ໄລຍະນີ້ໂຈນອາກາດອາເມລິກາ ຍິ່ງເພີ່ມທະວີການຖິ້ມລະເບີດໃສ່ທຸກແຫ່ງທີ່ເຂົາສົງໄສວ່າມີຜູ້ຄົນອາໄສຢູ່...ຄະນະອຳນວຍການໂຮງໝໍເວລານັ້ນ ມີອ້າຍອຸ້ຍ, ອ້າຍທອງໄຫຼ ໆລໆ ເພິ່ນໄດ້ເພີ່ມຄວາມເອົາໃຈໃສ່ຕິດຕາມສະພາບ ແລະໃກ້ຊິດຕິດແທດ ແນະນຳແພດໃຫ້ເພີ່ມສະຕິລະວັງຕົວ ແລະເພີ່ມຄວາມເອົາໃຈໃສ່ ເບິ່ງແຍງຄົນເຈັບໃຫ້ຫາຍຈາກອາການເຈັບ ແລະ ມີຄວາມປອດໄພໃນທຸກດ້ານ...

ຂ້ອຍເອງ ພ້ອມແພດທຸກຄົນ ຕ່າງກໍປະຕິຍານ ຂານຮັບດ້ວຍຄວາມຈິງໃຈ ແລະເປັນສຽງດຽວກັນວ່າ ຂໍຮັບໃຊ້ໜ້າທີ່ດ້ວຍຄວາມ ຈົງຮັກພັກດີ, ຖ້າຈະຕາຍກໍຂໍຕາຍກອດຄົນເຈັບເພາະຄົນເຈັບທຸກຄົນເຂົາກໍບາດເຈັບຍ້ອນສູ້ຮົບປົກປັກຮັກສາປະເທດຊາດ, ຮັກຄົນເຈັບກໍຄືຮັກປະເທດຊາດນີ້ແລ້ວ !!!. (ນີ້ແມ່ນອຸດົມການຂອງແພດປະຕິວັດທີ່ພວກຂ້ອຍເຊີດຊູ).

ສ່ວນຕອນຕໍ່ໆໄປ ຈະພະຍາຍາມຫາໂອກາດ ເພື່ອບັນທຶກໄວ້ໃຫ້ແກ່ສັງຄົມໄດ້ພິສູດວ່າລູກສາວເມືອງພວນຄົນນີ້ມີຜົນງານທີ່ເປັນຮູບປະທຳໜ້ອຍຫຼາຍສຳໃດໄວ້ປະດັບເຂົ້າໃນປຶ້ມປະຫວັດສາດຂອງແຂວງຊຽງຂວາງ ໃຫ້ມີສີສັນຈາກຜົນງານຕົວຈິງ ຄົນຈິງ ສຽງຈິງໄວ້, ເປັນດອກໝັ້ນ ດອກຄາຍສະຫຼັບສີໃຫ້ຜືນແຜ່ນດິນພວນເຮົາ...









ຄຳເຫັນຂອງຫົວໜ້າ ຄະນະຈັດພິມປຶ້ມອະນຸສອນ

.....

ຄຳອອນ ເພັດດາວເຮືອງ

ໃນໂອກາດທີ່ໄດ້ຮ່ວມສະເຫຼີມສະຫຼອງ ວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 55 ປີ ຢູ່ສູນຮ່ວມມື ແລະການຝຶກອົບຮົມສາກົນ(ITCT) ທີ່ຫຼັກ 5 ນະຄອນຫຼວງວຽງຈັນ,ພາຍຫຼັງພິທີການໄດ້ສິ້ນສຸດລົງ ແລະການຖ່າຍຮູບໄວ້ເປັນທີ່ລະນຶກກັບທ່ານຜູ້ນຳຜ່ານໄປແລ້ວ, ເຈົ້າພາບກັບຜູ້ຂຽນກໍໄດ້ຍາດເວລາຫາລືກັນກ່ຽວກັບການຈັດພິມປຶ້ມອະນຸສອນເຫຼັ້ມນີ້ວ່າ ຄວນຈະເຮັດແນວໃດ, ເພິ່ນໄດ້ທາບທາມ ແລະຖາມຄືນວ່າ ຈະມີເວລາບໍ່ ? ຈະເຮັດຈັກ 20-30 ໜ້າຈະໄດ້ບໍ່ ? ບໍ່ມີໃຜດອກທີ່ຈະປະຕິເສດຄຳຖາມ ທີ່ເປັນກັນເອງແບບນີ້ໄດ້, ເພາະຢາກຮ່ວມຮັບໃຊ້ວຽກງານນີ້ມາຕັ້ງແຕ່ດົນ.

ຈາກນັ້ນ ສອງເອື້ອຍນ້ອງ ກໍໄດ້ໄປຄົ້ນຄວ້າເບິ່ງຮູບທີ່ກ່ຽວຂ້ອງ ແລະຕິດພັນກັບວຽກງານ ແລະທ້ອງຖິ່ນ. ຮູບຫຼາຍໆແຜ່ນໄດ້ຈູງໃຈໃຫ້ຜູ້ຂຽນຕ້ອງສະເໜີຄຳເຫັນນຳເພິ່ນຄືນວ່າຈະເຮັດ 20-30 ໜ້າເຫັນວ່າໜ້ອຍ ຫຼືວ່າງ່າຍເກີນໄປບໍ່ ? ຄວາມຈິງເພິ່ນເປັນຄົນທຳມະດາໆບໍ່ຖືຕົນຖືໂຕ ແລະບໍ່ຢາກໃຫ້ຜູ້ອື່ນ ມີຄວາມລຳບາກ ຍາກຊານຳທັງທັງທີ່ຜົນງານໃນການຊ່ວຍສ້າງໂຮງຮຽນທີ່ເລົ່າໂດຍຫຍໍ້ຂອງເພິ່ນນັ້ນແມ່ນຕົວຈິງ ແລະຫຼວງຫຼາຍເປັນຕົ້ນວ່າ: ສ້າງອາຄານຮຽນມາດຕະຖານ ເພື່ອຮອງຮັບລູກຫຼານຮຽນຊັ້ນມັດທະຍົມສົມບູນ ຊຶ່ງປະກອບດ້ວຍຫ້ອງສະໝຸດ, ຫ້ອງການຄູ, ສ້າງສະໜາມກິລາມາດຕະຖານສົມຄວນ ປັບປຸງອາຄານຮຽນຫຼັງເກົ່າ ທີ່ເປ່ເພ ປວກກິນ ແລະຊຸດໂຊມ ໃຫ້ຢູ່ໃນສະພາບໃຊ້ການໄດ້ດີ, <u>ພິເສດ</u>: ໃນປີ 2004 ກໍຍັງໄດ້ສ້າງອາຄານຮຽນຊັ້ນມັດທະຍົມຕົ້ນດ້ວຍທຶນພາຍໃນຄອບຄົວລວມມູນຄ່າ 400 ກວ່າລ້ານກີບ.

ຍ້ອນເຫັນຜົນງານທີ່ຫຼວງຫຼາຍຄືຂ້າງເທິງນີ້ ຕົນເອງຈຶ່ງຂໍອະນຸຍາດ ປະກອບຄຳເຫັນວ່າ: ປຶ້ມອະນຸສອນເຫຼັ້ມນີ້ ຈະມີຄຸນຄ່າທັງຕໍ່ໂຮງຮຽນ ຕໍ່ຊຸມຊົນ ແລະຜູ້ອ່ານຫຼາຍ ເພາະເປັນແຫຼ່ງສະສົມຂໍ້ມູນອັນເປັນປະຫວັດ ແລະມູນເຊື້ອຂອງໂຮງຮຽນ ລວມທັງຄູອາຈານ ແລະລູກຫຼານ ຜູ້ເປັນນັກຮຽນເກົ່າຂອງໂຮງຮຽນອິນແປງ. ຄົນຍຸກນີ້ຫຼືຍຸກໃໝ່ກໍຈະໄດ້ນຳໃຊ້ເຂົ້າໃນການຄົ້ນຄວ້າຜັນຂະຫຍາຍ. ຜູ້ຂຽນຈຶ່ງຂໍອະນຸຍາດນຳເພິ່ນດ້ານຈຳນວນໜ້າ ປະກອບເນື້ອໃນ ແລະ ຮູບພາບຂຶ້ນເປັນ 70-80 ໜ້າກວ່າໆຈະໄດ້ບໍ່ ? ເພິ່ນກໍເວົ້າຄືນວ່າ "ຈະເອົາຫຍັງມາເວົ້າໃຫ້ເຕັມ ຫຼາຍໜ້າປານນີ້ ?"



ຕົນເອງກໍຕອບເພິ່ນວ່າ: ບ່ຍາກ, ບ່ແມ່ນເຮົາເວົ້າຜູ້ດຽວ, ປຶ້ມນີ້ໃຫ້ມີຫຼາຍພາກສ່ວນໄດ້ເຂົ້າຮ່ວມ ສະຕິປັນຍາລວມ ໃນສະໂມສອນປຶ້ມນ້ອຍຫົວນີ້ ຂໍແຕ່ນ້ອງໃຫ້ເວລາ, ຂໍໃຫ້ຊ່ວຍປະສານງານກັບການຈັດຕັ້ງ ບາງພາກສ່ວນ ຫຼືຂໍອະນຸຍາດໃຫ້ໄດ້ພົວພັນບ່ອນໃດ ບ່ອນໜຶ່ງ ຈະຊ່ວຍເຮັດໃຫ້ປຶ້ມນີ້ມີຄຸນຄ່າສູງຂຶ້ນ. ເພິ່ນກໍຕອບຕົກລົງເຫັນດີ.

ຈາກນັ້ນ ກໍເລີ່ມປະສານງານ ແບບຄອບຄົວ ກັບນ້ອງນຸ່ງ ຜູ້ເປັນວິຊາການ ແລະ ມີປະສົບການ (ຊຳນານງານ) ໃນການຂຽນ ອອກແບບຈັດໜ້າ ແລະພິມ ແຕ່ລະຄົນ ກໍຕອບຮັບດ້ວຍຄວາມເຕັມໃຈ ວ່າຈະຂໍອຸທິດສະຕິປັນຍາ ແລະສີມືອັນເລັກນ້ອຍຂອງຕົນ ມອບແດ່ປ້າ ຄຳເມິງ ວໍລິຈິດ ຜູ້ທີ່ເຂົາເຈົ້າຮັບຮູ້ຄຸນງາມ ຄວາມດີ ແລະອັດທະຍາໄສໄມຕີ ຂອງເພິ່ນມາກ່ອນ ໃນຄຳຊ່ຳລືຂອງພີ່ນ້ອງຊາວສະຫວັນນະເຂດເວົ້າສະເພາະ, ໄດ້ຮູ້ ໄດ້ເຫັນໃນລາຍການແມ່ຍິງທີ່ດີ ມີຜົນງານ ແລະເປັນແບບຢ່າງ ໃນການຕໍ່ສູ້ຕ້ານສັດຕູ ກໍຄື ຕໍ່ສູ້ເພື່ອບົດບາດຍິງ-ຊາຍ, ຕໍ່ສູ້ເພື່ອຫຼຸດພົ້ນຈາກການດ້ອຍໂອກາດ ໃນໂທລະພາບ ວິທະຍຸ ໜັງສືພິມ ແລະອື່ນໆ.

ດັ່ງນັ້ນ ການປະຕິບັດໜ້າທີ່ ຈຶ່ງໄດ້ເລີ່ມຕົ້ນຂຶ້ນ ດ້ວຍສັນຍາທາງດ້ານໄມຕີຈິດ ນັບແຕ່ວັນທີ 20/07/2010 ເປັນຕົ້ນມາ. ການປະສານງານຂອງເຈົ້າພາບ ແລະຕົນເອງ ຕ່າງກໍໄດ້ຮັບສຽງຕອບຮັບດ້ວຍກຳລັງໃຈທີ່ດີ ດ້ວຍການໂທລະສັບມາບອກມື້ນັ້ນມື້ນີ້ ຈະສົ່ງບົດ ແລະຮູບມາໃຫ້, ການສະໜອງຮູບ ແລະບົດກໍມີອຸດົມສົມບູນ ທີ່ແຕ່ລະຄົນ ໄດ້ຫວນຄືນຄວາມຈິງທີ່ໄດ້ຜ່ານຈາກການຮັບຮູ້, ການສອນ, ການຮຽນ, ການສະໝັກໃຈ ປະກອບສ່ວນ ແລະອື່ນໆ.

ແຕ່ໜ້າເສຍດາຍ ທີ່ປຶ້ມຫົວນີ້ ມີຈຳນວນໜ້າຈຳກັດ, ຈຶ່ງຂໍອະໄພນຳເຈົ້າຂອງບົດ ທີ່ຈຳເປັນຕ້ອງຕັດຮອນບາງບ່ອນ ຍ້ອນບ່ສາມາດລົງພິມຈົນໝົດຄົບຖ້ວນໄດ້. ບາງບົດ ຜູ້ຮິບໂຮມບ່ທັນມີຂໍ້ມູນພຽງພໍ (ແຕ່ມີເປົ້າໝາຍສຳຄັນ) ຈຶ່ງໄດ້ໂທຖາມ, ສຳພາດທາງໂທລະສັບແຕ່ລະຄັ້ງກໍດົນພໍສົມຄວນ ຈົນໂທລະສັບບອກວ່າ ກະລຸນາເຕີມມູນຄ່າໂທ,

ເພາະມູນຄ່າໂທຂອງທ່ານ ບໍ່ສາມາດໂທອອກໄດ້. ບາງຄັ້ງກໍເຊົາເມື່ອຍແລ້ວຫົວຂວັນຕົນເອງ, ຕັ້ງຫຼັກໃໝ່ແລ້ວຈຶ່ງໂທໃຫ້ປາຍທາງໂທກັບຊ່ວຍແດ່ ເພາະມີວຽກຕ້ອງການຈຳເປັນ. ຄິດໄປມາກໍເປັນຕາຢາກຫົວ ແຕ່ກໍພາກພູມໃຈທີ່ໄດ້ນຳໃຊ້ເຕັກໂນໂລຍີ (Teehnology) ໃຫ້ມີປະໂຫຍດໃນເວລາຕ້ອງການ.

ເຈົ້າຂອງບົດ ອາດຈະຍິ້ມຫົວ ເອົາເອງເມື່ອໄດ້ອ່ານບົດຂອງຕົນ, ຫຼືຖ້າຂັດເຄືອງໃຈ ກໍຂໍອະໄພຊຶ່ງກັນ ແລະກັນນໍ ເພາະງານນີ້ຕ່າງຄົນ ກໍຕ່າງຢາກໃຫ້ປຶ້ມອະນຸສອນເຫຼັ້ມນີ້ອອກມາດ້ວຍດີ, ແຕ່ວິທີການອາດຈະເປັນການສ້າງຄວາມລຳຄານແກ່ຜູ້ມີວຽກຫຼາຍກໍເປັນໄດ້ ຈຶ່ງຂໍອະໄພມານະທີ່ນີ້ອີກເທື່ອໜຶ່ງ. ບາງບົດ ບາງທ່ານ ກໍໂທບອກ ວ່າຢາກເວົ້າແບບນນັ້ນ ແບບນີ້ໆແຕ່ກໍຍັງດີ, ສິ່ງທີ່ເພີ່ນໂທມາກໍເປັນຂໍ້ມູນພື້ນຖານ ເພື່ອຂະຫຍາຍຄວາມເພີ່ມເຕີມບາງເລັກນ້ອຍ ເພີ່ນກໍມອບສິດໃຫ້ວ່າຂຽນຕາງແດ່ເນີ ! ແຕ່ກໍຍັງດີທີ່ໄດ້ກິນຢາຕາງຄົນໄຂ້ ຈະຖືກໃຈ ຫຼືບໍ່ຕຳນິຕິຊົມເອົາເນີ. ແຕ່ເລື່ອງຮູບນີ້ຕິ ຈະເອົາຮູບໃຜໃສ່ແທນໃຜກໍຄົງຈະບໍ່ເປັນ, ຈົນເຖິງເວລານາທີສຸດທ້າຍ ຈຶ່ງໄດ້ຄົ້ນຄວ້າ ຊອກຫາ ຈາກຫຼາຍໆບ່ອນນຳຫຼາຍຄົນ, ບາງຮູບກໍໄດ້ສະແກນເອົາ ບາງຮູບກໍຕັດ, ບາງຮູບກໍຕໍ່ ບາງຮູບກໍຫຍໍ້ ບາງຮູບກໍຂະຫຍາຍ ຖ້າຮູບບໍ່ງາມ ສົມກັບເຈົ້າຂອງ ກໍຂໍອະໄພອີກເທື່ອໜຶ່ງ.



ດີແຕ່ຖືກຕົນ ເອງຜູ້ມັກຫຼິ້ນຮູບ ເພາະວ່າວຽກງານຂີດຂຽນ ຖ່າຍຮູບ ອັດຮູບ ແລະອື່ນໆແມ່ນວິຊາ ອາຊີບທີ່ແນ່ນອນຂອງຕົນທີ່ໄດ້ຮຽນມາຈາກໂຮງຮຽນສື່ມວນຊົນ ໃນປີ1985-86 ແລະຕໍ່ມາກໍມີໂອກາດໄດ້ໄປທັດສະນະສຶກສາຕົວຈິງ ເພື່ອພົບປະແລກປ່ຽນ ບົດຮຽນກັບສະມາຄົມນັກປະພັນບັນດາປະເທດສັງຄົມນິຍົມ ຢູ່ເອເຣວັນ ເມືອງຫຼວງຂອງ ລັດອາກເມເນີ ແຫ່ງອະດີດສະຫະພາບໂຊວຽດ...

ຫັນມາສັງລວມໃນປຶ້ມນ້ອຍໆອະນຸສອນຂອງພວກເຮົາລວມມີ 92 ໜ້າ, ຈຳນວນ 34 ບົດກາບກອນມີ 13 ເນື້ອໃນທັງໝົດລ້ວນ ແຕ່ມີຄຸນຄ່າປະກອບໃຫ້ປຶ້ມຫົວ ນີ້ມີຄວາມອຸດົມສົມບູນດ້ວຍຫຼາຍເນື້ອໃນ ທີ່ມີສີສັນ ແລະກ່ຽວພັນເຖິງມູນເຊື້ອໂຮງຮຽນ ອິນແປງແຫ່ງນີ້ທຸກໆບົດ.

ພວກເຮົາຜູ້ຮິບໂຮມຂຽນປັບປຸງຜູ້ອອກແບບ ແລະກວດແກ້ພ້ອມດ້ວຍຄະນະ ບັນນາທິການ ແລະພະນັກງານວິຊາການຂໍສະແດງຄວາມຂອບອົກຂອບໃຈ ນຳການ ຊີ້ນຳ ເອົາໃຈໃສ່ໃກ້ຊິດຕິດແທດ ແລະໃຫ້ໂອກາດແກ່ພວກເຮົາ. ຂໍຂອບໃຈນຳທຸກໆທ່ານ ທີ່ໄດ້ໃຫ້ຄວາມຮ່ວມໄມ້ຮ່ວມມື ເພື່ອໃຫ້ປຶ້ມອະນຸສອນເຫຼັ້ມນີ້ອອກມາທັນເວລາ.

ຖ້າມີຂໍ້ຜິດພາດປະການໃດ ຄະນະຈັດທຳ ພວກເຮົາຂໍອະໄພມານະທີ່ນີ້ດ້ວຍ.



